ພີ່ນ້ອງທີ່ຮັກ : ພຣະຄຳພີ ກໍຄື ຂໍ້ຄວາມຂ່າວສານຈາກພຣະເຈົ້າເຖິງເຮົາທັງຫຼາຍໃນໂລກນີ້, ຄົນສ່ວນໃຫຍ່ຈະຮູ້ສຶກວ່າພຣະຄຳພີເປັນເໝືອນຮູບຕໍ່ຂະໜາດໃຫຍ່; ພີ່ນ້ອງເຄີຍຕໍ່ຮູບພວກນັ້ນຈັກເທື່ອໜຶ່ງຫຼືບໍ? ຄືກ່ອນອື່ນຈະຕ້ອງຫາສິ້ນທີ່ເປັນມູມຂອງຮູບທັງສີ່ໃຫ້ໄດ້ກ່ອນ ແລ້ວກໍຫາສິ້ນທີ່ເປັນຂອບຮູບເອົາມາຕໍ່ກັນເປັນຂອບ, ຕໍ່ຈາກນັ້ນກໍຄ່ອຍໆຕໍ່ຮູບເຂົ້າກັນ ພາບກໍຈະຄ່ອຍໆປາກົດອອກມາ ເມື່ອໃສ່ສິ້ນສຸດທ້າຍລົງໄປກໍໄດ້ພາບທີ່ສົມບູນ.

ບົດຮຽນພຣະຄຳພີຈາກຍຸກສ້າງໂລກເຖິງຊີວິດພຣະເຢຊູຄຣິດຊຸດນີ້ມີສີ່ເຫຼັ້ມ, ເຫຼັ້ມທຳອິດເປັນເໝືອນສິ້ນສ່ວນທີ່ເປັນມູມຮູບຂອງພຣະຄຳພີ, ເຫຼັ້ມທີ່ສອງເປັນຂອບ ສ່ວນເຫຼັ້ມທີ່ສາມແລະສີ່ເປັນສິ້ນສ່ວນທີ່ຕໍ່ເປັນຮູບພາບໃນຂອບຊຶ່ງຈະເປັນພາບທີ່ງົດງາມຂອງພຣະຄຸນແລະຄວາມເມດຕາຂອງພຣະເຈົ້າ.

ທ້າຍສຸດຂອງປຶ້ມເຫຼັ້ມນີ້ຈະມີຄຳຖາມສັ້ນໆຂອງບົດຮຽນແຕ່ລະບົດ ເພື່ອຊ່ວຍໃຫ້ພວກເຮົາເຂົ້າໃຈເລື່ອງທີ່ອ່ານແຈ້ງຂຶ້ນ. ຂໍແນະນຳໃຫ້ອ່ານຄຳຖາມເຫຼົ່ານັ້ນກ່ອນ ແລ້ວຈິ່ງໄປອ່ານເນື້ອເລື່ອງແລະເມື່ອອ່ານເນື້ອເລື່ອງສຳເລັດແລ້ວ ກໍກັບມາຕອບຄຳຖາມເລີຍ ຈະດີກວ່າ.

ເມື່ອອ່ານໜັງສືເຫຼັ້ມນີ້ ແລະຕອບຄຳຖາມຄົບໝົດທຸກບົດແລ້ວໃຫ້ພີ່ນ້ອງຄ່ອຍໆຈີກໜ້າທີ່ເປັນຄຳຖາມເຫຼົ່ານັ້ນໃສ່ຊອງຕິດສະແຕມ ແລ້ວສົ່ງກັບມາຕາມທີ່ຢູ່ທີ່ແຈ້ງໄວ້, ສ່ວນໜັງສືນັ້ນພວກເຮົາຂໍມອບເປັນຂອງຂວັນໃຫ້ແກ່ພີ່ນ້ອງເກັບໄວ້ໄດ້ເລີຍແລະອີກປະມານສອງ-ສາມອາທິດ ພວກເຮົາຈະສົ່ງເຫຼັ້ມຕໍ່ໄປໃຫ້.

ຖ້າມີບັນຫາໃດທີ່ບໍ່ເຂົ້າໃຈ ຢາກໃຫ້ພວກເຮົາຊ່ວຍເຫຼືອ ກະລຸນາຂຽນຄຳຖາມສົ່ງມາຖາມໄດ້ຕາມທີ່ຢູ່ຂ້າງລຸ່ມນີ້:

## ຄຳຖາມບົດທີ 12

1. ພຣະເຈົ້າຊົງເຊື່ອຫຼືບໍ່ວ່າ ພວກອິດສະຣາເອນຈະສາມາດຖື ຮັກສາພຣະບັນຍັດສິບປະການໄດ້ ?

   ..............................................................................

2. ພຣະເຈົ້າຈະຊົງຍອມຮັບເຮົາບໍ່ ຖ້າຫາກວ່າເຮົາພະຍາຍາມ ເຊື່ອຟັງພຣະບັນຍັດໃຫ້ດີທີ່ສຸດເທົ່າທີ່ຈະເຮັດໄດ້ ?

   ..............................................................................

3. ການນະມັດສະການຮູບເຄົາລົບຢ່າງໃດຢ່າງໜຶ່ງເປັນບາບ ຫຼືບໍ່ ?

   ..............................................................................

4. ພຣະເຈົ້າກ່າວຫຼືບໍ່ວ່າຖ້າທ່ານກຽດຊັງໃຜ ທ່ານກໍກຳລັງຂ້າ ຄົນນັ້ນ?

   ..............................................................................

5. ພຣະເຈົ້າກ່າວຫຼືບໍ່ວ່າ ການຄິດກັບຍິງຫຼືຊາຍອື່ນທີ່ບໍ່ແມ່ນ ຜົວຫຼືເມຍໃນທາງເພດຖືເປັນການລ່ວງປະເວນີດ້ວຍ?

   ..............................................................................

6. ເວົ້າບໍ່ຈິງເປັນບາບຫຼືບໍ່ ?

   ..............................................................................

7. ມີໃຜຖືຮັກສາພຣະບັນຍັດທັງສິບປະການນີ້ໄວ້ໄດ້ຕະຫຼອດ ເວລາຫຼືບໍ່?

   ..............................................................................



## ທົບທວນ: ບົດທີ 1-6

ພຣະຄຳພີເປັນຂໍ້ຄວາມຈາກພຣະເຈົ້າທີ່ສົ່ງມາເຖິງບັນດາ ປະຊາຊາດຕ່າງໆທົ່ວໂລກ ຊຶ່ງເປັນຂໍ້ຄວາມທີ່ໄດ້ມີການບັນທຶກໄວ້. ສຳລັບຄົນສ່ວນໃຫຍ່ແລ້ວ ພຣະຄຳພີອາດຈະເປັນເໝືອນຮູບພາບ ປິດສະໜາທີ່ຕໍ່ກັນຂະໜາດໃຫຍ່. ພີ່ນ້ອງເຄີຍເອົາຮູບຕໍ່ແຕ່ລະສິ້ນ ສ່ວນຂອງຮູບພາບປິດສະໜານັ້ນມາຕໍ່ກັນໃຫ້ເປັນຮູບພາບຫຼືບໍ? ຄົນ ສ່ວນຫຼາຍຈະເອົາຮູບທີ່ຢູ່ກົງກັບມູມທັງສີ່ຂອງຮູບພາບປິດສະໜາ ກ່ອນ ຈາກນັ້ນກໍຈະຊອກຫາສິ້ນສ່ວນທີ່ຢູ່ກົງກັບຂອບມາຕໍ່ກັນ ຈົນ ສາມາດຕໍ່ຂອບນອກໄດ້ ແລ້ວຈຶ່ງຫາຮູບທີ່ຢູ່ສູນກາງມາຕໍ່ກັນໄປ ເລື້ອຍໆ ຊຶ່ງກໍຈະເຮັດໃຫ້ຮູບພາບປິດສະໜາຄ່ອຍໆປາກົດຂຶ້ນເປັນ ຮູບເປັນຮ່າງຂຶ້ນ ແຕ່ພີ່ນ້ອງຈະບໍ່ສາມາດເຫັນຮູບພາບທັງໝົດໄດ້ຈົນ ກວ່າພີ່ນ້ອງຈະວາງຮູບຕໍ່ອັນສຸດທ້າຍລົງເທິງພາບປິດສະໜານັ້ນ. ໃນບົດທີ 1-6 ຖືວ່າເຮົາໄດ້ວາງຮູບຕໍ່ທີ່ຢູ່ກົງກັບມູມທັງສີ່ຂອງຮູບພາບ ປິດສະໜາພຣະຄຳພີຮຽບຮ້ອຍແລ້ວ ແລະໃນບົດຕໍ່ໄປເຮົາຈະມາ ເລີ່ມຕໍ່ຮູບພາບທີ່ຢູ່ບ່ອນຂອບນຳກັນ ຈຸດມຸ່ງໝາຍຂອງການສຶກສາ ໃນຄັ້ງນີ້ກໍເພື່ອຈະໃຫ້ພີ່ນ້ອງໄດ້ເຫັນພາບທີ່ຊັດເຈນວ່າ ພຣະຄຳພີ ຕໍ່ເຂົ້າກັນຢ່າງພໍດີໄດ້ແນວໃດ ແລະເມື່ອສຶກສາບົດຮຽນເຫຼົ່ານີ້ຈົບ ແລ້ວພີ່ນ້ອງກໍຈະເຂົ້າໃຈວ່າພຣະເຈົ້າຊົງເປີດເຜີຍໃຫ້ເຫັນແຜນການ ຂອງພຣະອົງທີ່ໄດ້ສົ່ງ **“ພຣະຜູ້ຊ່ວຍໃຫ້ລອດພົ້ນ”** ເພື່ອເຂົ້າມາຊ່ວຍ ເຫຼືອມະນຸດຊາດໃຫ້ລອດພົ້ນຈາກຄວາມບາບແລະຄວາມຕາຍໄດ້ ຢ່າງໃດ.

ເຈົ້າເຄີຍຮູ້ບໍ່ວ່າ ເປັນຫຍັງເຮົາຈຶ່ງມີ 7 ວັນໃນ 1 ອາທິດ ຄຳຕອບກໍຄືພຣະເຈົ້າໄດ້ກຳນົດໄວ້ໃຫ້ເປັນເຊັ່ນນັ້ນພຣະເຈົ້າຊົງສ້າງ

ຈັກກະວານໃຫ້ສຳເລັດພາຍໃນ 6 ວັນ ຊຶ່ງແທ້ຈິງແລ້ວພຣະອົງຊົງມີລິດທານຸພາບຢ່າງຫຼວງຫຼາຍມະຫາສານຈົນສາມາດເນລະມິດທຸກສິ່ງຂຶ້ນມາໄດ້ໃນທັນທີ ແຕ່ພຣະອົງຊົງມີພຣະປະສົງໃນການເລືອກທີ່ຈະສ້າງຈັກກະວານທັງໝົດໃຫ້ສຳເລັດໃນ 6 ວັນ ແລະພັກພາລະກິດໃນວັນທີ 7 ນັ້ນ ພຣະອົງຊົງປະທານຮູບແບບການດຳເນີນຊີວິດໃຫ້ເຮົາປະຕິບັດຕາມ ຄືໃຫ້ເຮົາເຮັດວຽກ 6 ວັນແລະພັກຜ່ອນ 1 ວັນຕໍ່ອາທິດ ພຣະເຈົ້າເປັນໃຜ ແລະມີລັກສະນະຢ່າງໃດ? ແມ່ນແລ້ວພຣະເຈົ້າເປັນພຣະຜູ້ສ້າງໂລກແລະຈັກກະວານນີ້ ລວມທັງສ້າງສັບພະສິ່ງທັງປວງໃນໂລກນີ້ດ້ວຍ ພຣະເຈົ້າມີລັກສະນະຫຼາຍຢ່າງຄືພຣະເຈົ້າຊົງມີອຳນາດສູງສຸດເໜືອພະທັງປວງ ຊົງຮູ້ທຸກສິ່ງທຸກຢ່າງຊົງເປັນອົງນິລັນດອນ ພຣະອົງຊົງເປັນປະມຸກສູງສຸດທີ່ຄອບຄອງຢູ່ເໜືອສັບພະສິ່ງທັງຫຼາຍ ແລະພຣະອົງບໍ່ຈຳເປັນຕ້ອງເພິ່ງພາອາໄສຜູ້ໃດຫຼືສິ່ງໃດໆເລີຍ.

ພຣະເຈົ້າຊົງໃຊ້ເວລາ 6 ວັນ ໃນການກະກຽມແຜ່ນດິນໂລກໃຫ້ພ້ອມສຳລັບສິ່ງທີ່ຍິ່ງໃຫຍ່ທີ່ສຸດທີ່ພຣະເຈົ້າຊົງສ້າງມາ ໃນທີ່ສຸດເວລາທີ່ພຣະອົງຈະສ້າງມະນຸດກໍມາເຖິງ ພຣະເຈົ້າຊົງສ້າງມະນຸດຕາມພຣະລັກສະນະຂອງພຣະອົງ ຊຶ່ງໝາຍຄວາມວ່າ ມະນຸດໄດ້ຖືກສ້າງຂຶ້ນເພື່ອໃຫ້ມີຄວາມຄິດ ຈິດສຳນຶກທີ່ດີ ແລະມີເສລີພາບທີ່ຈະຄິດຕາມໃຈປາຖະໜາເໝືອນຢ່າງພຣະເຈົ້າໄດ້ ພຣະອົງຊົງສ້າງມະນຸດໃຫ້ມີຄວາມຄິດເພື່ອວ່າມະນຸດຈະສາມາດໄດ້ຍິນແລະເຂົ້າໃຈການຕິດຕໍ່ສື່ສານຂອງພຣະອົງໄດ້ ພຣະຊົງສ້າງມະນຸດໃຫ້ມີຈິດສຳນຶກທີ່ດີເພື່ອວ່າມະນຸດຈະສາມາດຕອບສະໜອງຕໍ່ພຣະອົງດ້ວຍຄວາມຮັກແລະການອຸທິດຕົນໄດ້ ພຣະອົງຊົງສ້າງມະນຸດໃຫ້ມີເສລີພາບທີ່ຈະຄິດຕາມໃຈປາຖະໜາ ເພື່ອວ່າມະນຸດຈະສາມາດຕັດສິນ



## ຄຳຖາມບົດທີ 11

1. ໃຜໃຊ້ຄົນອິດສະຣາເອນຢ່າງຂ້າທາດ?

   ..................................................................

2. ໃຜຊັກຈູງກະສັດໃຫ້ເກີດຄວາມຄິດຊົ່ວຮ້າຍເຫຼົ່ານັ້ນ?

   ..................................................................

3. ເປັນຫຍັງຊາຕານຈຶ່ງຕ້ອງການທຳລາຍຄົນອິດສະຣາເອນ?

   ..................................................................

4. ເປັນຫຍັງພຣະເຈົ້າຈຶ່ງຊົງໃຫ້ລູກສາວຂອງຟາໂຣ ຮັບໂມເຊໄວ້ເປັນລູກລ້ຽງ ?

   ..................................................................

5. ພຣະເຈົ້າຊົງສະແດງລິດອຳນາດໃນອີຢີບຢ່າງໃດ ?

   ..................................................................

6. ໄພພິບັດຢ່າງສຸດທ້າຍທີ່ພຣະເຈົ້າຊົງກະທຳໃຫ້ເກີດຂຶ້ນໃນອີຢີບຄືຫຍັງ?

   ..................................................................

7. ພຣະເຈົ້າຊົງບອກໃຫ້ຄົນອິດສະຣາເອນປົກປ້ອງລູກກົກຂອງພວກເຂົາຢ່າງໃດ?

   ..................................................................

8. ອັນໃດຄືເຫດຜົນສອງຂໍ້ທີ່ເຮັດໃຫ້ພຣະເຈົ້າປົກປ້ອງອິດສະຣາເອນ?

   ..................................................................

# ຄຳຖາມບົດທີ 10

1. ເອຊາວເຊື່ອຟັງພຣະເຈົ້າເໝືອນພໍ່ຂອງລາວບໍ?

.................................................................................

2. ຢາໂຄບເຊື່ອຟັງພຣະເຈົ້າເໝືອນພໍ່ຂອງລາວບໍ?

.................................................................................

3. ພຣະເຈົ້າຊົງໃຫ້ຢາໂຄບຝັນເຫັນຫຍັງ?

.................................................................................

4. ຄວາມຝັນນັ້ນໝາຍຄວາມວ່າຢ່າງໃດ?

.................................................................................

5. ໃຜເປັນລູກທີ່ຢາໂຄບຮັກຫຼາຍທີ່ສຸດ?

.................................................................................

6. ພວກອ້າຍຂອງໂຢເຊບເຮັດຫຍັງກັບໂຢເຊບ?

.................................................................................

7. ເປັນຫຍັງໂຢເຊບຈຶ່ງຕິດຄຸກ?

.................................................................................

8. ໃຜຊ່ວຍໃຫ້ໂຢເຊບແກ້ຄວາມຝັນຂອງຟາໂຣໄດ້?

.................................................................................

9. ພຣະເຈົ້າຊົງເຮັດຕາມພຣະສັນຍາທີ່ວ່າຈະຊົງໃຫ້ໂຢເຊບມີອຳນາດຄອບຄອງເໜືອຄົວເຮືອນຂອງລາວຫຼືບໍ່?

.................................................................................

10. ພຣະເຈົ້າຊົງເຮັດຕາມພຣະສັນຍາທີ່ວ່າຄອບຄົວຂອງໂຢເຊບຈະມາໝູບໜ້າລົງເຖິງກາບໄຫວ້ລາວຫຼືບໍ່?

.................................................................................



ໃຈເລືອກທີ່ຈະຕິດຕາມພຣະອົງໄດ້ ດັ່ງນັ້ນມະນຸດຈຶ່ງມີສະພາບຈິດວິນຍານຊຶ່ງຢູ່ໃນຮ່າງກາຍທີ່ມີຕົວຕົນໄດ້.

ພຣະເຈົ້າຊົງຈັດຕຽມສະຖານທີ່ທີ່ສວຍງາມແຫ່ງໜຶ່ງຊຶ່ງເອີ້ນວ່າ"**ສວນເອເດນ**"ໄວ້ໃຫ້ມະນຸດຄົນທຳອິດຄືອາດາມໄດ້ເຂົ້າໄປອາໄສຢູ່ ພຣະເຈົ້າຊົງບອກແກ່ອາດາມວ່າລາວສາມາດກິນໝາກໄມ້ຈາກຕົ້ນໄມ້ໃດໆໃນສວນນັ້ນໄດ້ ເວັ້ນໄວ້ແຕ່ພຽງຕົ້ນດຽວເທົ່ານັ້ນ, ພຣະເຈົ້າຍັງຊົງບອກແກ່ອາດາມອີກວ່າ ມື້ໃດທີ່ລາວກິນໝາກໄມ້ຈາກຕົ້ນໄມ້ນັ້ນລາວຈະຕາຍຢ່າງແນ່ນອນ ຄວາມຕາຍໝາຍເຖິງການແຍກຈາກກັນ ນັ້ນຄື ປະການທຳອິດ ອາດາມຈະຖືກແຍກຈາກພຣະເຈົ້າໃນຄວາມສຳພັນທີ່ເຄີຍມີກັບພຣະອົງ ປະການທີສອງ ອາດາມຈະຕ້ອງຕາຍຝ່າຍຮ່າງກາຍໃນວັນໃດວັນໜຶ່ງ ເພາະລາວໄດ້ຖືກແຍກຈາກພຣະເຈົ້າຜູ້ຊົງເປັນແຫຼ່ງຊີວິດແລະຊົງເປັນຜູ້ຮັກສາຊີວິດໄວ້ ປະການທີສາມ ກໍຄືຄວາມຕາຍດັ່ງກ່າວຍັງໝາຍເຖິງການຖືກແຍກຈາກພຣະເຈົ້າຕະຫຼອດໄປເປັນນິດເມື່ອຮ່າງກາຍບໍ່ມີຊີວິດອີກຕໍ່ໄປ ສ່ວນທີ່ເປັນຈິດວິນຍານຂອງມະນຸດ ກໍຈະອອກຈາກຮ່າງແລະໄປຍັງສະຖານທີ່ທີ່ໜ້າຢ້ານ ຊຶ່ງເອີ້ນວ່າ "**ບຶງໄຟນະຮົກ**".



ບຶງໄຟນະຣົກເປັນສະຖານທີ່ຊຶ່ງພຣະເຈົ້າຊົງຕຽມໄວ້ສຳລັບພວກຜີມານແລະຊາຕານ ແຕ່ກ່ອນພວກມັນເຄີຍເປັນເທວະດາທີ່ດີແລະບໍລິສຸດ ແຕ່ລູຊີເຟີ (ຊຶ່ງປະຈຸບັນຄືຊາຕານ) ໄດ້ຊັກຊວນໃຫ້ພວກມັນເປັນກະບົດແລະເຮັດສົງຄາມກັບພຣະເຈົ້າ ພຣະເຈົ້າຜູ້ຊົງລິດທານຸພາບ ຈຶ່ງໄດ້ຂັບໄລ່ພວກມັນອອກຈາກສະຫວັນຊຶ່ງເປັນສະຖານທີ່ແຫ່ງພຣະວິຫານຂອງພຣະເຈົ້າ. ຊາຕານມີເປົ້າໝາຍທີ່ຈະທຳຮ້າຍມະນຸດຊຶ່ງເປັນດວງໃຈຂອງພຣະເຈົ້າ ເພາະພຣະເຈົ້າໄດ້ຊົງພິພາກສາແລະລົງໂທດມັນສຳລັບການກະບົດຂັດຂືນຂອງມັນແລ້ວວິທີທີ່ດີທີ່ສຸດທີ່ຊາຕານສາມາດຈະເຮັດໄດ້ກໍຄືການຫັນເຫຈິດໃຈມະນຸດໃຫ້ອອກໄປຈາກພຣະເຈົ້າແລະຕິດຕາມມັນໄປ ຊາຕານຕໍ່ຕ້ານງານຂອງພຣະເຈົ້າໃນໂລກນີ້ ມັນເຮັດໃຫ້ຜູ້ເຊື່ອເກີດຄວາມຮູ້ສຶກທໍ້ແທ້ໂດຍໃຊ້ຍຸດທະວິທີຕ່າງໆ ນອກຈາກນີ້ຊາຕານຍັງທ້າທາຍຄວາມຍຸຕິທຳຂອງພຣະເຈົ້າໂດຍການຫຼອກລວງໃຫ້ມະນຸດເຮັດບາບແລະບໍ່ເຊື່ອຟັງພຣະເຈົ້າ ເມື່ອມະນຸດເຮັດບາບ ຄວາມຍຸຕິທຳຂອງພຣະເຈົ້າກໍຈະປາກົດຂຶ້ນເພື່ອພິພາກສາມະນຸດຜູ້ນັ້ນຕາມຜົນແຫ່ງການກະທຳຈາກການເລືອກຂອງພວກເຂົາ ຊຶ່ງກໍຄືການທີ່ຈະຕ້ອງຢູ່ໃນບຶງໄຟນະຣົກກັບຊາຕານຕະຫຼອດໄປເປັນນິດ.

ໂລກທີ່ພຣະເຈົ້າສ້າງຂຶ້ນໃນຕອນທຳອິດນັ້ນມີແຕ່ຄວາມບໍລິສຸດ ບໍ່ມີຄວາມຊົ່ວຮ້າຍຢູ່ໃນໂລກເລີຍ ທັງອາດາມແລະເອວາຮູ້ຈັກແຕ່ຄວາມສະໜິດສະໜົມກົມກຽວ, ສັນຕິສຸກ, ຄວາມຮັກແລະຄວາມຊື່ນຊົມຍິນດີ. ຕໍ່ມາບໍ່ນານ ຊາຕານກໍຫຼອກລວງໃຫ້ມະນຸດບໍ່ເຊື່ອຟັງພຣະເຈົ້າ ອາດາມຈົງໃຈເລືອກທີ່ຈະບໍ່ເຊື່ອຟັງພຣະເຈົ້າແລະໄດ້ກິນໝາກໄມ້ນັ້ນ ການບໍ່ເຊື່ອຟັງຂອງອາດາມ ນຳມາຊຶ່ງຄວາມໜ້າລະອາຍ, ຄວາມຜິດ, ຄວາມຢ້ານ, ການເຫີນຫ່າງຈາກພຣະ



## ຄຳຖາມບົດທີ 9

1. ພຣະເຈົ້າຊົງບອກໃຫ້ອັບຣາຮາມເຮັດຫຍັງ?

   ......................................................................

2. ເປັນຫຍັງຈຶ່ງຊົງໃຫ້ເພິ່ນເຮັດຢ່າງນັ້ນ ?

   ......................................................................

3. ອັບຣາຮາມຄິດວ່າພຣະເຈົ້າຈະຊົງເຮັດຢ່າງໃດຖ້າເພິ່ນຂ້າອີຊາກ ?

   ......................................................................

4. ເມື່ອອີຊາກຖືກມັດວາງໄວ້ເທິງແທ່ນບູຊາແລ້ວນັ້ນລາວຈະມີທາງໜີລອດໄປໄດ້ບໍ່?

   ......................................................................

5. ມີທາງທີ່ໃຜຄົນໃດຄົນໜຶ່ງຈະຊ່ວຍຕົນເອງໃຫ້ລອດພົ້ນຈາກບຶງໄຟນະຣົກຫຼືຄວາມຕາຍຊົດໃຊ້ເພາະບາບຂອງຕົນໄດ້ຫຼືບໍ່?

   ......................................................................

6. ໃຜຊ່ວຍຊີວິດອີຊາກໄວ້?

   ......................................................................

7. ໃຜເປັນຜູ້ຈັດຫາເຄື່ອງບູຊາອື່ນມາແທນທີ່ຊີວິດຂອງອີຊາກ?

   ......................................................................

## ຄຳຖາມບົດທີ່ 8

1. ເປັນຫຍັງໂລດຈຶ່ງເລືອກບັນດາທົ່ງຮາບລຸ່ມໃກ້ເມືອງໂຊໂດມແລະໂກໂມຣາ?

   ...................................................................................

2. ຖ້າຄົນເຮົາຕາຍແລ້ວຕ້ອງຕົກໃນບຶງໄຟນະຮົກ ຊັບສິນເງິນທອງຈະຊ່ວຍຫຍັງໄດ້ຫຼືບໍ່?

   ...................................................................................

3. ພຣະເຈົ້າຊົງຮູ້ເຖິງຄວາມຊົ່ວຊ້າທຸກຢ່າງຂອງເມືອງໂຊໂດມແລະໂກໂມຣາ ຫຼືບໍ່ ?

   ...................................................................................

4. ຈິງຫຼືບໍ່ທີ່ວ່າພຣະເຈົ້າຊົງໃສ່ໃຈຄົນທຸກຄົນ?

   ...................................................................................

5. ເປັນຫຍັງພຣະເຈົ້າຊົງລໍຖ້ອຍແລະບໍ່ລົງໂທດຄວາມຜິດບາບຂອງເມືອງໂຊໂດມແລະໂກໂມຣາທັນທີ ?

   ...................................................................................

6. ເປັນຫຍັງພຣະເຈົ້າຈຶ່ງໃຫ້ເທວະດາໄປຊ່ວຍຊີວິດໂລດໄວ້ ?

   ...................................................................................

7. ເປັນຫຍັງພຣະເຈົ້າຈຶ່ງຊົງເຮັດໃຫ້ເມຍຂອງໂລດກາຍເປັນເສົາເກືອ?

   ...................................................................................



ເຈົ້າ, ຄວາມແຕກແຍກໃນຄວາມສຳພັນຂອງທັງສອງຝ່າຍ ການພິພາກສາ, ຄວາມຕາຍແລະການຖືກໄລ່ອອກຈາກສວນເອເດນ.



ພຣະເຈົ້າບໍ່ຍອມຮັບເຄື່ອງປົກປິດຊຶ່ງອາດາມແລະເອວາໄດ້ເຮັດຂຶ້ນ, ຄົນທັງສອງບໍ່ສາມາດເຮັດໃຫ້ຕົນເອງເປັນທີ່ຍອມຮັບຂອງພຣະເຈົ້າໂດຍການກະທຳຂອງຕົນເອງໄດ້ ຄວາມຕາຍຝ່າຍຮ່າງກາຍເທື່ອທຳອິດນັ້ນເປັນຜົນຈາກການບໍ່ເຊື່ອຟັງຂອງພວກເຂົາ, ພຣະເຈົ້າໄດ້ຊົງຂ້າສັດໂຕໜຶ່ງແລະນຳໜັງຂອງມັນມາເຮັດເປັນເຄື່ອງປົກປິດຊຶ່ງເປັນທີ່ຍອມຮັບໄດ້ ມາປົກຄຸມໃຫ້ອາດາມແລະເອວາ ການທີ່ຄົນທັງສອງຍອມໃຫ້ພຣະເຈົ້າສວມເຄື່ອງປົກປິດແກ່ຕົນເອງຍ່ອມສະແດງວ່າຄົນທັງສອງເຊື່ອໃນພຣະສັນຍາຂອງພຣະເຈົ້າກ່ຽວກັບ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ຊຶ່ງຈະສະເດັດມາ ແລະການຍອມຖອດເຄື່ອງປົກປິດອັນເກົ່າຂອງພວກເຂົາອອກກໍໝາຍຄວາມວ່າ ຄົນທັງສອງຈະຕ້ອງປ່ຽນຄວາມຄິດກ່ຽວກັບການເປັນທີ່ຍອມຮັບຂອງພຣະເຈົ້າໂດຍວິທີການຂອງພວກເຂົາ ແລະຫັນມາຍອມຮັບວິທີການຂອງພຣະເຈົ້າ ຫຼາຍປີຕໍ່ມາ ພວກເຂົາກໍຕາຍແລະ

ຈິດວິນຍານຂອງພວກເຂົາກໍໄດ້ໄປຢູ່ກັບພຣະເຈົ້າໃນສະຫວັນ ເພາະພວກເຂົາເຊື່ອພຣະເຈົ້າ ແລະມາຫາພຣະເຈົ້າຕາມວິທີການທີ່ພຣະອົງໄດ້ຊົງບັນຊາໄວ້.

ອາດາມ ແລະເອວາມີລູກອີກຫຼາຍຄົນທີ່ເກີດນອກສວນເອເດນ ຊຶ່ງໝາຍຄວາມວ່າລູກທັງຫຼາຍຂອງອາດາມ ແລະເອວາເກີດມາໂດຍຖືກແຍກອອກຈາກພຣະເຈົ້າແລະໃນວັນໃດວັນໜຶ່ງພວກເຂົາຈະຕ້ອງຕາຍແລະໄປສູ່ບຶງໄຟນະຮົກ ນອກເສຍຈາກວ່າພຣະເຈົ້າຈະຊົງຊ່ວຍພວກເຂົາໃຫ້ລອດພົ້ນ ແຕ່ພວກເຂົາໄດ້ສືບທອດທ່າທີແຫ່ງການບໍ່ເຊື່ອຟັງຈາກບິດາມານດາຂອງຕົນ ລັກສະນະດັ່ງກ່າວກໍຖ່າຍທອດຈາກຄົນລຸ້ນໜຶ່ງໄປສູ່ອີກລຸ້ນໜຶ່ງ ດັ່ງນັ້ນເຮົາຈຶ່ງໄດ້ສືບທອດທ່າທີແຫ່ງການບໍ່ເຊື່ອຟັງຈາກບັນພະບຸລຸດຂອງເຮົາດ້ວຍຜົນຈາກການບໍ່ເຊື່ອຟັງຂອງອາດາມ ແລະເອວາເປັນສາຍເຫດທີ່ເຮັດໃຫ້ໂລກທຸກມື້ນີ້ເຕັມໄປດ້ວຍການຝ່າຝືນກົດໝາຍ,ອາດຊະຍາກອນ, ການບໍ່ມີສິນລະທຳ, ການຫຼິ້ນຊູ້, ຢາເສບຕິດ, ການເມົາເຫຼົ້າ, ການຕີວະ, ການສໍ້ໂກງ, ການຂີ້ລັກ, ຄວາມໂລບ, ການຄາດຕະກຳ ແລະຄວາມຊົ່ວຮ້າຍທຸກຢ່າງ ພຣະເຈົ້າຊົງລົງໂທດຕໍ່ຄົນທີ່ເຮັດຄວາມຊົ່ວຮ້າຍຢູ່ສະເໝີ ແຕ່ຂະນະດຽວກັນພຣະອົງກໍຊົງປ່ຽມລົ້ນດ້ວຍຄວາມຮັກ ພຣະຄຸນ ແລະຄວາມເມດຕາກະລຸນາເຊັ່ນກັນ ພຣະເຈົ້າຊົງສັນຍາວ່າຈະສົ່ງ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ມາເພື່ອມະນຸດຈະສາມາດລອດພົ້ນຈາກໂທດທີ່ພວກເຂົາສົມຄວນຈະໄດ້ຮັບນັ້ນ .

ພຣະເຈົ້າໄດ້ຊົງບັນຊາແກ່ອາດາມ ແລະເອວາວ່າຖ້າຄົນທັງສອງປາຖະໜາຈະເປັນທີ່ຍອມຮັບຂອງພຣະເຈົ້າພວກເຂົາຈະຕ້ອງນຳແກະໂຕໜຶ່ງມາຖວາຍເປັນເຄື່ອງບູຊາ ຊຶ່ງສັດໂຕນັ້ນຈະຕ້ອງຖືກຂ້າໃນລັກສະນະທີ່ຈະຕ້ອງມີເລືອດໄຫຼອອກ ພຣະເຈົ້າບໍ່ໄດ້ຍອມ



## ຄຳຖາມບົດທີ 7

1. ພຣະເຈົ້າຊົງບອກໃຫ້ອັບຣາຮາມເຮັດຫຍັງ?

   ................................................................................

   ................................................................................

2. ຕອນທີ່ພຣະເຈົ້າຊົງບອກໃຫ້ອັບຣາຮາມ ແລະນາງຊາຣາອອກຈາກປະເທດຂອງຕົນພວກເຂົາມີລູກທັງໝົດຈັກຄົນ?

   ................................................................................

   ................................................................................

3. ອັບຣາຮາມເຊື່ອຟັງພຣະເຈົ້າແລະພັນທະສັນຍາຂອງພຣະອົງເໝືອນຢ່າງອາເບັນຫຼືບໍ່?

   ................................................................................

   ................................................................................

4. ເປັນຫຍັງອັບຣາຮາມ ແລະຊາຣາຈຶ່ງມີລູກບໍ່ໄດ້ ເວັ້ນແຕ່ວ່າພຣະເຈົ້າຈະຊົງເຮັດສິ່ງອັດສະຈັນ?

   ................................................................................

   ................................................................................

## ຄຳຊີ້ແຈງ:

ເມື່ອອ່ານບົດຮຽນຕ່າງໆ ແລະຕອບຄຳຖາມໃນໜ້າຖັດໄປຮຽບຮ້ອຍແລ້ວໃຫ້ພີ່ນ້ອງຄ່ອຍໆ ຈີກໜ້າທີ່ມີຄຳຖາມຄຳຕອບເຫຼົ່ານັ້ນໃສ່ຊອງຕິດສະແຕມສົ່ງມາຕາມທີ່ຢູ່ທີ່ແຈ້ງໄວ້ ສ່ວນໜັງສືເຫຼັ້ມທີ່ 2 ນີ້ພວກເຮົາຂໍມອບເປັນຂອງຂວັນແກ່ພີ່ນ້ອງ ແລະພວກເຮົາຈະສົ່ງເຫຼັ້ມທີ່ 3 ໄປໃຫ້ພາຍໃນ 2-3 ອາທິດໜ້າ.

ທຸກຄຳຕອບຢູ່ໃນໜັງສືຮຽນ ອ່ານແລະເອົາຄຳຕອບອອກມາຈາກໜັງສືຮຽນ.



ຮັບເລືອດສັດເປັນເຄື່ອງປົກປິດສຳລັບການບໍ່ເຊື່ອຟັງຂອງມະນຸດ ແຕ່ພຣະອົງຊົງປາຖະໜາທີ່ຈະໃຫ້ມະນຸດສຳນຶກໄວ້ສະເໝີວ່າ ໂທດຖານສຳລັບການບໍ່ເຊື່ອຟັງຄືຄວາມຕາຍແລະພວກເຂົາຈະຕ້ອງໄປສູ່ບຶງໄຟ ນອກເສຍຈາກວ່າພຣະອົງຈະຊົງຊ່ວຍພວກເຂົາໃຫ້ລອດພົ້ນ ຖ້າພວກເຂົາເຊື່ອພຣະເຈົ້າແລະເລືອກທີ່ຈະກະທຳຕາມວິທີການຂອງພຣະເຈົ້າແທນທີ່ຈະກະທຳຕາມວິທີການຂອງຕົນເອງ ຄືການນຳແກະໂຕໜຶ່ງມາຂ້າເປັນເຄື່ອງບູຊາຕາມທີ່ພຣະເຈົ້າໄດ້ຊົງແຈ້ງແກ່ພວກເຂົາແລ້ວ ການຖວາຍເຄື່ອງບູຊາດ້ວຍເລືອດເປັນສ່ວນໜຶ່ງໃນແຜນການຂອງພຣະເຈົ້າທີ່ຈະຊ່ວຍມະນຸດໃຫ້ລອດພົ້ນຈາກມານຊາຕານແລະຄວາມຕາຍ.

ອາດາມກັບເອວາມີລູກຊາຍສອງຄົນຊື່ກາອິນແລະອາເບັນ ມື້ໜຶ່ງທັງສອງເຂົ້າມານະມັດສະການພຣະເຈົ້າໂດຍໄດ້ນຳເອົາເຄື່ອງບູຊາມາຖວາຍແກ່ພຣະອົງ ອາເບັນນຳເອົາລູກແກະໂຕໜຶ່ງມາຖວາຍເປັນເຄື່ອງບູຊາແກ່ພຣະເຈົ້າຕາມທີ່ພຣະອົງໄດ້ຊົງບັນຊາໄວ້ ແຕ່ກາອິນບໍ່ເຊື່ອຟັງ ລາວເອົາໝາກໄມ້ມາຖວາຍແກ່ພຣະເຈົ້າ ກາອິນຄິດວ່າພຣະເຈົ້າຈະຍອມຮັບເຄື່ອງບູຊາຂອງລາວ ແຕ່ພຣະເຈົ້າບໍ່ຊົງຍອມຮັບເຄື່ອງບູຊາຂອງລາວ ພຣະເຈົ້າຊົງຍອມຮັບເຄື່ອງບູຊາຂອງອາເບັນ ກາອິນແລະອາເບັນເປັນຕົວແທນທີ່ສະແດງເຖິງກຸ່ມຄົນສອງກຸ່ມດ້ວຍກັນ ກຸ່ມທີ່ໜຶ່ງຄືພວກທີ່ນະມັດສະການພຣະເຈົ້າແບບກາອິນຊຶ່ງເປັນຕົວແທນຂອງກຸ່ມທີ່ມານະມັດການພຣະເຈົ້າຕາມຄວາມຄິດຂອງມະນຸດ. ກຸ່ມທີ່ສອງຄືພວກທີ່ນະມັດສະການພຣະເຈົ້າແບບອາເບັນຊຶ່ງເປັນຕົວແທນຂອງກຸ່ມທີ່ເຂົ້າມາຫາພຣະເຈົ້າຕາມວິທີການຂອງພຣະເຈົ້າ.



ພຣະເຈົ້າໄດ້ຊົງປະຕິເສດເຄື່ອງປົກປິດຂອງອາດາມກັບເອວາແລ້ວສັນໃດ ພຣະອົງກໍຊົງປະຕິເສດເຄື່ອງບູຊາຂອງກາອິນສັນນັ້ນ. ບໍ່ມີໃຜສາມາດຈະເຮັດໃຫ້ຕົນເອງເປັນທີ່ຍອມຮັບຂອງພຣະເຈົ້າດ້ວຍສິ່ງທີ່ພວກເຂົາກະທຳໄດ້ພຣະເຈົ້າຊົງປາຖະໜາທີ່ຈະຍອມຮັບກາອິນ ແຕ່ລາວຈະຕ້ອງເຊື່ອພຣະເຈົ້າແລະເຂົ້າມາຫາພຣະອົງຕາມວິທີການທີ່ພຣະອົງໄດ້ຊົງບັນຊາໄວ້ ການຖວາຍເຄື່ອງບູຊານັ້ນຈະຕ້ອງເປັນໄປຕາມວິທີການຂອງພຣະເຈົ້າ ກາອິນຄຽດແລະໄດ້ຂ້າອາເບັນນ້ອງຊາຍຂອງລາວ ກາອິນບໍ່ເຄີຍຍອມຮັບຄວາມຜິດຂອງຕົນເອງແລະບໍ່ເຫັນຄວາມສຳຄັນທີ່ຈະຕ້ອງຮັບການອະໄພໂທດດ້ວຍ, ຜົນທີ່ເກີດຂຶ້ນກໍຄືກາອິນບໍ່ເຄີຍເປັນທີ່ຍອມຮັບຂອງພຣະເຈົ້າ ລາວເລືອກທີ່ຈະປະພຶດຕາມທາງຂອງຊາຕານ ເພາະສະນັ້ນເມື່ອກາອິນຕາຍລາວຈຶ່ງຕ້ອງໄປສູ່ບຶງໄຟນະຣົກ.

ຫຼັງຈາກທີ່ພຣະເຈົ້າສ້າງອາດາມກັບເອວາແລ້ວ ມະນຸດກໍມີຈຳນວນເພີ່ມຂຶ້ນຫຼວງຫຼາຍ ໄລຍະເວລາຜ່ານໄປ1.500 ປີກໍມາຮອດ



ເຮົາຍອມຮັບວ່າເຮົາໄດ້ຝ່າຝືນພຣະບັນຍັດຂອງພຣະອົງແລະເຮົາບໍ່ສາມາດຈະຊ່ວຍຕົນເອງໃຫ້ລອດພົ້ນໄດ້ ພຣະອົງຊົງປາຖະໜາໃຫ້ເຮົາປັກຕາໄປຍັງພຣະຜູ້ຊ່ວຍໃຫ້ລອດພົ້ນຜູ້ຊຶ່ງສາມາດຈະກະທຳໃຫ້ເຮົາເປັນຜູ້ຊອບທຳແລະເປັນທີ່ຍອມຮັບຂອງພຣະເຈົ້າໄດ້.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 12 ໃນໜ້າ 82 *

ບັນຍັດຂອງພຣະເຈົ້າເຮັດໃຫ້ຄົນທັງຫຼາຍທີ່ອວດອ້າງວ່າຊີວິດຂອງເຂົາດີພໍແລ້ວທີ່ຈະໄດ້ຮັບການຍອມຮັບຈາກພຣະເຈົ້າໃຫ້ສະຫງົບປາກສະຫງົບຄໍາລົງ ບໍ່ມີໃຜທີ່ສຶກສາພຣະບັນຍັດ 10 ປະການແລ້ວຈະບໍ່ຮູ້ສຶກເຖິງຄວາມຜິດບາບຂອງຕົນເອງ ມະນຸດບໍ່ພຽງແຕ່ຈະຮູ້ສຶກເຖິງຄວາມຜິດບາບຂອງຕົນເອງເທົ່ານັ້ນພວກເຂົາຍັງຮູ້ສຶກເຖິງຄວາມສົມບູນພ້ອມທຸກຢ່າງຂອງພຣະເຈົ້າດ້ວຍ ພຣະບັນຍັດບໍ່ສາມາດຈະເຊື່ອມຊ່ອງວ່າງລະຫວ່າງມະນຸດກັບພຣະເຈົ້າໄດ້ ພຣະບັນຍັດເປັນເໝືອນເຄື່ອງວັດແທກອຸນຫະພູມທີ່ສາມາດຈະສະແດງໃຫ້ເຮົາເຫັນວ່າເຮົາກໍາລັງເຈັບປ່ວຍ ແຕ່ບໍ່ໄດ້ຊ່ວຍເຮັດໃຫ້ເຮົາດີຂຶ້ນເລີຍ.

ຄົນສ່ວນໃຫຍ່ຍອມຮັບວ່າຕົນເອງເປັນຄົນບາບ ຢ່າງໃດກໍຕາມມີນ້ອຍຄົນທີ່ຍອມຮັບວ່າຕົນເອງເປັນຄົນບາບທີ່ຊ່ວຍຕົນເອງບໍ່ໄດ້ແລະນີ້ເປັນຂໍ້ແຕກຕ່າງທີ່ເຫັນໄດ້ຢ່າງຊັດເຈນ ຄົນເຫຼົ່ານັ້ນທີ່ພຽງແຕ່ກ່າວວ່າພວກເຂົາເອງເປັນຄົນບາບເຊື່ອວ່າເຂົາສາມາດຈະກະທໍາບາງສິ່ງບາງຢ່າງທີ່ຈະເຮັດໃຫ້ຕົນເອງເປັນທີ່ຍອມຮັບຂອງພຣະເຈົ້າໄດ້ ຄວາມເຊື່ອທີ່ວ່າຄວາມດີຂອງຜູ້ໃດຜູ້ໜຶ່ງອາດຈະມີນໍ້າໜັກຫຼາຍກວ່າຄວາມຊົ່ວຂອງເຂົາ ເພາະສະນັ້ນຈຶ່ງເຮັດໃຫ້ເຂົາໄດ້ຮັບການຍອມຮັບຈາກພຣະເຈົ້າໄດ້ນັ້ນເປັນການຫຼອກລວງຂອງຊາຕານ ການເຮັດຄວາມດີນັ້ນເປັນສິ່ງທີ່ໜ້າຊື່ນຊົມ ແຕ່ການກະທໍາເຫຼົ່ານີ້ບໍ່ມີແມ່ນສິ່ງດຽວທີ່ສາມາດຈະຟື້ນຟູຄວາມສໍາພັນລະຫວ່າງເຮົາກັບພຣະເຈົ້າທີ່ຂາດສະບັ້ນລົງໄດ້ ຄົນບາບທີ່ຊ່ວຍເຫຼືອຕົນເອງບໍ່ໄດ້ ຮູ້ວ່າບໍ່ມີສິ່ງໃດທີ່ເຂົາສາມາດຈະກະທໍາເພື່ອເຮັດໃຫ້ຕົນເອງເປັນທີ່ຍອມຮັບຂອງພຣະເຈົ້າໄດ້ ພຣະເຈົ້າຊົງປາຖະໜາທີ່ຈະໃຫ້



ສະໄໝຂອງໂນອາ, ໂນອາກັບຄອບຄົວຂອງເພິ່ນເຊື່ອຟັງພຣະເຈົ້າແລະຖວາຍເຄື່ອງບູຊາໃຫ້ພຣະເຈົ້າ ຕາມທີ່ພຣະອົງສອນໄວ້ໃຫ້ກັບບັນພະບຸລຸດຂອງເພິ່ນ ຢ່າງໃດກໍຕາມຄົນອື່ນໆທຸກຄົນຕ່າງກໍສົນໃຈທີ່ຈະປະພຶດຕາມທາງຂອງກາອິນ ພວກເຂົາຊົ່ວຊ້າແລະໂຫດຮ້າຍຫຼາຍ ພຣະເຈົ້າຊົງໃຫ້ໂອກາດແກ່ພວກເຂົາ 120 ປີ ທີ່ຈະປ່ຽນແປງວິຖີທາງຂອງຕົນເອງແລະຫັນມາເຊື່ອພຣະເຈົ້າ ແຕ່ພວກເຂົາກໍຍັງຄົງເລືອກທີ່ຈະປະພຶດຕາມທາງຂອງຊາຕານ ພຣະເຈົ້າຈຶ່ງຊົງບັນຊາໃຫ້ໂນອາ ສ້າງເຮືອຂຶ້ນມາລໍາໜຶ່ງ ພຣະເຈົ້າຈະຊົງໄວ້ຊີວິດສັດທຸກຊະນິດ ຊະນິດລະ 2 ໂຕ ໂຕຜູ້ 1 ໂຕ ແລະໂຕແມ່ 1 ໂຕ ພ້ອມດ້ວຍໂນອາກັບຄອບຄົວຂອງເພິ່ນ ໃຫ້ພົ້ນຈາກນໍ້າຖ້ວມທີ່ຈະມາເຖິງນັ້ນ ພຣະເຈົ້າຍັງຊົງໃຊ້ໃຫ້ໂນອາໄປເຕືອນມະນຸດໃຫ້ຫັນເສຍຈາກທາງທັງຫຼາຍຂອງຕົນເອງແລະມາຕິດຕາມພຣະເຈົ້າ ແຕ່ພວກເຂົາບໍ່ຍອມຟັງເລີຍ.

ພຣະເຈົ້າໄດ້ຊົງບັນຊາໃຫ້ໂນອາສ້າງປະຕູເຂົ້າເຮືອພຽງປະຕູດຽວ ພຣະເຈົ້າຊົງໃຊ້ເຮືອເພື່ອສະແດງພາບໃຫ້ເຫັນວ່າ ພຣະເຈົ້າຈະສົ່ງ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ມາໃຫ້ພຽງພຣະອົງດຽວເທົ່ານັ້ນ ເຊັ່ນດຽວກັບທີ່ມີເຮືອພຽງລໍາດຽວຊຶ່ງມີປະຕູພຽງປະຕູດຽວເທົ່ານັ້ນ ແລະແລ້ວເວລາທີ່ຈະຕ້ອງເຂົ້າສູ່ນາວາກໍມາເຖິງ ພຣະເຈົ້າຊົງບັນດານໃຫ້ຝົນຕົກເປັນເວລາ 40 ວັນ 40 ຄືນ ໂລກທັງໂລກກໍຈົມຢູ່ໃຕ້ນໍ້າທັງໝົດ ມະນຸດແລະສັດທີ່ມີຊີວິດທຸກຊະນິດກໍຕາຍໄປ ເວັ້ນແຕ່ສິ່ງມີຊີວິດຊະນິດດຽວກັນຊຶ່ງຢູ່ພາຍໃນນາວາ ພຣະເຈົ້າຊົງຊ່ວຍໂນອາແລະຄອບຄົວຂອງເພິ່ນເພາະພວກເຂົາເຊື່ອພຣະເຈົ້າ ຫຼັງຈາກທີ່ນໍ້າເທິງແຜ່ນດິນແຫ້ງແລ້ວພວກເຂົາກໍແຜ່ຂະຫຍາຍປະຊາກອນໃຫ້ແກ່ແຜ່ນດິນໂລກຕໍ່ໄປ.



ຫຼາຍຮ້ອຍປີຜ່ານໄປ ເຮົາກໍໄດ້ພົບວ່າການກະບົດແລະການບໍ່ເຊື່ອຟັງກໍຍັງຄົງເກີດຂຶ້ນໃນໃຈຂອງມະນຸດ ພຣະເຈົ້າຊົງບັນຊາໃຫ້ມະນຸດກະຈັດກະຈາຍໄປທົ່ວໂລກ ແຕ່ພວກເຂົາປາຖະໜາທີ່ຈະອາໄສຢູ່ນຳກັນ ມະນຸດເລີ່ມຈະສ້າງເມືອງແລະຫໍຄອຍຊຶ່ງສູງຫຍູ່ມຟ້າ ພຣະເຈົ້າຈຶ່ງຊົງຕັດສິນພຣະໄທທີ່ຈະບັນດານໃຫ້ມະນຸດເວົ້າພາສາທີ່ແຕກຕ່າງກັນຫຼວງຫຼາຍ ພວກເຂົາຖືກກົດດັນໃຫ້ຢຸດການກໍ່ສ້າງ ເພາະພວກເຂົາບໍ່ສາມາດຈະຕິດຕໍ່ສື່ສານກັນໄດ້ ພວກເຂົາຈຶ່ງລວມຕົວກັນເປັນຄອບຄົວແລະແຍກຈາກກັນໂດຍໄດ້ກະຈັດກະຈາຍໄປທົ່ວໂລກໃນລັກສະນະຂອງການອົບພະຍົບຄັ້ງໃຫຍ່.

ນີ້ເປັນຈຸດຂອງພາສາ, ວັດທະນະທຳ ແລະປະເທດຕ່າງໆໄດ້ຖືກກຳເນີດຂຶ້ນ ບັນພະບຸລຸດທັງໝົດຂອງພວກເຮົາຕ່າງກໍເຄີຍຢູ່ທີ່ຫໍບາເບນນຳກັນທັງໝົດ ນີ້ຄືຈຸດເລີ່ມຕົ້ນຂອງປະຫວັດສາດແຫ່ງຄອບຄົວຂອງມະນຸດເຮົາຊຶ່ງຖືເປັນສ່ວນໜຶ່ງທີ່ຫຼົ່ຫຼອມກັນອອກມາເປັນລັກສະນະປະຊາຊາດແລະມີກຸ່ມພາສາທີ່ແຕກຕ່າງກັນ ພຣະ



ຕົວະກໍປະພຶດຕາມຊາຕານ ບໍ່ມີໃຜຈັກຄົນດຽວທີ່ຍັງມີຊີວິດຢູ່ແລະສາມາດຈະກ່າວອ້າງດ້ວຍຄວາມສັດຈິງໄດ້ວ່າຕົນເອງບໍ່ເຄີຍຝ່າຝືນພຣະບັນຍັດຂໍ້ນີ້ເລີຍ.

*ອົບພະຍົບ 20:17 ຢ່າຢາກໄດ້ເຮືອນຂອງຄົນອື່ນ. ຢ່າຢາກໄດ້ເມຍຂອງຄົນອື່ນ,ຕະຫຼອດທັງຂ້າທາດ,ງົວ,ລໍ, ຫຼື ສິ່ງຂອງອື່ນໆອີກທີ່ລາວມີຢູ່.*

ພຣະເຈົ້າບໍ່ປາຖະໜາທີ່ຈະໃຫ້ເຮົາຢາກໄດ້ໃນສິ່ງທີ່ຄົນອື່ນຄອບຄອງຢູ່ ພຣະອົງຊົງປາຖະໜາໃຫ້ເຮົາພໍໃຈໃນສິ່ງທີ່ເຮົາມີ ແລະບໍ່ໂລບຫຼືອິດສາບັງບຽດໃນຊັບສິນ ຄວາມສາມາດ ແລະຮູບຮ່າງລັກສະນະຂອງຜູ້ອື່ນ.

ພຣະບັນຍັດຂອງພຣະເຈົ້າເໝືອນໂສ້ເສັ້ນໜຶ່ງ ຖ້າເຮົາທຳລາຍກົດບັນຍັດຂອງພຣະເຈົ້າພຽງຂໍ້ດຽວຫຼືທຳລາຍຫ່ວງຂອງໂສ້ພຽງຫ່ວງດຽວຈະເກີດຫຍັງຂຶ້ນ? ໂສ້ທັງເສັ້ນຍ່ອມຈະຂາດອອກຈາກກັນ! ນີ້ກໍເປັນເຊັ່ນດຽວກັນກັບພຣະຄຳບັນຍັດຂອງພຣະເຈົ້າດ້ວຍ ພຣະອົງຊົງຮຽກຮ້ອງໃຫ້ຄົນເຫຼົ່ານີ້ຖືຮັກສາກົດບັນຍັດທຸກຂໍ້ຂອງພຣະອົງ ບໍ່ດັ່ງນັ້ນພວກທ່ານກໍຈະຕາຍເພາະການບໍ່ເຊື່ອຟັງຂອງຕົນເອງ ກົດບັນຍັດເຫຼົ່ານີ້ສະແດງໃຫ້ເຮົາເຫັນວ່າ ເປັນໄປບໍ່ໄດ້ເລີຍທີ່ເຮົາຈະໄດ້ຮັບການຍອມຮັບຈາກພຣະເຈົ້າດ້ວຍຄວາມພະຍາຍາມຂອງເຮົາເອງ ຖ້າຊົນຊາດອິດສະຣາເອນທັງຫຼາຍເຂົ້າໃຈເລື່ອງນີ້ພວກເຂົາກໍຄົງຈະເຝົ້າຄອຍຖ້າພຣະຜູ້ຊ່ວຍໃຫ້ລອດພົ້ນອົງນັ້ນ ນີ້ເປັນສິ່ງທີ່ຢູ່ໃນພຣະໄທຂອງພຣະເຈົ້າສະເໝີມາ ພຣະອົງຊົງປາຖະໜາທີ່ຈະສະແດງໃຫ້ພວກເຂົາຮູ້ວ່າຄວາມຫວັງພຽງຢ່າງດຽວຂອງເຂົາຈະເກີດຂຶ້ນໂດຍທາງພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະສະເດັດມານັ້ນ.

ຄຽດຮ້າຍຜູ້ໜຶ່ງຜູ້ໃດເຈົ້າກໍໄດ້ກະທຳການຄາດຕະກຳໃນໃຈຂອງເຈົ້າແລ້ວ ຖ້າເຈົ້າຄຽດຮ້າຍຜູ້ອື່ນເຈົ້າກໍມີຄວາມຜິດໃນຖານທີ່ໄດ້ຝ່າຝືນພຣະບັນຍັດຂໍ້ນີ້ແລ້ວ.

*ອົບພະຍົບ 20:14 ຢ່າລ່ວງເກີນຜົວເມຍຜູ້ອື່ນ.*

ໃນພຣະບັນຍັດຂໍ້ນີ້ພຣະເຈົ້າກຳລັງກ່າວວ່າ ເວລາດຽວສຳຫຼັບການມີເພດສຳພັນທີ່ຍອມຮັບໄດ້ນັ້ນ ຄືເວລາຫຼັງຈາກທີ່ເຈົ້າໄດ້ແຕ່ງງານແລ້ວແລະຈະມີເພດສຳພັນກັບຄູ່ສົມລົດຂອງເຈົ້າໄດ້ເທົ່ານັ້ນ ພຣະອົງຊົງອະທິບາຍວ່າຖ້າເຈົ້າມີໃຈຮ້ອນຮົນດ້ວຍຕັນຫາລາຄະກັບບຸກຄົນອື່ນຫຼືອາດຈະເຖິງຂັ້ນທີ່ຈິນຕະນາການວ່າໄດ້ມີເພດສຳພັນກັບບຸກຄົນອື່ນທີ່ບໍ່ແມ່ນຄູ່ສົມລົດຂອງເຈົ້າ ເຈົ້າກໍມີຄວາມຜິດໃນຖານທີ່ໄດ້ຝ່າຝືນພຣະບັນຍັດຂໍ້ນີ້ແລ້ວ.

*ອົບພະຍົບ 20:15 ຢ່າລັກຊັບ*

ພຣະເຈົ້າກ່າວວ່າ ເຈົ້າຈະຕ້ອງບໍ່ເອົາສິ່ງໃດໆ ທີ່ເປັນຂອງຜູ້ອື່ນມາເປັນຂອງຕົນເອງ ພຣະເຈົ້າຊົງໃຫ້ແຕ່ລະຄົນມີສິດທີ່ຈະຮັກສາຊັບສິນຂອງຕົນເອງ ຄົນສ່ວນໃຫຍ່ບໍ່ຄິດວ່າຕົນເອງເປັນໂຈນແຕ່ລອງຖາມຕົວເຮົາເອງເບິ່ງວ່າ "ຂ້ອຍເຄີຍເອົາສິ່ງໃດສິ່ງໜຶ່ງທີ່ມີຄ່າແມ່ນພຽງເລັກນ້ອຍແຕ່ບໍ່ໄດ້ເປັນຂອງຂ້ອຍມາເປັນຂອງຕົນເອງຫຼືບໍ?" ຖ້າເຮົາເຄີຍເຮັດແບບນັ້ນເຮົາກໍມີຄວາມຜິດໃນຖານທີ່ໄດ້ຝ່າຝືນພຣະບັນຍັດຂໍ້ນີ້ແລ້ວ.

*ອົບພະຍົບ 20:16 ຢ່າໃສ່ຮ້າຍປ້າຍສີເພື່ອນມະນຸດ*

ພຣະເຈົ້າຊົງພິພາກສາປັບໂທດການຕົວະແລະການບິດເບືອນຄວາມຈິງຊາຕານເປັນພໍ່ແຫ່ງການຕົວະແລະຜູ້ໜຶ່ງຜູ້ໃດທີ່ເວົ້າ



ເຈົ້າຜູ້ຊົງສ້າງໂລກທັງໂລກ ຜູ້ຊົງສ້າງອາດາມແລະເອວາ ແລະຜູ້ຊົງບັນດານໃຫ້ເກີດນ້ຳຖ້ວມຄັ້ງໃຫຍ່ ກໍຊົງເປັນພຣະເຈົ້າອົງດຽວກັບທີ່ໄດ້ເຮັດໃຫ້ເກີດພາສາຕ່າງໆແລະວັດທະນະທຳທີ່ຍິ່ງໃຫຍ່ຫຼວງຫຼາຍຂອງໂລກ ພຣະອົງຊົງເປັນພຣະເຈົ້າຂອງມະນຸດທຸກໝູ່ເຫຼົ່າແລະເປັນພຣະເຈົ້າຂອງວັດທະນະທຳຕ່າງໆທັງໝົດ.

ຂໍໃຫ້ລອງຈິນຕະນາການເຖິງກິ່ງໄມ້ທີ່ຖືກຫັກອອກຈາກຕົ້ນກິ່ງໄມ້ແຫ້ງຕາຍເພາະຖືກແຍກຈາກຊີວິດທີ່ມັນໄດ້ຮັບຈາກຕົ້ນໄມ້ນັ້ນ, ບໍ່ມີທາງທີ່ຈະນຳກິ່ງໄມ້ທີ່ຕາຍແລ້ວນັ້ນກັບເຂົ້າໄປຕິດລວມກັບຕົ້ນໄມ້ເພື່ອໃຫ້ມັນມີຊີວິດໄດ້ອີກ ມະນຸດເກີດມາໂດຍຖືກແຍກແລະ "ຫຼຸດ"ຈາກແຫຼ່ງຊີວິດຂອງເຮົາຄືພຣະເຈົ້າ ຄົນສ່ວນໃຫຍ່ດຳເນີນຊີວິດດ້ວຍການພະຍາຍາມຫາຫົນທາງທີ່ຈະໃຫ້ຕົນເອງ "ກັບໄປເຊື່ອມຕິດກັບ" ແຫຼ່ງຊີວິດຝ່າຍຈິດວິນຍານອີກຄັ້ງ ຄວາມພະຍາຍາມຂອງຄົນເຫຼົ່ານີ້ອາດຈະເບິ່ງຄືວ່າເຄັ່ງສາສະໜາຫຼາຍ ແຕ່ໂດຍຄວາມເປັນຈິງແລ້ວບໍ່ມີອັນໃດທີ່ເຮົາຈະສາມາດເຮັດດ້ວຍຕົນເອງເພື່ອຈະນຳເຮົາກັບໄປຫາພຣະເຈົ້າໄດ້.

ການບໍ່ເຊື່ອຟັງໄດ້ເຮັດໃຫ້ເຮົາແຕກຫັກຈາກພຣະເຈົ້າ ເຊັ່ນດຽວກັບກິ່ງໄມ້ທີ່ຖືກຫັກອອກຈາກຕົ້ນ ພຣະເຈົ້າຊົງປະຕິເສດເຄື່ອງປົກປິດຂອງອາດາມກັບເອວາ ແລະພຣະເຈົ້າກໍຊົງປະຕິເສດເຄື່ອງບູຊາຂອງກາອີນເພາະຄົນເຫຼົ່ານີ້ພະຍາຍາມຈະເປັນທີ່ຍອມຮັບຂອງພຣະເຈົ້າໂດຍການປະພຶດຂອງຕົນເອງ ມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດຈະກຳນົດວິທີການທີ່ຈະກະທຳໃຫ້ພວກເຂົາທັງຫຼາຍເປັນທີ່ຍອມຮັບຂອງພຣະອົງໄດ້ ມະນຸດທຸກຄົນທີ່ເກີດມາໃນໂລກນີ້ຕ່າງກໍ

ຖືກແຍກອອກຈາກພຣະເຈົ້າເພາະເຫດຈາກການບໍ່ເຊື່ອຟັງແລະການກະບົດຕໍ່ພຣະເຈົ້າ ຢ່າງໃດກໍຕາມພຣະເຈົ້າໄດ້ຊົງຈັດຕຽມວິທີການທີ່ຈະເຮັດໃຫ້ມະນຸດຊາດທັງປວງໄດ້ຮັບການຍອມຮັບຈາກພຣະອົງໄດ້ ແລະຫຼັງຈາກທີ່ພວກເຂົາຕາຍແລ້ວກໍຈະໄດ້ໄປຢູ່ກັບພຣະອົງໃນສະຫວັນຕະຫຼອດນິລັນດອນ ເນື້ອຫາຂອງພຣະຄໍາພີກໍລ້ວນແຕ່ກ່ຽວຂ້ອງກັບເລື່ອງນີ້ທັງໝົດ.



*ອົບພະຍົບ 20:8-11 ຈົ່ງຖືມື້ພຣະແລະຮັກສາມື້ນີ້ເປັນມື້ສັກສິດ, ເຈົ້າມີຫົກມື້ທີ່ຈະເຮັດວຽກຂອງເຈົ້າ ແຕ່ໃນມື້ນີ້ ເຈົ້າເອງພ້ອມດ້ວຍລູກຊາຍຍິງກັບຂ້າທາດແລະສັດລ້ຽງຂອງເຈົ້າຕະຫຼອດທັງຄົນຕ່າງດ້າວທີ່ອາໄສຢູ່ໃນບ້ານເມືອງຂອງເຈົ້າບໍ່ຕ້ອງເຮັດວຽກໃດໆທັງສິ້ນ, ໃນຫົກມື້ນັ້ນເຮົາຄືພຣະຜູ້ເປັນເຈົ້າໄດ້ນິລະມິດສ້າງແຜ່ນດິນໂລກ,ທ້ອງຟ້າ,ທະເລທັງຫຼາຍ,ແລະສັບພະທຸກສິ່ງໃນສາມແຫ່ງນີ້,ແຕ່ໃນມື້ທີ່ເຈັດໄດ້ພັກຜ່ອນ. ສະນັ້ນແຫຼະເຮົາຄືພຣະຜູ້ເປັນເຈົ້າຈຶ່ງອວຍໄຊໃຫ້ພອນມື້ພຣະແລະຕັ້ງໄວ້ເປັນມື້ສັກສິດ.*

ພຣະເຈົ້າກ່າວວ່າວັນທີ 7 ນັ້ນເປັນວັນສໍາລັບພັກຜ່ອນແລະລະລຶກເຖິງພຣະອົງ ເຮົາຄວນຈະກໍານົດວັນໜຶ່ງທີ່ເຮົາຈະແຍກການເຮັດວຽກງານຕາມປົກກະຕິອອກໄປເສຍຕ່າງຫາກເພື່ອເຮົາຈະສາມາດນະມັດສະການແລະສັນລະເສີນພຣະອົງໄດ້ຢ່າງເຕັມທີ່.

*ອົບພະຍົບ 20:12 ຈົ່ງນັບຖືພໍ່ແມ່ຂອງເຈົ້າເພື່ອເຈົ້າຈະມີອາຍຸໝັ້ນຍືນໃນດິນແດນທີ່ເຮົາກໍາລັງຈະມອບໃຫ້ແກ່ເຈົ້ານັ້ນ.*

ພຣະເຈົ້າກ່າວວ່າລູກໆ (ຜູ້ທີ່ອ່ອນກວ່າ) ຈະຕ້ອງເຄົາລົບແລະເຊື່ອຟັງພໍ່ແມ່ຂອງຕົນ, ການເວົ້າໂຕ້ຖຽງ, ການບໍ່ເອົາໃຈໃສ່ການໂຕ້ແຍ້ງ, ການຄຽດ ແລະການວິພາກວິຈານເປັນອາການທີ່ສະແດງຄວາມບໍ່ເຄົາລົບນັບຖື ມີຄົນໃດແດ່ທີ່ໄດ້ເຊື່ອຟັງພຣະບັນຍັດຂໍ້ນີ້ຢ່າງສົມບູນທຸກໆເວລາ ທຸກໆວັນແລະທຸກໆປີ?

*ອົບພະຍົບ 20:13 ຢ່າຂ້າຄົນ*

ພຣະບັນຍັດຂອງພຣະເຈົ້າຂໍ້ນີ້ຄື ຄວາມຄິດທີ່ຍັງບໍ່ໄດ້ເປັນການກະທໍາ ກໍຖືວ່າເປັນຄວາມຜິດດ້ວຍ ພຣະອົງກ່າວວ່າຖ້າເຈົ້າ

ສະນະພາຍນອກ,ເງິນ,ພັນທະນາການ,ການຕໍ່ອາຍຸຫຼືສິ່ງອື່ນໃດຫຼາຍກວ່າພຣະເຈົ້າເຮົາກໍໄດ້ຝ່າຝືນພຣະບັນຍັດຂໍ້ນີ້ແລ້ວ.

*ອົບພະຍົບ 20:4-5 ຢ່າເຮັດຮູບໃດໆສຳລັບຕົນອັນເປັນຕົວແທນສິ່ງທີ່ຢູ່ໃນທ້ອງຟ້າຫຼືແຜ່ນດິນໂລກ ຫຼືຢູ່ໃຕ້ນໍ້າລຸ່ມປັດຕະພີ ຢ່ານົບຫຼືຂາບໄຫວ້ຮູບເຫຼົ່ານັ້ນ ເພາະເຮົາແມ່ນພຣະຜູ້ເປັນເຈົ້າ ອົງເປັນພຣະເຈົ້າຂອງເຈົ້າແລະເຮົາຈະບໍ່ອົດກັ້ນຕໍ່ຄູ່ແຂ່ງໃດໆ ເຮົານຳການລົງໂທດມາສູ່ຜູ້ທີ່ກຽດຊັງເຮົາ ຕະຫຼອດທັງລູກຫຼານຂອງເຂົາເຖິງສາມແລະສີ່ຊົ່ວເຊັ່ນຄົນ.*

ໂດຍເຫດທີ່ພຣະເຈົ້າຊົງເປັນພຣະວິນຍານ ດັ່ງນັ້ນເຮົາຈຶ່ງບໍ່ຮູ້ແທ້ໆເລີຍວ່າພຣະອົງຊົງມີພຣະລັກສະນະຢ່າງໃດ ພຣະເຈົ້າບໍ່ປາຖະໜາທີ່ຈະໃຫ້ເຮົານະມັດສະການຮູບປັ້ນຫຼືຮູບເຄົາລົບໃດໆ ມີພຽງພຣະເຈົ້າເທົ່ານັ້ນທີ່ສົມຄວນໄດ້ຮັບການນະມັດສະການຈາກເຮົາ ພຣະອົງບໍ່ປາຖະໜາທີ່ຈະໃຫ້ເຮົາໄປລຸ້ມຫຼົງຢູ່ກັບສິ່ງອື່ນຫຼືຜູ້ອື່ນ.

*ອົບພະຍົບ 20:7 ຢ່າໃຊ້ຊື່ຂອງເຮົາໄປໃນທາງຊົ່ວຮ້າຍ ເພາະເຮົາຄືພຣະຜູ້ເປັນເຈົ້າ ອົງເປັນພຣະເຈົ້າຂອງເຈົ້າ ຈະເອົາໂທດກັບທຸກໆຄົນທີ່ເຮັດເຊັ່ນນັ້ນ.*

ພຣະເຈົ້າກຳລັງກ່າວບອກໃຫ້ເຮົາຮູ້ວ່າເຮົາຄວນຈະເວົ້າເຖິງພຣະອົງດ້ວຍຄວາມລະມັດລະວັງແລະຢຳເກງ ທຸກວັນນີ້ມະນຸດມັກຈະໃຊ້ພຣະນາມຂອງພຣະອົງໄປໃນທາງທີ່ຜິດຢູ່ເລື້ອຍໆ ແລະຍັງມີຫຼາຍຄົນທີ່ໃຊ້ພຣະນາມຂອງພຣະອົງເປັນຄຳດ່າອີກດ້ວຍ ພຣະອົງເປັນຜູ້ທີ່ສົມຄວນທີ່ຈະໄດ້ຮັບຄວາມເຄົາລົບຢຳເກງແລະການຖວາຍພຣະກຽດຢ່າງສູງສຸດຈາກເຮົາທັງຫຼາຍ.



# ບົດທີ 7

# ອັບຣາຮາມ

ຕະຫຼອດໄລຍະເວລາຫຼາຍຊົ່ວອາຍຸຄົນ ນັບຕັ້ງແຕ່ເຫດການທີ່ຫໍບາເບນໄດ້ຜ່ານພົ້ນໄປແລ້ວນັ້ນພຣະເຈົ້າບໍ່ເຄີຍລືມພຣະສັນຍາຂອງພຣະອົງທີ່ຈະສົ່ງ **"ພຣະຜູ້ຊ່ວຍໃຫ້ລອດພົ້ນ"** ໃຫ້ສະເດັດມາເລີຍ ແຕ່ມີຄົນຈຳນວນພຽງເລັກນ້ອຍໃນແຕ່ລະຊົ່ວອາຍຸຄົນເທົ່ານັ້ນທີ່ເຊື່ອວ່າພຣະເຈົ້າຈະສົ່ງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ມາໃຫ້ ໜຶ່ງໃນຈຳນວນນັ້ນຄື ອັບຣາມ ຊຶ່ງມີຊີວິດຢູ່ປະມານ 4,000 ປີກ່ອນ. ຕໍ່ມາເພິ່ນໄດ້ຖືກປ່ຽນຊື່ເປັນ ອັບຣາຮາມ. ດັ່ງທີ່ໄດ້ເຄີຍກ່າວໄວ້ແລ້ວວ່າ ໂນອາ ມີລູກຊາຍ 3 ຄົນ ຊື່ ເຊມ,ຮາມແລະຢາເຟດ ສ່ວນອັບຣາມນັ້ນເປັນເຊື້ອສາຍຂອງເຊມ ອັບຣາມເຕີບໃຫຍ່ຂຶ້ນໃນເມືອງເອີຊຶ່ງປະຈຸບັນຢູ່ໃນປະເທດອີຣັກ ອັບຣາມໄດ້ແຕ່ງງານກັບນາງຊາຣາຍ ແຕ່ໃນຂະນະນັ້ນທັງຄູ່ຍັງບໍ່ມີລູກນຳກັນ.

*ປະຖົມມະການ 12:1 ພຣະຜູ້ເປັນເຈົ້າໄດ້ບອກອັບຣາມວ່າ "ຈົ່ງອອກໜີຈາກປະເທດຍາດຕິພີ່ນ້ອງແລະບ້ານເກີດເມືອງນອນຂອງເຈົ້າແລະໄປຍັງປະເທດທີ່ເຮົາຈະບອກ".*

ພຣະເຈົ້າກຳລັງຈະເລີ່ມດຳເນີນການຕາມແຜນການຂອງພຣະອົງທີ່ຈະປະກາດໃຫ້ປະຊາຊາດຕ່າງໆໄດ້ຮູ້ກ່ຽວກັບ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະສະເດັດມານັ້ນ ພຣະເຈົ້າຊົງເລືອກອັບຣາມ

ເພາະພຣະອົງຊົງຮູ້ວ່າອັບຣາມຈະຟັງ, ເຊື່ອ ແລະເຊື່ອຟັງພຣະອົງ ແຜນການຂອງພຣະເຈົ້າກໍຄື ໃຫ້ອັບຣາມເດີນທາງອອກຈາກຄອບຄົວແລະປະເທດຂອງເພິ່ນ ນີ້ເປັນຂັ້ນຕອນທີ່ຍິ່ງໃຫຍ່ຫຼາຍ ອັບຣາມບໍ່ສາມາດຈະເບິ່ງແຜນທີ່ຖະໜົນຫຼືການທ່ອງທ່ຽວໃດໆໄດ້ເລີຍ ເພິ່ນບໍ່ຮູ້ຊ້ຳວ່າຈະອອກເດີນທາງໄປໃສ ອັບຣາມຈະຕ້ອງໄວ້ວາງໃຈວ່າພຣະເຈົ້າຈະຊົງນຳເພິ່ນໃນແຕ່ລະວັນ ຈຸດໝາຍປາຍທາງທີ່ອັບຣາມບໍ່ຮູ້ຈັກນັ້ນຄື ແຜ່ນດິນການາອານ ຊຶ່ງກໍຄື ປະເທດອິດສະຣາເອນໃນປະຈຸບັນນີ້ເອງ.

*ປະຖົມມະການ 12:2-3ເຮົາຈະໃຫ້ເຈົ້າມີເຊື້ອສາຍຫຼາຍແລະພວກເຂົາຈະກາຍເປັນຊົນຊາດໃຫຍ່ເຮົາຈະອວຍພອນເຈົ້າແລະໃຫ້ເຈົ້າມີຊື່ສຽງເພື່ອວ່າເຈົ້າຈະໄດ້ເປັນທີ່ພຣະພອນໃຫ້ແກ່ຊົນຊາດອື່ນໆເທິງແຜ່ນດິນໂລກ.ເຮົາຈະອວຍພອນຜູ້ທີ່ອວຍພອນເຈົ້າແຕ່ເຮົາຈະສາບແຊ່ງຜູ້ທີ່ສາບແຊ່ງເຈົ້າແລະໂດຍຜ່ານທາງເຈົ້າເຮົາຈະອວຍພອນຊົນຊາດທັງປວງ.*

**ປະການທຳອິດ** ພຣະເຈົ້າຊົງສັນຍາແກ່ອັບຣາມວ່າເຊື້ອສາຍຂອງເພິ່ນຈະກາຍເປັນຊົນຊາດທີ່ຍິ່ງໃຫຍ່ ຂະນະນັ້ນອັບຣາມ ອາຍຸ 75 ປີແລ້ວ ນີ້ເປັນຂ່າວອັນດີເລີດທີ່ມີມາເຖິງອັບຣາມເພາະໝາຍຄວາມວ່າເພິ່ນຈະມີລູກຊາຍຄົນໜຶ່ງ ພັນລະຍາຂອງອັບຣາມນັ້ນອາຍຸລ່ວງເລີຍໄວທີ່ຈະມີລູກຊາຍແລ້ວ ດັ່ງນັ້ນອັບຣາມຈຶ່ງຮູ້ສຶກປະຫຼາດໃຈວ່າເຫດການນີ້ຈະເກີດຂຶ້ນໄດ້ຢ່າງໃດ ແຕ່ພຣະເຈົ້າຊົງລິດທານຸພາບ ສິ່ງໃດກໍຕາມທີ່ພຣະອົງຊົງສັນຍາ ພຣະອົງກໍສາມາດທີ່ຈະກະທຳໄດ້ ແລະພຣະອົງຈະຊົງກະທຳຕາມທີ່ຊົງສັນຍາໄວ້ຢ່າງແນ່ນອນ ຊຶ່ງເຮົາຈະມາຄົ້ນຫານຳກັນໃນບົດຮຽນຕໍ່ໄປ.



ເຮົາຈະມາອ່ານບາງສ່ວນຂອງພັນທະສັນຍາທີ່ພຣະເຈົ້າໄດ້ຊົງກະທຳກັບຊົນຊາດອິດສະຣາເອນກັນ ພຣະຄຳພີຕອນນີ້ມັກຈະເອີ້ນວ່າ **"ພຣະບັນຍັດ 10 ປະການ"**.



*ອົບພະຍົບ20:3 ຢ່າຂາບໄຫວ້ພະອື່ນແຕ່ຈົ່ງນະມັດສະການເຮົາເທົ່ານັ້ນ*

ພຣະເຈົ້າໄດ້ກ່າວໄວ້ວ່າ ບໍ່ມີຜູ້ອື່ນແລະບໍ່ມີສິ່ງອື່ນໃດທີ່ຈະມາແທນທີ່ພຣະເຈົ້າໄດ້ ເຮົາກ້າເວົ້າໄດ້ບໍ່ວ່າຕັ້ງແຕ່ເດັກນ້ອຍມາຈົນເຖິງຂະນະນີ້ເຮົາໄດ້ຮັກພຣະເຈົ້າດ້ວຍສຸດຈິດສຸດໃຈໃນທຸກໆເລື່ອງຂອງຊີວິດເຮົາສະເໝີ ຂ້ອຍບໍ່ເຊື່ອວ່າຈະມີຜູ້ໜຶ່ງຜູ້ໃດທີ່ກ້າເວົ້າຢ່າງສັດຊື່ວ່າ ເຂົາຮັກພຣະເຈົ້າຫຼາຍກວ່າຜູ້ອື່ນຫຼືສິ່ງອື່ນສະເໝີ ພຣະເຈົ້າຈະຕ້ອງຢູ່ໃນອັນດັບທີ່ສູງທີ່ສຸດໃນຄວາມຄິດຂອງເຮົາແລະເຮົາຈະຕ້ອງສັນເສີນແລະຂອບຄຸນພຣະອົງສຳລັບທຸກສິ່ງ ຖ້າເຮົາໃຫ້ຄວາມສຳຄັນແກ່ຄອບຄົວ ຖານະທາງສັງຄົມ,ໜ້າທີ່ການງານ,ຮູບຮ່າງລັກ

ດ້ວຍຄວາມຄຽດແລະກ່າວວ່າ ພວກເຂົາຢາກຈະກັບໄປຍັງປະເທດອີຢີບຫຼາຍກວ່າ ພວກເຂົາບໍ່ເຊື່ອວ່າພຣະເຈົ້າຈະເບິ່ງແຍງພວກເຂົາໄດ້ ແຕ່ຢ່າງໃດກໍຕາມພຣະເຈົ້າກໍຍັງຊົງຈັດຕຽມນ້ຳແລະອາຫານສຳຫຼັບຄົນເຫຼົ່ານີ້ທັງໆທີ່ພວກເຂົາເອົາແຕ່ຈົ່ມກໍຕາມ.

ເບິ່ງຈາກເຫດການແລ້ວເຮົາຄິດວ່າຄົນເຫຼົ່ານີ້ຈະສາມາດເຊື່ອຟັງພຣະເຈົ້າຢ່າງເຕັມທີ່ໄດ້ຫຼືບໍ່? ບໍ່ໄດ້ເລີຍ ແລ້ວພຣະເຈົ້າເດ່ພຣະອົງຊົງຄິດວ່າຄົນເຫຼົ່ານີ້ຈະສາມາດເຊື່ອຟັງພຣະອົງຢ່າງເຕັມທີ່ຫຼືບໍ່? ພຣະອົງກໍຄົງຈະບໍ່ຄິດເຊັ່ນນັ້ນ ແລ້ວເປັນຫຍັງພຣະອົງຈຶ່ງຊົງເຮັດຂໍ້ຕົກລົງກັບຄົນເຫຼົ່ານີ້ທັງໆທີ່ພຣະອົງເອງກໍຊົງຮູ້ຢູ່ແລ້ວວ່າພວກເຂົາບໍ່ສາມາດຈະເຮັດຕາມເງື່ອນໄຂຕ່າງໆ ໃນຂໍ້ຕົກລົງນີ້ໄດ້.

ພຣະເຈົ້າຊົງປາຖະໜາທີ່ຈະສະແດງໃຫ້ພວກເຂົາເຫັນວ່າພຣະອົງຊົງບໍລິສຸດຫຼາຍພຽງໃດແລະພວກເຂົາຊົ່ວຮ້າຍພຽງໃດພວກເຂົາທັງຫຼາຍເຕັມໄປດ້ວຍຄວາມຈອງຫອງ ພວກເຂົາຄິດວ່າຕົນເອງຄົງຈະສາມາດເຊື່ອຟັງພຣະເຈົ້າໄດ້ສະເໝີແລະຖືຮັກສາພຣະບັນຍັດຂອງພຣະອົງໄດ້ຕະຫຼອດເວລາ ແຕ່ພຣະອົງຊົງປາຖະໜາທີ່ຈະສອນພວກເຂົາໃຫ້ຮູ້ວ່າ ພວກເຂົາບໍ່ສາມາດຈະເປັນທີ່ພໍພຣະໄທຫຼືເປັນທີ່ຍອມຮັບໄດ້ໂດຍການປະພຶດຂອງຕົນເອງ ຄົນເຫຼົ່ານີ້ຈະລະລຶກເຖິງຄວາມບາບຂອງເຂົາໄດ້ໂດຍຄວາມລົ້ມເຫຼວຂອງຕົນເອງ (ເຊັ່ນດຽວກັບສຸພາສິດທີ່ວ່າ ຜິດເປັນຄູນັ້ນເອງ) ພຣະເຈົ້າຊົງປະທານພຣະບັນຍັດເພື່ອຈະສະແດງໃຫ້ເຂົາທັງຫຼາຍເຫັນວ່າພວກເຂົາເປັນຄົນບາບເພື່ອວ່າພວກເຂົາຈະສຳນຶກວ່າພວກເຂົາບໍ່ສາມາດຈະຊ່ວຍຕົນເອງໄດ້ແລະເລີ່ມທີ່ຈະໄວ້ວາງໃຈພຣະເຈົ້າວ່າພຣະອົງຈະສົ່ງພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະສະເດັດມານັ້ນໃຫ້ແກ່ພວກເຂົາ.



**ປະການທີສອງ** ພຣະເຈົ້າກ່າວວ່າຊື່ຂອງອັບຣາມຈະກາຍເປັນຊື່ທີ່ຍິ່ງໃຫຍ່ ທຸກມື້ນີ້ມີໃຜຮູ້ຈັກຊື່ຂອງເພິ່ນແດ່? ແນ່ນອນ! ຊາວຢິວ, ຊາວມຸດສະລິມແລະຊາວຄຣິສຕຽນທຸກຄົນໃນປະຈຸບັນຮູ້ຈັກຊື່ຂອງເພິ່ນແລະຜູ້ຄົນເຫຼົ່ານີ້ເປັນຕົວແທນຂອງປະຊາກອນກວ່າເຄິ່ງໂລກແລ້ວ ແມ່ນເວລາຈະລ່ວງເລີຍຫຼາຍກວ່າ 4,000 ປີແລ້ວ ແຕ່ພຣະເຈົ້າກໍຍັງຄົງຮັກສາພຣະສັນຍາຂອງພຣະອົງທີ່ມີຕໍ່ອັບຣາມວ່າ ຊື່ຂອງເພິ່ນຈະເປັນຊື່ທີ່ຍິ່ງໃຫຍ່.

**ປະການທີສາມ** ພຣະເຈົ້າຊົງສັນຍາວ່າຈະອວຍພອນອັບຣາມແລະຄຸ້ມຄອງເພິ່ນດ້ວຍລິດອຳນາດຂອງພຣະອົງ ອັບຣາມຈະກາຍເປັນບຸກຄົນສຳຄັນຊຶ່ງຈະເຮັດໃຫ້ຜູ້ອື່ນໄດ້ຮັບປະໂຫຍດແລະຄວາມຊ່ວຍເຫຼືອທີ່ຍິ່ງໃຫຍ່ ພຣະເຈົ້າຊົງສັນຍາວ່າພຣະອົງຈະບັນດານໃຫ້ເກີດຄວາມຈະເລີນຮຸ່ງເຮືອງແກ່ຜູ້ທີ່ຊ່ວຍເຫຼືອອັບຣາມແລະຈະນຳຄວາມຊົ່ວຮ້າຍມາສູ່ຜູ້ໜຶ່ງຜູ້ໃດທີ່ປະຕິບັດຕໍ່ອັບຣາມຢ່າງບໍ່ເປັນທຳ.

**ປະການທີສີ່** ພຣະເຈົ້າເຮັດສັນຍາທີ່ສຳຄັນຢ່າງໜຶ່ງຕໍ່ອັບຣາມ ກ່ຽວກັບ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະສະເດັດມານັ້ນຄືພຣະສັນຍາທີ່ວ່າ "ບັນດາຄອບຄົວທົ່ວແຜ່ນດິນໂລກຈະໄດ້ຮັບພຣະພອນຍ້ອນເຈົ້າ" ພຣະສັນຍາຂໍ້ນີ້ລວມໄປເຖິງຄອບຄົວຂອງພວກເຮົາແລະຄອບຄົວຂອງຂ້າພຣະເຈົ້າດ້ວຍ ນີ້ຈະເປັນໄປໄດ້ຢ່າງໃດໃນເມື່ອອັບຣາມຕາຍໄປເປັນເວລາ 4,000 ປີມາແລ້ວ ພຣະສັນຍານີ້ຈະມີຜົນຕໍ່ມະນຸດເຮົາໃນປະຈຸບັນໄດ້ຢ່າງໃດ? ພີ່ນ້ອງຈື່ໄດ້ບໍ່ວ່າ ພຣະເຈົ້າຊົງສັນຍາແກ່ອາດາມແລະເອວາໃນສວນເອເດນວ່າ

ຈະສົ່ງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ອົງໜຶ່ງມາໃຫ້ແກ່ມະນຸດຊາດທັງປວງ? ນັ້ນແຫຼະ ພຣະເຈົ້າຊົງສັນຍາແກ່ອັບຣາມວ່າ ເຊື້ອສາຍຄົນໜຶ່ງຂອງເພິ່ນຈະເປັນ"ພຣະຜູ້ຊ່ວຍໃຫ້ລອດພົ້ນ"ພຣະອົງນັ້ນເອງ ຊຶ່ງຈະເປັນ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະຊົງຊ່ວຍບັນດາຄອບຄົວທັງໝົດທົ່ວແຜ່ນດິນໂລກ ໂດຍການເອົາຊະນະຊາຕານເພື່ອມະນຸດທັງຫຼາຍ.

*ປະຖົມມະການ 12:4-5 ເມື່ອອັບຣາມອາຍຸໄດ້ 75 ປີ ;ເພິ່ນກໍໄດ້ອອກໜີຈາກເມືອງຮາລານ ຕາມທີ່ພຣະຜູ້ເປັນເຈົ້າໄດ້ບອກ ແລະໂລດກໍໄປນຳດ້ວຍ. ອັບຣາມພາຊາຣາຍເມຍຂອງຕົນກັບໂລດຫຼານຊາຍພ້ອມທັງຊັບສິ່ງຂອງແລະພວກຂ້ອຍໃຊ້ທີ່ໄດ້ໃນຮາລານນັ້ນໄປນຳແລະພວກເຂົາໄດ້ພາກັນອອກເດີນທາງມຸ່ງໜ້າໄປຍັງການາອານ.*



ອັບຣາມໄດ້ເຊື່ອແລະເຊື່ອຟັງພຣະເຈົ້າ ພຣະເຈົ້າຈຶ່ງຊົງນຳອັບຣາມໄປຍັງແຜ່ນດິນການາອານຊຶ່ງກໍຄື ປະເທດອິດສະຣາເອນໃນປະຈຸບັນນີ້ນັ້ນເອງ.



# ບົດທີ 12

# ພຣະບັນຍັດ 10 ປະການ

ພຣະເຈົ້າໄດ້ຊົງນຳຊົນຊາດອິດສະຣາເອນໄປເຖິງພູເຂົາຊີນາຍ ຊຶ່ງເປັນສະຖານທີ່ ທີ່ພຣະເຈົ້າຊົງປາກົດພຣະອົງແກ່ໂມເຊໃນແຜ່ນດິນອາຣະເບຍ ພຣະອົງກຳລັງຈະເຮັດພັນທະສັນຍາກັບຊົນຊາດອິດສະຣາເອນ ແຕ່ປະເດັນສຳຄັນກໍຄືຊົນຊາດອິດສະຣາເອນຈະຕ້ອງເຊື່ອຟັງພຣະເຈົ້າຢ່າງສົມບູນ ພັນທະສັນຍາຖືເປັນຂໍ້ຕົກລົງທີ່ເຄັ່ງຄັດ ລະຫວ່າງພຣະເຈົ້າກັບຊົນຊາດອິດສະຣາເອນຊຶ່ງປະຊາຊົນຈະຕ້ອງຂານຮັບໂດຍການກ່າວວ່າ "ເຮົາຈະກະທຳທຸກສິ່ງທີ່ພຣະເຈົ້າໄດ້ກ່າວໄວ້ແລ້ວ".

ຊົນຊາດອິດສະຣາເອນບໍ່ໄດ້ເອົາຈິງເອົາຈັງຂະນະທີ່ພວກເຂົາກ່າວຖ້ອຍຄຳນັ້ນຫຼື? ໃນລະຫວ່າງທີ່ພວກເຂົາກຳລັງເດີນທາງໄປຍັງພູເຂົາຊີນາຍນັ້ນ ນ້ຳແລະອາຫານໄດ້ໝົດລົງ ຖ້າເຮົາໄດ້ເຫັນພຣະເຈົ້າທຳລາຍປະເທດມະຫາອຳນາດທີ່ຍິ່ງໃຫຍ່ຂອງໂລກ (ຄືປະເທດອີຢິບ) ແລະໄດ້ຊົງປະທານອິດສະຫຼະພາບໃຫ້ແກ່ເຮົາ ເຮົາຄິດວ່າພຣະເຈົ້າສາມາດຈະຈັດຕຽມນ້ຳແລະອາຫານໃນຖິ່ນທຸລະກັນດານໄດ້ຫຼືບໍ່? ຖືກຕ້ອງ ພຣະອົງຊົງເຮັດໄດ້ຢ່າງແນ່ນອນ ແຕ່ຊົນຊາດອິດສະຣາເອນກັບບໍ່ໄດ້ຄິດເຊັ່ນນັ້ນ ພວກເຂົາຈົ່ມຕໍ່ວ່າໂມເຊ

ພຣະເຈົ້າໄດ້ຊົງໃຊ້ໃຫ້ໂມເຊນຳຊົນຊາດອິດສະຣາເອນອອກຈາກປະເທດອີຢີບໃນຄືນນັ້ນເອງ ພຣະເຈົ້າຊົງເລີ່ມທີ່ຈະນຳພວກເຂົາກັບໄປຍັງແຜ່ນດິນທີ່ພຣະອົງຊົງສັນຍາໄວ້ແກ່ອັບຣາຮາມ ພຣະເຈົ້າຊົງໃຊ້ເສົາເມກໃນເວລາກາງເວັນ ແລະເສົາໄຟໃນເວລາກາງຄືນ ເພື່ອນຳທາງຊົນຊາດຂອງພຣະອົງ ພວກເຂົາຄົງຈະຍ່າງຫຼົງທາງແນ່ນອນຖ້າພຣະເຈົ້າບໍ່ໄດ້ນຳທາງພວກເຂົາ ພຣະອົງຊົງຮັກຊົນຊາດອິດສະຣາເອນ ດັ່ງນັ້ນພຣະອົງຈຶ່ງຊົງເບິ່ງແຍງພວກເຂົາຢ່າງດີ ພຣະເຈົ້າຊົງຄຸ້ມຄອງຊົນຊາດອິດສະຣາເອນດ້ວຍເຫດຜົນ 2 ປະການ ປະການທຳອິດ ກໍເພື່ອວ່າ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຍິ່ງໃຫຍ່ນັ້ນຈະສາມາດກຳເນີດມາໃນໂລກໄດ້ ປະການທີສອງ ພຣະອົງໄດ້ຊົງຝາກພຣະຄຳຂອງພຣະອົງໄວ້ໃນຄວາມເບິ່ງແຍງຂອງຊົນຊາດອິດສະຣາເອນເພື່ອຈະໃຫ້ພວກເຂົາມອບພຣະຄຳເຫຼົ່ານັ້ນໃຫ້ແກ່ຊາວໂລກຕໍ່ໄປ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 11 ໃນໜ້າ 81 *



*ປະຖົມມະການ 12:7 ພຣະຜູ້ເປັນເຈົ້າໄດ້ປະກົດແກ່ອັບຣາມແລະບອກເພິ່ນວ່າ "ນີ້ແມ່ນດິນແດນທີ່ເຮົາຈະມອບໃຫ້ແກ່ເຊື້ອສາຍຂອງເຈົ້າ" ແລ້ວຢູ່ໃນບ່ອນນີ້ອັບຣາມໄດ້ສ້າງແທ່ນບູຊາແທ່ນໜຶ່ງຖວາຍແກ່ພຣະຜູ້ເປັນເຈົ້າ ອົງທີ່ໄດ້ປະກົດແກ່ຕົນ.*

ພຣະເຈົ້າຊົງສັນຍາຕໍ່ອັບຣາມວ່າ ພຣະອົງຈະຊົງປະທານແຜ່ນດິນການາອານແກ່ເຊື້ອສາຍຂອງອັບຣາມ ອັບຣາມຈຶ່ງສ້າງແທ່ນບູຊາຈຳເພາະພຣະເຢໂຮວາ ເພື່ອສະແດງອອກເຖິງການສຳນຶກໃນພຣະຄຸນ ແລະເພື່ອຕອບສະໜອງຕໍ່ພຣະສັນຍາດັ່ງກ່າວ ອັບຣາມຮູ້ຈັກວິທີການທີ່ຖືກຕ້ອງທີ່ຈະເຂົ້າເຖິງພຣະເຈົ້າແລະໄດ້ຮັບການຍອມຮັບຈາກພຣະອົງ ອັບຣາມຖວາຍເຄື່ອງບູຊາດ້ວຍເລືອດເທິງແທ່ນບູຊາຕາມຢ່າງທີ່ພຣະເຈົ້າໄດ້ສະແດງແກ່ອາດາມແລະເອວາ ເຄື່ອງບູຊາຂອງອັບຣາມເປັນຫຼັກຖານໄດ້ຢ່າງຊັດເຈນວ່າອັບຣາມຄຳນຶງເຖິງຄວາມຈຳເປັນທີ່ຈະຕ້ອງມີຕົວແທນ ມາຊົດໃຊ້ໂທດແຫ່ງຄວາມຕາຍສຳລັບຕົນເອງ ອັບຣາມເຊື່ອພຣະເຈົ້າເໝືອນທີ່ອາດາມ ອາເບັນ ແລະໂນອາ ໄດ້ເຊື່ອມາແລ້ວ ແຕ່ປະຊາຊົນຊຶ່ງອາໄສຢູ່ໃນເມືອງເອີກາບໄຫວ້ບູຊາຮູບເຄົາລົບ ຄົນເຫຼົ່ານີ້ບໍ່ໄດ້ໄວ້ວາງໃຈ, ບໍ່ໄດ້ຮັກແລະບໍ່ໄດ້ເຊື່ອຟັງພຣະເຈົ້າ ແມ່ນແຕ່ພໍ່ຂອງອັບຣາມກໍເປັນຜູ້ທີ່ບູຊາຮູບເຄົາລົບດ້ວຍ.

ບັນພະບຸລຸດຂອງເຮົາຈິງໃຈທີ່ຈະຫັນເສຍຈາກພຣະເຈົ້າ ຄົນເຫຼົ່ານີ້ໄດ້ບູຊາສິ່ງຕ່າງໆທີ່ມະນຸດສ້າງຂຶ້ນ ແທນທີ່ຈະນະມັດສະການພຣະເຈົ້າ ແມ່ນວ່າມະນຸດຈະເຕັມໄປດ້ວຍການບໍ່ເຊື່ອຟັງໃນທຸກໆເລື່ອງ ແຕ່ພຣະເຈົ້າກໍບໍ່ປະຖິ້ມແຜນການຂອງພຣະອົງທີ່ຈະຊ່ວຍ

ກູ້ມະນຸດຊາດໃຫ້ລອດພົ້ນຈາກອຳນາດຂອງຊາຕານແລະການລົງໂທດນິລັນດອນນັ້ນ ການທີ່ພຣະເຈົ້າຊົງນຳອັບຣາມອອກມາຈາກປະເທດຂອງເພິ່ນ ເປັນຂັ້ນຕອນຕໍ່ໄປສຳລັບແຜນການຂອງພຣະອົງທີ່ຈະນຳພາມະນຸດຊາດໃຫ້ລອດພົ້ນຈາກມານຊາຕານແລະຄວາມຕາຍ.

ຄືນໜຶ່ງພຣະເຈົ້າຊົງນຳອັບຣາມອອກຈາກປະຕູເຕັນພັກອາໄສຂອງເພິ່ນແລະໄດ້ບອກໃຫ້ອັບຣາມຫຼຽວຂຶ້ນໄປແລະລອງເບິ່ງວ່າເພິ່ນຈະສາມາດນັບດວງດາວເທິງທ້ອງຟ້າໄດ້ຫຼືບໍ່? ພຣະເຈົ້າຊົງສັນຍາແກ່ອັບຣາມກ່ອນທີ່ເພິ່ນຈະມີລູກດ້ວຍຊ້ຳວ່າ ພົງພັນຂອງອັບຣາມຈະມີຫຼວງຫຼາຍເໝືອນດວງດາວເທິງທ້ອງຟ້າ.

*ປະຖົມມະການ 15:5-6 ພຣະຜູ້ເປັນເຈົ້າພາເພິ່ນຍ່າງອອກໄປຂ້າງນອກແລະບອກວ່າ "ຈົ່ງນັບດວງດາວເທິງທ້ອງຟ້າທີ່ເຈົ້າເຫັນເບິ່ງດູ. ເຈົ້າຈະມີເຊື້ອສາຍຫຼວງຫຼາຍເໝືອນດັ່ງດວງດາວເຫຼົ່ານັ້ນ". ອັບຣາມໄວ້ວາງໃຈໃນພຣະຜູ້ເປັນເຈົ້າ;ແລະດ້ວຍເຫດນັ້ນພຣະອົງຈຶ່ງພໍໃຈແລະຮັບວ່າເພິ່ນເປັນຄົນຊອບທຳ.*

ຄຳ 3 ຄຳ ໃນປະໂຫຍກສຸດທ້າຍເປັນຄຳທີ່ເຕັມໄປດ້ວຍຄວາມໝາຍ ຄຳວ່າ **ຄວາມຊອບທຳ** ເປັນຄຳທີ່ອ້າງອີງເຖິງຄວາມສົມບູນພ້ອມທຸກຢ່າງຂອງພຣະເຈົ້າ ພຣະເຈົ້າຊົງປາສະຈາກຕຳນິຊົງເປັນທີ່ເຄົາລົບສັກກາລະ ແລະຊົງບໍລິສຸດ ບໍ່ມີໃຜສົມບູນພ້ອມທຸກຢ່າງ ດັ່ງນັ້ນຈຶ່ງບໍ່ມີໃຜຊອບທຳຈຳເພາະພຣະພັກພຣະເຈົ້າ ແລະນີ້ເປັນບັນຫາໃຫຍ່ສຳລັບມະນຸດຊາດທຸກຄົນ ບໍ່ມີໃຜສາມາດຈະຢູ່



ເຈົ້າ ພວກເຂົາກໍຄົງຈະກະທຳຕາມໃຈປາຖະໜາຂອງຕົນເອງເໝືອນຢ່າງກາອິນແລະເອຊາວ ລູກກົກຂອງເຂົາຍ່ອມຈະຕ້ອງຕາຍຢ່າງແນ່ນອນເພາະເຂົາປະຕິເສດທີ່ຈະເຊື່ອພຣະເຈົ້າ.

ແລ້ວຈະເກີດຫຍັງຂຶ້ນຖ້າຄົນອີຢິບຄົນໜຶ່ງຍ່າງຜ່ານມາແລະໄດ້ຍິນເຖິງສິ່ງທີ່ພຣະເຈົ້າຈະຊົງກະທຳແລະເວົ້າຂຶ້ນວ່າ "ພຣະເຈົ້າທັງຫຼາຍຂອງເຮົາເປັນພະທຽມເທັດ ຊົນຊາດອິດສະຣາເອນນະມັດສະການພຣະເຈົ້າທ່ຽງແທ້ທີ່ມີພຽງພຣະອົງດຽວເທົ່ານັ້ນ ຂ້ອຍຢາກຈະໃຫ້ພຣະເຈົ້າອົງນັ້ນມາເປັນພຣະເຈົ້າຂອງຂ້ອຍ" ແລະຍັງໄດ້ປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ຖ້າເປັນເຊັ່ນນັ້ນພຣະເຈົ້າຈະສະເດັດຜ່ານເຮືອນຂອງພວກເຂົາໄປແລະພວກເຂົາຈະລອດພົ້ນຈາກໄພພິບັດນີ້ຫຼືບໍ່? ລອດໄດ້ແນ່ນອນ ເພາະພວກເຂົາເຊື່ອພຣະເຈົ້າແລ້ວ.

ລູກກົກຫົວປີຂອງກະສັດຟາໂຣໄດ້ສິ້ນພະຊົນໃນໄພພິບັດເທື່ອນີ້ ກະສັດຟາໂຣຈຶ່ງເອີ້ນໂມເຊໃຫ້ມາເຂົ້າເຝົ້າໃນຄືນນັ້ນເອງແລະໄດ້ກ່າວສັ່ງໃຫ້ໂມເຊນຳຊົນຊາດອິດສະຣາເອນອອກໄປຈາກປະເທດອີຢິບ ຄົນເຫຼົ່ານັ້ນທຸກຄົນທີ່ຕໍ່ຕ້ານພຣະເຈົ້າຈະພົບຄວາມປະລາໄຊ, ອາດາມແລະເອວາພົບກັບຄວາມປະລາໄຊ ກາອິນກໍປະລາໄຊ ຄົນໃນສະໄໝໂນອາແລະຊາວເມືອງໂຊໂດມແລະເມືອງໂກໂມຣາກໍປະລາໄຊເຊັ່ນດຽວກັນ ບັດນີ້ຊົນຊາດອີຢິບພົບຄວາມປະລາໄຊແລ້ວ ມະນຸດທຸກຄົນມີທາງເລືອກຂອງຕົນເອງ ແຕ່ຄົນເຫຼົ່ານັ້ນທຸກຄົນທີ່ໄດ້ກ່າວເຖິງນີ້ຕັດສິນໃຈເລືອກທາງທີ່ຜິດ ພຣະເຈົ້າຊົງອວຍພອນຜູ້ທີ່ເຊື່ອພຣະອົງແລະເຝົ້າລໍຄອຍຖ້າ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະສະເດັດມານັ້ນ.

ຜົນກະທົບທີ່ຈະເກີດຂຶ້ນໃນກໍລະນີທີ່ທຸກຄອບຄົວໃນແຂວງຂອງເຮົາມີຄົນຕາຍ ແຕ່ພຣະຄຳພີບໍ່ໄດ້ກ່າວໄວ້ເຊັ່ນນັ້ນ ພຣະຄຳພີໄດ້ກ່າວໄວ້ຢ່າງໜ້າຢ້ານທີ່ສຸດເທົ່າທີ່ຈະເປັນໄປໄດ້ ຄືໄດ້ບັນທຶກໄວ້ວ່າ ຄອບຄົວຂອງຊາວອີຢິບທຸກຄອບຄົວທົ່ວປະເທດມີຄົນຕາຍ ຊຶ່ງກໍເປັນໄປໄດ້ວ່າຖ້າປູ່, ພໍ່ ແລະລູກຊາຍເປັນລູກກົກທຸກຄົນແລະອາໄສຢູ່ໃນເຮືອນຫຼັງດຽວກັນທັງ 3 ຄົນກໍຄົງຈະຕາຍໄປພ້ອມໆ ກັນເລີຍ ທ່ານສາມາດຈະຈິນຕະນາການເຖິງຄວາມຫາຍຍະນະເຊັ່ນນີ້ໄດ້ບໍ່ວ່າຈະມີລັກສະນະຮຸນແຮງພຽງໃດ?.

ເຫດການນີ້ສະແດງໃຫ້ເຫັນພາບວ່າ ພຣະຜູ້ຊ່ວຍໃຫ້ລອດພົ້ນທີ່ຈະສະເດັດມານັ້ນຈະຊົງຊ່ວຍມະນຸດໃຫ້ລອດພົ້ນຈາກການພິພາກສາແລະການຖືກແຍກອອກຈາກພຣະເຈົ້າໄດ້ຢ່າງໃດ. ເຫດການດັ່ງກ່າວຍັງເປັນທີ່ຮູ້ຈັກກັນວ່າເປັນເທດສະການປັດສະຄາອີກດ້ວຍ ເພາະວ່າພຣະເຈົ້າໄດ້ສະເດັດຜ່ານແຕ່ລະເຮືອນທີ່ມີເລືອດທາຢູ່ແລະທຸກຄົນໄດ້ຮັບຄວາມປອດໄພ.

ຈະເກີດຫຍັງຂຶ້ນຖ້າມີຄົນໃດຄົນໜຶ່ງກ່າວວ່າ "ນີ້ເປັນເລື່ອງໂງ່ແທ້ໆທີ່ຈະໃຫ້ຂ້າລູກແກະທີ່ດີທີ່ສຸດໂຕໜຶ່ງຂອງຂ້ອຍ ຂ້ອຍມີແກະພິການແກ່ໆໂຕໜຶ່ງ ຊຶ່ງມັນກໍຄົງຈະໃຊ້ໄດ້ຄືກັນ" ຫຼືຖ້າມີອີກຄົນໜຶ່ງເວົ້າຂຶ້ນມາວ່າ "ບໍ່ມີທາງດອກທີ່ຈະໃຫ້ຂ້ອຍເອົາເລືອດມາທາເສົາປະຕູໃຫ້ເປິເປື້ອນແບບນັ້ນ ຂ້ອຍຈະເອົາເລືອດໄປເທຖິ້ມທີ່ພື້ນນອກປະຕູຫຼັງບ້ານນັ້ນແຫຼະ" ພຣະເຈົ້າຈະສະເດັດຜ່ານເຮືອນນັ້ນໄປຫຼືບໍ? ບໍ່ເລີຍ! ຄົນເຫຼົ່ານີ້ອາດຈະກະທຳອັນໃດລົງໄປດ້ວຍຄວາມຕັ້ງໃຈທີ່ດີ ແຕ່ນັ້ນໝາຍຄວາມວ່າພວກເຂົາບໍ່ໄດ້ປະຕິບັດຕາມຄຳສັ່ງຂອງພຣະ



ກັບພຣະເຈົ້າເທິງສະຫວັນໄດ້ນອກຈາກພວກເຂົາຈະເປັນຄົນທີ່ຊອບທຳເທົ່ານັ້ນ ແລ້ວຄົນໜຶ່ງຄົນໃດຈະສາມາດເປັນຄົນຊອບທຳຈຳເພາະພຣະເຈົ້າໄດ້ຢ່າງໃດ? ພຣະຄຳພີຂໍ້ນີ້ຍັງບອກເຮົາດ້ວຍວ່າເຮົາສາມາດຈະເປັນຄົນຊອບທຳໄດ້ຢ່າງໃດ.

ຄຳວ່ານັບວ່າ ໝາຍເຖິງການນຳໄປລົງໄວ້ໃນບັນຊີເມື່ອຄົນໜຶ່ງຄົນໃດຝາກເງິນຂອງລາວໄວ້ໃນທະນາຄານ ທະນາຄານກໍຈະນຳເງິນນັ້ນໄປລົງໄວ້ໃນບັນຊີຂອງລາວ ດັ່ງເມື່ອອັບຣາມ "ຝາກ" ຄວາມເຊື່ອຂອງເພິ່ນໄວ້ໃນພຣະເຈົ້າ ພຣະເຈົ້າກໍຊົງນຳຄວາມເຊື່ອຂອງເພິ່ນ "ໄປລົງບັນຊີ" ເປັນຄວາມຊອບທຳ ນີ້ໝາຍຄວາມວ່າເມື່ອອັບຣາມເຊື່ອພຣະເຈົ້າ ພຣະເຈົ້າກໍຊົງຖືວ່າອັບຣາມເປັນຄົນຊອບທຳ ພຣະເຈົ້າຊົງປົກຄຸມອາດາມແລະເອວາດ້ວຍໜັງສັດມາແລ້ວສັນໃດ ພຣະອົງກໍຊົງປົກຄຸມອັບຣາມດ້ວຍຄວາມຊອບທຳຂອງພຣະອົງເອງສັນນັ້ນ.

ຄຳທີສາມຄືຄຳວ່າ **ເຊື່ອ** ຫຼາຍຄັ້ງທີ່ຄຳວ່າຄວາມເຊື່ອ, ຄວາມເຊື່ອຖື ແລະຄວາມໄວ້ວາງໃຈ ສາມາດນຳມາໃຊ້ແທນກັນໄດ້ ຄວາມເຊື່ອທີ່ແທ້ຈິງນັ້ນຕັ້ງຢູ່ເທິງພື້ນຖານຂອງຂໍ້ເທັດຈິງ ບໍ່ແມ່ນຕັ້ງຢູ່ເທິງພື້ນຖານຂອງຄວາມຮູ້ສຶກໃດໆ ເມື່ອເຮົານັ່ງເທິງຕັ່ງ ເຮົາກໍໄວ້ວາງໃຈວ່າຕັ່ງໜ່ວຍນັ້ນສາມາດຈະຮັບນ້ຳໜັກຂອງເຮົາໄດ້ ນັ້ນຄືເຮົາໄດ້ສັງເກດແລ້ວວ່າຕັ່ງໜັ້ນຄົງແຂງແຮງດີ ດັ່ງນັ້ນ ເຮົາຈຶ່ງນັ່ງພັກເທິງຕັ່ງໜ່ວຍນັ້ນໂດຍໃຫ້ຕັ່ງຮັບນ້ຳໜັກຂອງເຮົາໄວ້ຢ່າງເຕັມທີ່ ອັບຣາມວາງຄວາມເຊື່ອຂອງເພິ່ນໄວ້ເທິງຂໍ້ເທັດຈິງທີ່ວ່າ ສິ່ງທີ່ພຣະເຈົ້າຊົງສັນຍາໄວ້ຈະຕ້ອງເກີດຂຶ້ນຢ່າງແນ່ນອນ ພຣະເຈົ້າກ່າວວ່າ "ເຈົ້າຈະ

ມີລູກຊາຍຄົນໜຶ່ງ" ພຣະເຈົ້າບໍ່ສາມາດຈະກ່າວຄຳຕົວະໄດ້ ແລະພຣະອົງຊົງລິດທານຸພາບທັງໝົດ ເພາະສະນັ້ນອັບຣາມຈະມີລູກຊາຍຄົນໜຶ່ງຢ່າງແນ່ນອນ.

ຄວາມເຊື່ອສາມາດສະແດງໃຫ້ເຫັນພາບໄດ້ດັ່ງຕໍ່ໄປນີ້ມີເພື່ອນສອງຄົນກຳລັງລົມກັນກ່ຽວກັບເລື່ອງໄປປີນຜາ ເພື່ອນຄົນໜຶ່ງຖາມເພື່ອນອີກຄົນໜຶ່ງວ່າ ເຈົ້າເຊື່ອບໍ່ວ່າເຊືອກຈະດຶງຕົວເຈົ້າໄວ້ບໍ່ໃຫ້ຕົກລົງໄປທີ່ພື້ນ, ເພື່ອນອີກຄົນໜຶ່ງກໍຕອບວ່າ "ຂ້ອຍເຊື່ອຢ່າງນັ້ນແນ່ນອນ!" ເພື່ອນຄົນທຳອິດຈຶ່ງບອກວ່າ "ເອົາລະ ໃຫ້ພວກເຮົາໄປປີນຜາກັນເທາະ!" ຖ້າເພື່ອນຄົນທີ່ສອງຮູ້ສຶກລັງເລແລະເລີ່ມຈະຫາຂໍ້ແກ້ຕົວທີ່ຈະບໍ່ໄປຮ່ວມສະໜຸກນຳກັນ ນີ້ຄວນເປັນທີ່ໜ້າສົງໄສວ່າລາວເຊື່ອຢ່າງນັ້ນຈິງຫຼືບໍ່? ເຖິງແມ່ນວ່າລາວຈະກ່າວຢືນຢັນເຊັ່ນນັ້ນດ້ວຍປາກຂອງລາວ ແຕ່ທີ່ສຳຄັນກວ່ານັ້ນກໍຄືລາວຍັງຄົງມີຄວາມສົງໄສເອືອບແຝງຢູ່ໃນໃຈຂອງລາວ. ຄວາມເຊື່ອມີຜົນຕໍ່ການກະທຳຂອງເຮົາ ຄວາມເຊື່ອຂອງອັບຣາມກໍຫຼາຍເກີນກວ່າການແຕ່ພຽງກ່າວຢືນຢັນດ້ວຍປາກເທົ່ານັ້ນ ອັບຣາມຍອມເອົາຊີວິດ ຊື່ສຽງແລະການກະທຳເຂົ້າໄປສ່ຽງກັບການຕັດສິນໃຈຂອງເພິ່ນ ອັບຣາມໄດ້ກະທຳໃນສິ່ງທີ່ພຣະເຈົ້າຊົງປາຖະໜາໃຫ້ເພິ່ນກະທຳເພາະອັບຣາມເຊື່ອພຣະເຈົ້າ.

ເມື່ອພຣະເຈົ້າຊົງທອດພຣະເນດເບິ່ງອັບຣາມ ພຣະອົງບໍ່ໄດ້ເຫັນຄົນທີ່ຊົ່ວຮ້າຍແລະບໍ່ເຊື່ອຟັງ ອັບຣາມກໍບໍ່ໄດ້ສົມບູນທຸກຢ່າງແຕ່ເພາະວ່າເພິ່ນເຊື່ອພຣະເຈົ້າ ພຣະເຈົ້າຈຶ່ງຖືວ່າເພິ່ນເປັນຄົນຊອບທຳ. ຜູ້ໜຶ່ງຜູ້ໃດຈະສາມາດໄດ້ຮັບຄວາມຊອບທຳທີ່ເທົ່າທຽມກັບພຣະເຈົ້າໄດ້ຢ່າງໃດ? ອັບຣາມເຫັນວ່າຄຳຕອບນັ້ນງ່າຍແທ້ໆ ນັ້ນຄືອັບຣາມ ເຊື່ອພຣະເຈົ້າ.



ນັ້ນ ພຣະເຈົ້າຊົງສັນຍາວ່າເມື່ອພຣະອົງຫຼຽວເຫັນເລືອດເທິງເຮືອນໃດພຣະອົງຈະສະເດັດຜ່ານເຮືອນນັ້ນໂດຍບໍ່ປ່ອຍໃຫ້ໄພພິບັດເຂົ້າໄປຂ້າລູກກົກຂອງຄົນໃນເຮືອນນັ້ນ.

*ອົບພະຍົບ 12:29 ແລ້ວຕອນທ່ຽງຄືນພຣະຜູ້ເປັນເຈົ້າກໍໄດ້ຂ້າລູກຊາຍກົກທັງໝົດໃນອີຢີບ ຕັ້ງແຕ່ລູກຊາຍກົກຂອງກະສັດຟາໂຣຜູ້ທີ່ຈະຄອງບັນລັງຈົນເຖິງລູກຊາຍກົກຂອງນັກໂທດຜູ້ທີ່ຖືກຄຸມຂັງຢູ່ໃນຄຸກມືດ. ລູກສັດຫົວປີກໍໄດ້ຖືກຂ້າເຊັ່ນກັນ.*



ທຸກເຮືອນທີ່ບໍ່ມີເລືອດທາໄວ້ທີ່ປະຕູ ລູກກົກໃນເຮືອນນັ້ນກໍລົ້ມຕາຍລົງ ແຕ່ທຸກເຮືອນທີ່ມີເລືອດທາໄວ້ ລູກກົກກໍມີຊີວິດຢູ່ຕໍ່ໄປລອງຈິນຕະນາການເບິ່ງວ່າຖ້າທຸກຄອບຄົວໃນໝູ່ບ້ານຂອງເຮົາມີຄົນຕາຍຫຼືຖ້າທຸກຄອບຄົວໃນເມືອງຂອງເຮົາມີຄົນຕາຍລອງຄິດເຖິງ

ທີ່ເລືອດຂອງມັນຈະຕ້ອງຖືກປ່ອຍໃຫ້ໄຫຼອອກມາ ການກະທຳເຊັ່ນນີ້ກໍເພື່ອຈະເຕືອນສະຕິຊາວອິດສະຣາເອນທັງຫຼາຍວ່າ ໂທດສຳລັບຄວາມຜິດບາບນັ້ນຄືຄວາມຕາຍ ອີຊາກໄດ້ຮັບການຊ່ວຍໃຫ້ລອດຊີວິດໂດຍຄວາມຕາຍຂອງແກະໂຕຜູ້ທີ່ປາສະຈາກຄວາມຜິດມາແລ້ວບັດນີ້ຊົນຊາດອິດສະຣາເອນທັງຫຼາຍກໍຈະໄດ້ຮັບການຊ່ວຍໃຫ້ລອດໂດຍຄວາມຕາຍຂອງລູກແກະທີ່ປາສະຈາກຄວາມຜິດດ້ວຍເຊັ່ນກັນ

*ອົບພະຍົບ 12:7 ຈົ່ງໃຫ້ປະຊາຊົນເອົາເລືອດບາງສ່ວນ ທາໃສ່ໄມ້ຂອບວົງປະຕູຂ້າງຂວາແລະຂ້າງເທິງ.*



ພຣະເຈົ້າໄດ້ກ່າວສັ່ງໃຫ້ຊາວອິດສະຣາເອນໃຊ້ອ່າງຮອງເລືອດຂອງມັນໄວ້ ພວກເຂົາຈະຕ້ອງເອົາກິ່ງໄມ້ນ້ອຍໆຈຸ່ມລົງໄປໃນເລືອດແລ້ວນຳໄປທາທີ່ເສົາປະຕູທັງ2 ຂ້າງແລະທາເໜືອປະຕູເຮືອນທີ່ພວກເຂົາຈະກິນລູກແກະໃນຄືນນັ້ນດ້ວຍ ເລືອດຂອງລູກແກະທີ່ທາໄວ້ເທິງເສົາປະຕູຈະຊ່ວຍຊີວິດລູກກົກໃຫ້ລອດພົ້ນຈາກໄພພິບັດ



ພຣະເຈົ້າຊົງບັນທຶກພຶດຕິກຳການບໍ່ເຊື່ອຟັງທຸກຢ່າງທີ່ຄົນໜຶ່ງຄົນໃດໄດ້ກະທຳໃນຊີວິດຂອງລາວແລະຝາກໄວ້ໃນ "ບັນຊີ" ສ່ວນຕົວຂອງລາວ ພຣະເຈົ້າຊົງເປັນຜູ້ຊອບທຳ ດັ່ງນັ້ນ ຫາກບຸກຄົນໃດປາຖະໜາທີ່ຈະໄດ້ຢູ່ກັບພຣະອົງໃນສະຫວັນ ບຸກຄົນຜູ້ນັ້ນກໍຈຳເປັນທີ່ຈະຕ້ອງມີຄວາມຊອບທຳຂອງພຣະເຈົ້າ ບັນຫາກໍຄືມະນຸດທຸກຄົນມີພຶດຕິກຳຂອງການບໍ່ເຊື່ອຟັງຫຼວງຫຼາຍບັນທຶກໄວ້ໃນບັນຊີຂອງພວກເຂົາ ແຕ່ເມື່ອຜູ້ໃດຜູ້ໜຶ່ງເຊື່ອພຣະເຈົ້າ ພຣະອົງກໍຈະຊົງນຳຄວາມຊອບທຳຂອງພຣະອົງ "ໄປລົງໄວ້ໃນ" ບັນຊີຂອງຜູ້ນັ້ນ ບັດນີ້ພຣະເຈົ້າບໍ່ໄດ້ເຫັນການບໍ່ເຊື່ອຟັງຖືກບັນທຶກໄວ້ອີກຕໍ່ໄປ ແຕ່ກັບຊົງເຫັນແຕ່ພຽງຄວາມຊອບທຳຂອງພຣະອົງເອງເທົ່ານັ້ນ ໃນມູມມອງຂອງພຣະເຈົ້າກໍເບິ່ງຄືວ່າບຸກຄົນຜູ້ນັ້ນ ບໍ່ເຄີຍກະທຳພຶດຕິກຳຂອງການບໍ່ເຊື່ອຟັງແມ່ນແຕ່ເທື່ອດຽວເລີຍ ດັ່ງນັ້ນບຸກຄົນຜູ້ນັ້ນຈຶ່ງໄດ້ໄປຢູ່ກັບພຣະເຈົ້າໃນສະຫວັນເປັນນິດນິລັນດອນຕະຫຼອດໄປ.

*ປະຖົມມະການ 17:5,15 ເຈົ້າຈະບໍ່ມີຊື່ຕໍ່ໄປວ່າອັບຣາມ;ແຕ່ເຈົ້າຈະມີຊື່ໃໝ່ວ່າອັບຣາຮາມ ເພາະເຮົາກຳລັງໃຫ້ເຈົ້າເປັນບັນພະບຸລຸດຂອງຫຼາຍໆຊົນຊາດ ເຮົາຈະໃຫ້ເຈົ້າມີເຊື້ອສາຍຢ່າງຫຼວງຫຼາຍແລະບາງຄົນໃນເຊື້ອສາຍນັ້ນຈະເປັນເຈົ້າກະສັດ. ເຈົ້າຈະມີເຊື້ອສາຍຢ່າງຫຼວງຫຼາຍຈົນກາຍເປັນຊົນຊາດຕ່າງໆ...*

ພຣະເຈົ້າຊົງປ່ຽນຊື່ຂອງເພິ່ນເປັນ ອັບຣາຮາມ ເພາະພຣະອົງໄດ້ຊົງສັນຍາວ່າເພິ່ນຈະເປັນພໍ່ຂອງພົງພັນຕ່າງໆ ເປັນຈຳນວນຫຼວງຫຼາຍ ນອກຈາກນີ້ພຣະເຈົ້າຍັງຊົງປ່ຽນຊື່ຂອງນາງຊາຣາຍເປັນຊາຣາ ຊຶ່ງໝາຍເຖິງ **"ແມ່ຂອງບັນດາປະຊາຊາດທັງຫຼາຍ"** ການທີ່

ອັບຣາຮາມກັບນາງຊາຣາຈະມີລູກຊາຍຄົນໜຶ່ງນັ້ນເບິ່ງຄືວ່າຈະເປັນໄປບໍ່ໄດ້ເລີຍ ອັບຣາຮາມຄົງຈະອາຍຸໄດ້ 100 ປີ ຂະນະທີ່ນາງຊາຣາກໍຄົງຈະມີອາຍຸໄດ້ 90 ປີແລ້ວ ຢ່າງໃດກໍຕາມພຣະສັນຍາດັ່ງກ່າວບໍ່ໄດ້ເພິ່ງພາອາໄສສະພາວະອັນອ່ອນແອຂອງມະນຸດ ແຕ່ເປັນພຣະເຈົ້າເອງທີ່ຊົງກະທຳພຣະສັນຍານີ້ແລະພຣະອົງຊົງມີລິດທານຸພາບສູງສຸດ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 7 ໃນໜ້າ 77 *



*ອົບພະຍົບ 12:3,5 ຈົ່ງໃຫ້ຄຳແນະນຳເຫຼົ່ານີ້ແກ່ຊຸມນຸມປະຊາຊົນອິດສະຣາເອນທັງໝົດວ່າ: ໃນມື້ທີ່ສິບຂອງເດືອນນີ້ໃຫ້ຊາຍທຸກຄົນໃນແຕ່ລະຄອບຄົວ ເລືອກເອົາລູກແກະຫຼືລູກແບ້ເຖິກໂຕໜຶ່ງໄວ້. ລູກແກະຫຼື,ລູກແບ້ທີ່ຈະເລືອກເອົານັ້ນຈະຕ້ອງເປັນໂຕເຖິງອາຍຸໜຶ່ງປີ ແລະເປັນສັດທີ່ມີສຸຂະພາບດີບໍ່ມີຕຳນິໃດໆທັງສິ້ນ.*

ເຫດການນີ້ຈະສຳຄັນຫຼາຍຈົນກະທັ້ງຊາວອິດສະຣາເອນໄດ້ກຳນົດປະຕິທິນຂອງພວກເຂົາຕາມເຫດການນີ້ດ້ວຍ ໂດຍທີ່ເຫດການດັ່ງກ່າວຈະເປັນມື້ເລີ່ມຕົ້ນປີໃໝ່ຂອງຊົນຊາດອິດສະຣາເອນນັ້ນເອງ ຊຶ່ງຈະເປັນວັນຍຸດທີ່ທັບຊ້ອນກັນຢູ່ ຄືມື້ຂຶ້ນປີໃໝ່ແລະວັນປະກາດອິດສະຫຼະພາບທີ່ສະເຫຼີມສະຫຼອງໃນວັນດຽວກັນນັ້ນເອງ ຫົວໜ້າຄອບຄົວຂອງແຕ່ລະຄອບຄົວຈະຕ້ອງເລືອກລູກແກະຫຼືລູກແບ້ມາໂຕໜຶ່ງ ໂດຍທີ່ລູກແກະຫຼືລູກແບ້ໂຕນັ້ນຈະຕ້ອງປາສະຈາກຕຳນິ ພີ່ນ້ອງຈື່ແກະໂຕຜູ້ທີ່ຖືກນຳມາຖວາຍເປັນເຄື່ອງບູຊາແທນອີຊາກໄດ້ບໍ? ແກະໂຕຜູ້ໂຕນັ້ນເຂົາຂອງມັນກ້ຽວຕິດຢູ່ກັບພຸ່ມໄມ້ ຮ່າງກາຍຂອງມັນບໍ່ໄດ້ຮັບບາດເຈັບເລີຍ ເປັນຫຍັງພຸ່ມໄມ້ຈຶ່ງຖືກກ້ຽວຕິດເຂົາຂອງມັນໄວ້? ນັ້ນກໍເປັນເພາະວ່າພຣະເຈົ້າຊົງເປັນຜູ້ທີ່ສົມບູນພ້ອມທຸກຢ່າງ ດັ່ງນັ້ນພຣະອົງຈຶ່ງຊົງຕ້ອງການໃຫ້ໃຊ້ເຄື່ອງບູຊາທີ່ສົມບູນດ້ວຍ ພຣະອົງບໍ່ເຄີຍຍອມຮັບເຄື່ອງບູຊາທີ່ເປັນສັດປ່ວຍຫຼືມີບາດແຜເລີຍ.

*ອົບພະຍົບ 12:6 ແລ້ວໃນຕອນແລງຂອງວັນທີສິບສີ່ຂອງເດືອນໃຫ້ຊຸມນຸມປະຊາຊົນອິດສະຣາເອນທັງໝົດພາກັນຂ້າສັດຂອງພວກຕົນ.*

ລູກແກະຈະຖືກນຳມາເກັບຈົນກວ່າຈະເຖິງວັນທີ່ພຣະເຈົ້າໄດ້ກຳນົດໄວ້ ແລະຈະຖືກນຳມາຂ້າເສຍ ລູກແກະຈະຕ້ອງຕາຍໂດຍ

ຊາວອິດສະຣາເອນໜ້າຈະໄດ້ຮັບຄວາມທຸກຍາກຈາກໄພພິບັດເຫຼົ່ານີ້ດ້ວຍ ແຕ່ເພາະຄວາມຮັກແລະພຣະເມດຕາຂອງພຣະເຈົ້າໄດ້ຄຸ້ມຄອງພວກເຂົາໄວ້ ດັ່ງນັ້ນໄພພິບັດທັງຫຼາຍຈຶ່ງບໍ່ມີຜົນກະທົບຕໍ່ພວກອິດສະຣາເອນ ເຖິງວ່າພວກເຂົາຈະອາໄສຢູ່ໃກ້ໆ ໃນປະເທດດຽວກັນເອງ ພຣະເຈົ້າໄດ້ຊົງຄຸ້ມຄອງຊາວອິດສະຣາເອນໄວ້ຈາກໄພພິບັດທັງຫຼາຍ ເພື່ອວ່າກະສັດຂອງປະເທດອີຢີບຈະສຳນຶກໄດ້ວ່າພຣະເຈົ້າຂອງຊົນຊາດອິດສະຣາເອນນັ້ນຊົງເປັນພຣະເຈົ້າທ່ຽງແທ້ຜູ້ຊົງພຣະຊົນຢູ່ ພຣະເຈົ້າຊົງຮູ້ຢູ່ສະເໝີວ່າກະສັດຟາໂຣຈະດື້ດຶງແລະປະຕິເສດທີ່ຈະປົດປ່ອຍຊົນຊາດອິດສະຣາເອນ ພຣະເຈົ້າໄດ້ຊົງບອກແກ່ໂມເຊວ່າ ພາຍຫຼັງຈາກທີ່ໄພພິບັດຕໍ່ໄປນີ້ຜ່ານພົ້ນໄປແລ້ວກະສັດຟາໂຣ ຈະຍອມປ່ອຍຊົນຊາດອິດສະຣາເອນໃຫ້ເປັນອິດສະຫຼະໃນທີ່ສຸດ.

*ອົບພະຍົບ 11:1 ຕໍ່ມາພຣະຜູ້ເປັນເຈົ້າໄດ້ກ່າວຕໍ່ໂມເຊວ່າ "ເຮົາຈະນຳການລົງໂທດອີກຢ່າງໜຶ່ງເທົ່ານັ້ນມາຍັງກະສັດແຫ່ງອີຢີບ ແລະປະຊາຊົນຂອງລາວ ຫຼັງຈາກນັ້ນລາວຈະປ່ອຍພວກເຈົ້າໄປ ຕາມຄວາມຈິງແລ້ວ ລາວຈະໄລ່ພວກເຈົ້າທັງໝົດໃຫ້ອອກໄປຈາກທີ່ນີ້.*

ພຣະເຈົ້າຊົງບອກໂມເຊວ່າ ໄພພິບັດສຸດທ້າຍຈະນຳຄວາມຕາຍມາສູ່ລູກກົກທຸກຄົນຂອງຊົນຊາດອີຢີບແລະຊົນຊາດອິດສະຣາເອນດ້ວຍ ຢ່າງໃດກໍຕາມພຣະເຈົ້າໄດ້ຊົງປະທານຄຳສັ່ງໄວ້ເພື່ອວ່າຜູ້ໜຶ່ງຜູ້ໃດທີ່ປະຕິບັດຕາມຄຳສັ່ງເຫຼົ່ານີ້ກໍຈະໄດ້ຮັບການປົກປ້ອງຄຸ້ມຄອງໃຫ້ພົ້ນຈາກໄພພິບັດ.



# ບົດທີ 8

# ພຣະເຈົ້າຊົງທຳລາຍເມືອງໂຊໂດມແລະໂກໂມຣາ

ເຮົາຈະໄດ້ຮຽນຮູ້ປະເດັນສຳຄັນໆ ບາງປະເດັນໃນບົດຮຽນນີ້ ຍົກຕົວຢ່າງເຊັ່ນ: ພຣະເຈົ້າຊົງຫ່ວງໃຍຫຼືບໍ່ ຫາກມະນຸດເລືອກທີ່ຈະດຳເນີນຊີວິດຢ່າງບໍ່ມີສິນລະທຳ? ພຶດຕິກຳຂອງພວກຮັກຮ່ວມເພດເປັນຄວາມບາບຈິງຫຼືບໍ່? ພຣະຄຳພີໄດ້ໃຫ້ຄຳຕອບສຳລັບເລື່ອງເຫຼົ່ານີ້ໄວ້ຢ່າງຊັດເຈນເດັດຂາດ.

ອັບຣາຮາມເປັນຄົນຮັ່ງມີແລະມີຄົນຮັບໃຊ້ ມີ ງົວ, ຄວາຍ, ແກະແລະແບ້ຈຳນວນຫຼວງຫຼາຍ ເພິ່ນໄດ້ນຳເອົາທຸກສິ່ງທີ່ເພິ່ນຄອບຄອງຢູ່ໄປຍັງແຜ່ນດິນການາອານກັບເພິ່ນດ້ວຍ ຄົງເປັນໄປບໍ່ໄດ້ທີ່ເຮົາຈະສາມາດເຂົ້າໃຈທຸກສິ່ງທຸກຢ່າງທີ່ກ່ຽວຂ້ອງກັບການເດີນທາງໃນລັກສະນະດັ່ງກ່າວໄດ້ ການຕັດສິນໃຈຂອງອັບຣາຮາມທີ່ຈະກະທຳຕາມພຣະເຈົ້ານັ້ນບໍ່ໄດ້ເກີດຈາກຄວາມປາຖະໜາທີ່ຢາກຈະພະຈົນໄພ ແຕ່ເປັນເພາະເພິ່ນເຊື່ອພຣະເຈົ້າ ອັບຣາຮາມເຊື່ອຟັງພຣະເຈົ້າ ເຖິງວ່າເພິ່ນຈະຕ້ອງພົບກັບຄວາມບໍ່ສະດວກສະບາຍແລະແຮງກົດດັນທາງສັງຄົມຊຶ່ງມີຢູ່ຮອບດ້ານກໍຕາມ ອັບຣາຮາມໄວ້ວາງໃຈທີ່ຈະມອບຄອບຄົວທັງໝົດຂອງເພິ່ນກັບຊັບສົມບັດທຸກຢ່າງ ແລະຊື່

ສຽງໄວ້ພາຍໃຕ້ການເບິ່ງແຍງແລະຄຸ້ມຄອງຂອງພຣະເຈົ້າ ສ່ວນໂລດ ຊຶ່ງເປັນຫຼານຊາຍຂອງອັບຣາຮາມນັ້ນກໍໄດ້ເດີນທາງໄປກັບພວກ ເພິ່ນດ້ວຍ.

*ປະຖົມມະການ 13:5-7 ໂລດຜູ້ທີ່ຮ່ວມເດີນທາງໄປກັບອັບຣາຮາມນັ້ນ ກໍມີຝູງແກະ,ຝູງແບ້,ຝູງງົວ ຕະຫຼອດທັງຄົນໃນຄອບຄົວແລະຂ້າໃຊ້ຈຳ ນວນຫຼາຍຄືກັນ. ສະນັ້ນຈຶ່ງບໍ່ມີທົ່ງຫຍ້າພຽງພໍສຳລັບລ້ຽງສັດເພື່ອໃຫ້ ພວກເຂົາຢູ່ຮ່ວມກັນໄດ້ ເພາະຕ່າງຝ່າຍຕ່າງກໍ່ມີສັດຫຼາຍ.ເມື່ອເປັນ ເຊັ່ນນີ້ຄົນລ້ຽງສັດຂອງອັບຣາຮາມແລະໂລດຈຶ່ງຜິດຖຽງກັນ. (ຊາວ ການາອານແລະຊາວເປລີສີກໍຍັງຢູ່ໃນດິນແດນນັ້ນ).*

ໂລດເອງກໍຮັ່ງມີເໝືອນຢ່າງອັບຣາຮາມຊຶ່ງເປັນລຸງຂອງເພິ່ນ ຄືນທັງສອງຄອບຄອງຝູງແກະ ແລະ ງົວຄວາຍ ເປັນຈຳນວນຫຼວງ ຫຼາຍ ໃນບໍ່ຊ້າກໍມີບັນຫາເກີດຂຶ້ນລະຫວ່າງຄົນລ້ຽງແກະ ແບ້ ແລະ ງົວຄວາຍຂອງທັງສອງຝ່າຍ.

*ປະຖົມມະການ 13: 8-11 ແລ້ວອັບຣາຮາມກໍ່ເວົ້າກັບໂລດວ່າ: "ເຮົາ ທັງສອງເປັນພີ່ນ້ອງກັນ ຂໍຢ່າໃຫ້ຄົນຂອງເຮົາຕ້ອງຜິດຖຽງກັນເລີຍ. ສະນັ້ນ ເຮົາແຍກທາງກັນເສຍ. ຈົ່ງເລືອກເອົາທີ່ດິນທີ່ເຈົ້າຕ້ອງການ. ຖ້າເຈົ້າຫາກໄປທາງໜຶ່ງຂ້ອຍກໍ່ຈະໄປທາງອື່ນ" . ໂລດຫຼຽວໄປຮອບໆ ຈຶ່ງເຫັນວ່າທົ່ງຮາບພຽງຂອງແມ່ນ້ຳຈໍແດນທັງໝົດຈົນເຖິງເມືອງໂຊ ອາ ມີນ້ຳຫຼາຍເໝືອນດັ່ງສວນຂອງພຣະຜູ້ເປັນເຈົ້າຫຼືດິນແດນຂອງປະ ເທດອີຢິບ. (ກ່ອນທີ່ພຣະຜູ້ເປັນເຈົ້າໄດ້ທຳລາຍເມືອງໂຊໂດມ ກັບ ໂກມາຣາ ທົ່ງຮາບພຽງນີ້ອຸດົມສົມບູນຫຼາຍ). ດັ່ງນັ້ນໂລດຈຶ່ງຕັດສິນໃຈ*



ທຽມເທັດແລະໃຫ້ຮູ້ວ່າພຣະເຈົ້າທ່ຽງແທ້ຊົງເປັນພຣະຜູ້ສ້າງທຸກສິ່ງ ສາລະພັດ ດັ່ງນັ້ນຈຶ່ງມີແຕ່ພຣະເຈົ້າເທົ່ານັ້ນທີ່ສົມຄວນຈະໄດ້ຮັບ ການນະມັດສະການແຕ່ພຽງຜູ້ດຽວ.

ພຣະເຈົ້າຊົງບັນດານໃຫ້ເກີດໄພພິບັດ 9 ຢ່າງຂຶ້ນໃນປະ ເທດເອຢິບເພື່ອຈະສະແດງໃຫ້ຊາວອີຢິບໄດ້ເຫັນເຖິງລິດທານຸພາບ ອັນຍິ່ງໃຫຍ່ຂອງພຣະອົງ ໄພພິບັດຢ່າງທຳອິດ ພຣະເຈົ້າຊົງປ່ຽນ ນ້ຳໃຫ້ເປັນເລືອດ ພຣະເຈົ້າໄດ້ຊົງກະທຳໃຫ້ພະອົງໜຶ່ງຂອງພວກ ເຂົາເສື່ອມເສຍໄປ ແລ້ວວົງຈອນແຫ່ງໄພພິບັດກໍເລີ່ມຕົ້ນຂຶ້ນຄືການ ທີ່ພຣະເຈົ້າຊົງເຕືອນກະສັດຟາໂຣໃຫ້ຍອມປົດປ່ອຍຊົນຊາດອິດສະ ຣາເອນເປັນອິດສະຫຼະ ກະສັດຟາໂຣຈະສັ່ງວ່າບໍ່! ແລ້ວພຣະເຈົ້າກໍ ຈະຊົງນຳໄພພິບັດຢ່າງໜຶ່ງມາເຖິງຊົນຊາດອີຢິບ ໂດຍທີ່ໄພພິບັດ ແຕ່ລະຢ່າງກໍຈະເນັ່ນໄປເຖິງກະສັດຂອງຊົນຊາດອີຢິບເທື່ອລະອົງໆ ເລື້ອຍໄປ ໄພພິບັດລຳດັບຖັດໄປພຣະເຈົ້າໄດ້ສົ່ງຝູງກົບແລ້ວກໍຝູງ ຮີ້ນ ຫຼັງຈາກນັ້ນກໍສົ່ງຝູງເຫຼືອບມາຍັງປະເທດອີຢິບ ແລ້ວພຣະເຈົ້າ ກໍຊົງບັນດານໃຫ້ຝູງມ້າ, ຝູງງົວ, ຝູງແກະ, ຝູງອູດແລະຝູງລາຂອງ ຊາວອີຢິບເປັນພະຍາດລະບາດຮ້າຍແຮງແລະຕາຍໄປ ຕໍ່ມາພຣະ ເຈົ້າຊົງບັນດານໃຫ້ຊາວອີຢິບທຸກຄົນເປັນຕຸ່ມຝີຮ້າຍ ໄພພິບັດນີ້ຕາມ ມາດ້ວຍພາຍຸລູກເຫັບທີ່ທຳລາຍລ້າງຢ່າງຮຸນແຮງ ແລ້ວກໍມີໄພພິ ບັດຈາກຝູງຕັກແຕນ ຈາກນັ້ນກໍເປັນຊ່ວງເວລາ 3 ມື້ມືດມິດໃນ ທຸກໆບ່ອນທີ່ມີຊາວອີຢິບອາໄສຢູ່ ກະສັດຟາໂຣແລະຊາວອີຢິບບໍ່ ສາມາດຊ່ວຍຕົນເອງໃຫ້ລອດພົ້ນຈາກໄພພິບັດທີ່ຮ້າຍແຮງເຫຼົ່ານີ້ ໄດ້ ບັນດາພະທຽມເທັດຂອງພວກເຂົາກໍບໍ່ສາມາດຈະຊ່ວຍພວກ ເຂົາໃຫ້ລອດພົ້ນໄດ້ເລີຍ.

ແລະມີລູກຫຼາຍຄົນ. ປະມານ 40 ປີຕໍ່ມາ ພຣະເຈົ້າກໍສັ່ງບອກໃຫ້ໂມເຊກັບໄປຍັງປະເທດອີຢີບແລະໃຫ້ນຳຊົນຊາດອິດສະຣາເອນເຂົ້າໄປໃນແຜ່ນດິນການາອານຊຶ່ງເປັນແຜ່ນດິນທີ່ພຣະເຈົ້າໄດ້ຊົງສັນຍາໄວ້ແກ່ອັບຣາຮາມ ພຣະເຈົ້າຊົງຮູ້ວ່າກະສັດຟາໂຣຄົງຈະບໍ່ຍອມປົດປ່ອຍຂ້າທາດຊາວອິດສະຣາເອນໃຫ້ໄດ້ຮັບອິດສະຫຼະພາບ ກະສັດຟາໂຣຈະຕ້ອງຖືກໂນ້ມນ້າວຈົນເກີດຄວາມເຊື່ອໝັ້ນວ່າພຣະເຈົ້າອົງນີ້ຊົງເປັນພຣະເຈົ້າທ່ຽງແທ້ຜູ້ຊົງພຣະຊົນຢູ່ ກ່ອນທີ່ພຣະອົງຈະຍອມປົດປ່ອຍພວກເຂົາໃຫ້ໄດ້ຮັບອິດສະຫຼະພາບ.

*ອົບພະຍົບ 5:1, 2 ຕໍ່ມາໂມເຊກັບອາໂລນໄດ້ເຂົ້າໄປພົບກະສັດແຫ່ງອີຢີບແລະກ່າວວ່າ "ພຣະຜູ້ເປັນເຈົ້າອົງເປັນພຣະເຈົ້າຂອງຊາດອິດສະຣາເອນບອກວ່າ ຈົ່ງປ່ອຍປະຊາຊົນຂອງເຮົາໄປຍັງຖິ່ນແຫ້ງແລ້ງກັນດານ ເພື່ອພວກເຂົາຈະໄດ້ຈັດພິທີຖວາຍບູຊາແກ່ເຮົາ "ກະສັດແຫ່ງອີຢີບຈຶ່ງຖາມວ່າ" ພຣະຜູ້ເປັນເຈົ້າແມ່ນໃຜ? ເປັນຫຍັງເຮົາຈະຕ້ອງຟັງແລະປ່ອຍປະຊາຊົນພວກນີ້ໄປ."*

ກະສັດຟາໂຣຊົງປະຕິເສດທີ່ຈະເຊື່ອຟັງພຣະບັນຊາຂອງພຣະເຈົ້າທີ່ສັ່ງຜ່ານມາທາງໂມເຊ ກະສັດຟາໂຣບໍ່ຮູ້ຈັກພຣະເຈົ້າຜູ້ຊົງເປັນພຣະຜູ້ສ້າງແຜ່ນດິນໂລກທັງໝົດ ຊາວອີຢີບນະມັດສະການສິ່ງທີ່ຖືກສ້າງຂຶ້ນມາ ແທນທີ່ຈະນະມັດສະການພຣະຜູ້ສ້າງນັ້ນ ຄົນເຫຼົ່ານີ້ນະມັດສະການແມ່ນ້ຳໄນ, ດວງອາທິດ, ດວງຈັນແລະສັດຕ່າງໆນາໆຊະນິດ ພວກເຂົາມີພະຫຼວງຫຼາຍແລະນະມັດສະການແມ່ນແຕ່ກະສັດຟາໂຣເປັນພະເຈົ້າອົງໜຶ່ງດ້ວຍ ພຣະເຈົ້າຊົງປາຖະໜາທີ່ຈະສອນກະສັດຟາໂຣໃຫ້ຮູ້ວ່າຮູບເຄົາລົບທັງຫຼາຍນັ້ນເປັນພະ



*ເລືອກເອົາທົ່ງຮາບພຽງຂອງແມ່ນ້ຳຈໍແດນທັງໝົດເປັນບ່ອນຢູ່ຂອງຕົນແລະເຄື່ອນຂະບວນມຸ່ງໜ້າໄປທາງທິດຕາເວັນອອກ. ສອງຄົນແຍກທາງກັນກໍເປັນດັ່ງນີ້ແຫຼະ.*

ໂລດກໍຫຼຽວໄປອ້ອມຮອບແລະຕັດສິນໃຈເລືອກທາງເລືອກຂອງຕົນເອງ ເພິ່ນໄດ້ເລືອກທົ່ງຮາບທີ່ມີຫຍ້າຂຽວກະຈີ ຊຶ່ງເພິ່ນຄິດວ່າໜ້າຈະເປັນສິ່ງທີ່ດີທີ່ສຸດສຳລັບຝູງສັດຂອງເພິ່ນ ໂລດບໍ່ຄິດເຖິງສິ່ງທີ່ດີທີ່ສຸດສຳລັບຄອບຄົວຂອງຕົນເອງ ແລະບໍ່ໄດ້ຄຳນຶງວ່າການກະທຳເຊັ່ນນີ້ຈະມີຜົນກະທົບຕໍ່ຄວາມສຳພັນຂອງເພິ່ນກັບພຣະເຈົ້າຢ່າງໃດ, ໂລດຄິດແຕ່ພຽງເລື່ອງທີ່ຈະຫາເງິນໃຫ້ໄດ້ຫຼາຍຂຶ້ນເທົ່ານັ້ນມີສິ່ງຊົ່ວຮ້າຍຫຼາຍສິ່ງເກີດຂຶ້ນກັບໂລດເພາະຍ້ອນການເລືອກຂອງເພິ່ນ.

ເຮົາຈຳເປັນຕ້ອງລະມັດລະວັງກ່ຽວກັບທາງເລືອກຂອງເຮົາທີ່ເຮົາໄດ້ຕັດສິນໃຈເລືອກລົງໄປນັ້ນ ໃນສັງຄົມຂອງເຮົາ ເຮົາມັກຖືກກົດດັນຢູ່ສະເໝີທີ່ຈະໃຫ້ເຮົາຕັດສິນໃຈເລືອກທາງເລືອກຢ່າງເຊັ່ນເຮົາຈະສາມາດຫາເງິນເພີ່ມຂຶ້ນໄດ້ຢ່າງໃດ? ເຮົາຈະຊື້ອັນໃດດີ? ເຮົາຈະອາໄສຢູ່ທີ່ໃດ? ເຮົາຈະເຮັດຫຍັງໃນມື້ອື່ນ? ໃນຂະນະທີ່ປະເດັນທີ່ເປັນແກ່ນແທ້ຂອງຊີວິດນັ້ນບໍ່ຄ່ອຍຈະມີໃຜຄຳນຶງເຖິງກັນເລີຍ....ແລ້ວເລື່ອງຄວາມສຳພັນຂອງເຮົາກັບພຣະເຈົ້າ? ລູກຫຼານຂອງເຮົາຈະຮູ້ເລື່ອງພຣະເຈົ້າໄດ້ຢ່າງໃດ? ພຣະຈົ້າຊົງບັນທຶກໄວ້ໃນພຣະຄຳຂອງພຣະອົງກ່ຽວກັບເຮົາໄວ້ຢ່າງໃດ? ແລ້ວເລື່ອງໂທດທັນແຫ່ງຄວາມຕາຍຊຶ່ງເປັນຜົນມາຈາກການບໍ່ເຊື່ອຟັງຂອງເຮົາທີ່ມີຕໍ່ພຣະເຈົ້າ?

*ປະຖົມການ 13:12,13 ອັບຣາຮາມອາໄສຢູ່ໃນການາອານ, ສ່ວນໂລດນັ້ນຕັ້ງກົ່ນຖານຢູ່ທ່າມກາງເມືອງຕ່າງໆ ໃນທົ່ງຮາບພຽງໃກ້ກັບເມືອງໂຊໂດມ ເຊິ່ງປະຊາຊົນໃນເມືອງນີ້ຊົ່ວຊ້າ ແລະ ເຮັດບາບຕໍ່ສູ້ພຣະເຈົ້າ.*

ອັບຣາຮາມຍັງຄົງອາໄສຢູ່ ເທິງພູເຂົາແລະໂນນພູທີ່ເປັນໂຂດຫີນແລະມີຄວາມອຸດົມສົມບູນໜ້ອຍກວ່າ, ສ່ວນໂລດນັ້ນໄດ້ຍ້າຍລົງໄປອາໄສຢູ່ທົ່ງຮາບພຽງ ຊຶ່ງມີຄວາມອຸດົມສົມບູນຫຼາຍ. ໃນສາຍຕາຂອງຄົນຈຳນວນຫຼາຍເບິ່ງຄືວ່າອັບຣາຮາມເປັນ“ຜູ້ສູນເສຍ” ໃນການແບ່ງເຂດແດນນີ້ ແຕ່ໃນບໍ່ຊ້າ “ ຜູ້ສູນເສຍ” ຈະກັບກາຍເປັນໂລດນັ້ນເອງ.

ເມືອງສອງເມືອງຄື: ເມືອງໂຊໂດມແລະເມືອງໂກໂມຣາ ຕັ້ງຢູ່ເທິງທົ່ງຮາບພຽງ ທັງສອງເມືອງເປັນເມືອງທີ່ຊົ່ວຊ້າປ່າເຖື່ອນຫຼາຍ, ຊາວເມືອງຊຶ່ງອາໄສຢູ່ບ່ອນນັ້ນບໍ່ຢາກຈະຮູ້ຈັກພຣະເຈົ້າ ຄົນພວກນີ້ຄິດເຖິງແຕ່ຕົນເອງແລະສິ່ງຊົ່ວຮ້າຍທີ່ພວກເຂົາກະທຳເທົ່ານັ້ນ ໂລດໄດ້ເລືອກສິ່ງທີ່ເບິ່ງຄືວ່າຈະດີທີ່ສຸດສຳລັບຕົນເອງ ແຕ່ການກະທຳເຊັ່ນນັ້ນກໍເຮັດໃຫ້ເພິ່ນກ້າວຫ່າງອອກຈາກພຣະເຈົ້າແລະມຸ່ງໜ້າໄປສູ່ສະຖານທີ່ຊຶ່ງອັນຕະລາຍ ເພາະມີແຕ່ຄວາມຊົ່ວຮ້າຍຢ່າງຍິ່ງ.

ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງຕະຫຼອດເວລາແລະພຣະອົງຊົງຮູ້ທຸກສິ່ງສາລະພັດ ພຣະເຈົ້າຊົງຮູ້ເຖິງຄວາມຊົ່ວຊ້າຂອງຊາວເມືອງໂຊໂດມແລະເມືອງໂກໂມຣາ ເຖິງວ່າຊາວເມືອງນັ້ນຈະບໍ່ສົນໃຈພຣະເຈົ້າກໍຕາມ ມະນຸດອາດຈະເລືອກທີ່ຈະປະຕິເສດພຣະ



ຊາຕານຍັງໄດ້ດົນໃຈໃຫ້ກະສັດຟາໂຣບັນຊາໃຫ້ນາງໝໍຕຳແຍຂອງພວກອິດສະຣາເອນຂ້າເດັກນ້ອຍເພດຊາຍທຸກຄົນທີ່ເກີດມາ ແຕ່ພວກເຂົາປະຕິເສດທີ່ຈະເຊື່ອຟັງກະສັດຟາໂຣແລະໄດ້ເລືອກທີ່ຈະໄວ້ວາງໃຈພຣະເຈົ້າ.

ແມ່ຊາວອິດສະຣາເອນຄົນໜຶ່ງພະຍາຍາມທີ່ຈະປົກປ້ອງເດັກນ້ອຍເພດຊາຍຂອງນາງໄວ້ຈາກການຖືກຂ້າໂດຍການລັກເອົາລູກຊາຍຂອງນາງໄປໃສ່ໄວ້ໃນກະຕ່າໜ່ວຍໜຶ່ງ ແລ້ວປ່ອຍໃຫ້ລອຍອອກໄປຕາມແມ່ນ້ຳໂດຍໄດ້ອະທິຖານໃຫ້ມີຄົນມາພົບແລະປົກປ້ອງຄຸ້ມຄອງລາວໄວ້ ພຣະເຈົ້າຊົງນຳທາງໃຫ້ກະຕ່າໜ່ວຍນັ້ນໄປຢຸດຢູ່ບ່ອນທີ່ລູກຂອງກະສັດຟາໂຣກຳລັງອາບນ້ຳ ນາງໄດ້ຫຼຽວເຫັນເດັກນ້ອຍຢູ່ພາຍໃນກະຕ່ານັ້ນກໍຊົງຕັດສິນໃຈທີ່ຈະນຳໄປລ້ຽງດູເປັນລູກຂອງນາງເອງ ນາງຊົງເອີ້ນຊື່ຂອງເດັກນ້ອຍນັ້ນວ່າ **ໂມເຊ.** ພຣະເຈົ້າຊົງມີແຜນການທີ່ຈະໃຊ້ໂມເຊໃຫ້ນຳຊົນຊາດອິດສະຣາເອນອອກຈາກການເປັນຂ້າທາດ ພຣະເຈົ້າຊົງຮູ້ວ່າໂມເຊຈະປອດໄພໃນວັງຂອງກະສັດຟາໂຣຫຼາຍກວ່າຢູ່ທີ່ອື່ນ ພຣະອົງຍັງຊົງຮູ້ອີກວ່າໂມເຊຈະໄດ້ຮຽນຮູ້ຫຼາຍສິ່ງທີ່ຈຳເປັນສຳລັບເພິ່ນທີ່ຈະຕ້ອງຮຽນຮູ້ເພື່ອກະທຳພັນທະກິດໃນຖານະຜູ້ນຳຊົນຊາດຂອງພຣະອົງໃນອະນາຄົດ.

ໂມເຊໄດ້ເຕີບໃຫຍ່ຂຶ້ນເປັນຊາຍໜຸ່ມ. ວັນໜຶ່ງໂມເຊເຫັນຊາວອີຢິບຄົນໜຶ່ງກຳລັງທຸບຕີຂ້າທາດຊາວອິດສະຣາເອນ ໂມເຊຈຶ່ງຂ້າຊາຍຊາວອີຢິບຜູ້ນັ້ນແລະໄດ້ໜີໄປຫຼົບຊ່ອນໃນດິນແດນອາລະເບຍ ແລ້ວໂມເຊກໍເປັນຄົນລ້ຽງແກະຢູ່ບ່ອນນັ້ນ. ໂມເຊໄດ້ແຕ່ງງານ

*ອົບພະຍົບ 1:8,11 ຕໍ່ມາໄດ້ມີກະສັດຄົນໃໝ່ຂຶ້ນປົກຄອງອີຢິບ. ກະສັດຜູ້ນີ້ບໍ່ຮູ້ເລື່ອງຫຍັງກ່ຽວກັບໂຢເຊບເລີຍ. ເພິ່ນໄດ້ປະກາດຕໍ່ປະຊາຊົນຂອງຕົນວ່າ "ເບິ່ງດູ! ຄົນອິດສະຣາເອນນັບມື້ນັບຫຼາຍຂຶ້ນ ແລະມີກຳລັງພົນເຂັ້ມແຂງ ພວກເຂົາເປັນອັນຕະລາຍຂົ່ມຂູ່ພວກເຮົາ ໃນກໍລະນີເກີດເສິກຂຶ້ນພວກເຂົາອາດເຂົ້າຂ້າງສັດຕູແລະຫັນມາຕໍ່ສູ້ພວກເຮົາແລະອອກໜີໄປຈາກປະເທດ.ບັດນີ້ພວກເຮົາຕ້ອງຫາວິທີກຳຈັດຄົນພວກນີ້ບໍ່ໃຫ້ຫຼາຍຂຶ້ນ. ດັ່ງນັ້ນຊາວອີຢິບຈຶ່ງແຕ່ງຕັ້ງຄົນຄຸມຊາວອິດສະຣາເອນໃຫ້ເຮັດວຽກໜັກຈົນໝົດເຫື່ອແຮງແລະໝົດກຳລັງໃຈ.ພວກເຂົາໄດ້ສ້າງເມືອງປີທົມແລະເມືອງລາມາເຊັດເພື່ອເປັນບ່ອນໄວ້ເຂົ້າຂອງກະສັດ.*



ຊາຕານໄດ້ຊັກນຳໃຫ້ກະສັດຟາໂຣອົງໃໝ່ບັງຄັບຊາວຢິວໃຫ້ເປັນຂ້າທາດ ຊາຕານຮູ້ວ່າພຣະເຈົ້າໄດ້ຊົງສັນຍາວ່າຈະສົ່ງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ມາໃຫ້ ຈາກເຊື້ອສາຍຂອງຊົນຊາດອິດສະຣາເອນ ດັ່ງນັ້ນຊາຕານຈຶ່ງປາຖະໜາທີ່ຈະທຳລາຍຊົນຊາດອິດສະຣາເອນເພື່ອວ່າຈະບໍ່ມີ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ກຳເນີດມາເລີຍ



ເຈົ້າແລະປະພຶດຕາມຊາຕານ ຢ່າງໃດກໍຕາມພຣະເຈົ້າຈະຊົງພິພາກສາແລະລົງໂທດພວກເຂົາເມື່ອພຣະອົງຊົງຕັດສິນແລ້ວວ່າພຣະອົງໄດ້ຊົງປະທານເວລາຢ່າງພຽງພໍໃຫ້ແກ່ພວກເຂົາ ເພື່ອຈະປ່ຽນໃຈກ່ຽວກັບການບໍ່ເຊື່ອຟັງຂອງພວກເຂົາແລ້ວ.

ພຣະເຈົ້າໄດ້ຊົງຕັດສິນພຣະໄທແລ້ວວ່າພຣະອົງຈະບໍ່ອົດກັ້ນກັບການບໍ່ເຊື່ອຟັງຂອງພວກເຂົາອີກຕໍ່ໄປ ພຣະອົງຊົງອົດທົນກັບຊາວເມືອງໂຊໂດມແລະເມືອງໂກໂມຣາເປັນເວລາດົນ ແລະຊົງປາຖະໜາທີ່ຈະໃຫ້ພວກເຂົາກັບໃຈໃໝ່ ທ່ານຈື່ໄດ້ບໍ່ວ່າໃນສະໄໝຂອງໂນອາພຣະເຈົ້າຊົງລໍຄອຍຖ້າໃຫ້ມະນຸດກັບໃຈໃໝ່ຢ່າງອົດທົນເປັນເວລາດົນເທົ່າໃດ? ຄຳຕອບກໍຄື 120 ປີ ເມື່ອພຣະເຈົ້າຊົງຕັດສິນພຣະໄທແລ້ວວ່າພຣະອົງໄດ້ໃຫ້ເວລາຢ່າງພຽງພໍແລ້ວຄົນພວກນັ້ນຊຶ່ງປະຕິເສດທີ່ຈະກັບໃຈໃໝ່ຈະລອດພົ້ນຈາກການພິພາກສາຂອງພຣະອົງບໍ່ໄດ້ເລີຍ ພຣະເຈົ້າບໍ່ໄດ້ລົງໂທດຕໍ່ການບໍ່ເຊື່ອຟັງໃນທັນທີ ແລະບາງເທື່ອກໍເບິ່ງຄືວ່າພຣະເຈົ້າຊົງເບິ່ງຂ້າມການບໍ່ເຊື່ອຟັງນັ້ນ ຢ່າງໃດກໍຕາມໃນທີ່ສຸດພຣະອົງຈະຊົງລົງໂທດຕໍ່ການບໍ່ເຊື່ອຟັງທັງໝົດ ແລະບໍ່ມີໃຜສາມາດຈະປົບໜີຈາກການພິພາກສາຂອງພຣະເຈົ້າໄດ້.

*ປະຖົມມະການ 19:1-3 ເມື່ອທູດຂອງພຣະຜູ້ເປັນເຈົ້າສອງຕົນໄດ້ເຂົ້າໄປຮອດເມືອງໂຊໂດມໃນຕອນຄ່ຳຂອງມື້ນັ້ນ ໂລດພວມນັ່ງທີ່ປະຕູເມືອງ ໃນຂະນະທີ່ເຫັນທູດນັ້ນເພິ່ນກໍ່ຟ້າວແລ່ນອອກໄປຕ້ອນຮັບທັນທີແລະເວົ້າວ່າ "ທ່ານເອີຍ ຜູ້ຂ້າມາຍັງທີ່ນີ້ເພື່ອຮັບໃຊ້ທ່ານ. ກະລຸນາແວ່ເຂົ້າໄປໃນເຮືອນຂອງຜູ້ຂ້າກ່ອນແດ່ທ້ອນ. ທ່ານຈະລ້າງຕີນແລະພັກ*

*ແຮມຄືນກໍ່ໄດ້ ພໍຮຸ່ງເຊົ້າຂຶ້ນມາທ່ານຈຶ່ງຄ່ອຍເດີນທາງໄປຕໍ່" ແຕ່ທູດຂອງພຣະຜູ້ເປັນເຈົ້າຕອບວ່າ "ບໍ່ ເຮົາຈະຄ້າງຄືນທີ່ສີ່ແຍກຂອງເມືອງນີ້" ແຕ່ໂລດສືບຕໍ່ຮ້ອງຂໍແລະໃນທີ່ສຸດຊາຍທັງສອງກໍ່ຕົກລົງໄປທີ່ເຮືອນຂອງໂລດ ເພິ່ນສັ່ງຄົນໃຊ້ຂອງຕົນໃຫ້ຈັດແຈງເຂົ້າປາອາຫານຢ່າງດີມາຕ້ອນຮັບແຂກ. ເມື່ອຕຽມມາຮຽບຮ້ອຍແລ້ວ ທູດທັງສອງຈຶ່ງພາກັນຮັບກິນ.*

ໂລດອາໄສຢູ່ໃນເມືອງໂຊໂດມກັບຊາວເມືອງທີ່ຊົ່ວຊ້າພວກນີ້ ພຣະເຈົ້າຈຶ່ງສົ່ງເທວະດາສອງອົງ ໄປຍັງເມືອງໂຊໂດມເພື່ອຈະເຕືອນໂລດແລະຄອບຄົວຂອງເພິ່ນໃຫ້ຮູ້ເຖິງສິ່ງທີ່ກຳລັງຈະເກີດຂຶ້ນ.

*ປະຖົມມະການ 19:4-7ກ່ອນແຂກທັງສອງຈະເຂົ້າໄປນອນພວກຜູ້ຊາຍຊາວເມືອງໂຊໂດມກໍ່ມາອ້ອມເຮືອນຂອງໂລດ ຜູ້ຊາຍໃນເມືອງທຸກຄົນທັງໜຸ່ມແລະແກ່ໄດ້ມາທີ່ນັ້ນ. ພວກເຂົາຮ້ອງບອກໂລດອອກມາແລະຖາມວ່າ "ຜູ້ຊາຍທີ່ມາພັກບ້ານໂຕຄືນນີ້ຢູ່ໃສ? ເອົາເຂົາອອກມາໃຫ້ພວກເຮົາສາ"ພວກຜູ້ຊາຍຊາວເມືອງໂຊໂດມຕ້ອງການສົມສູ່ທາງເພດກັບແຂກສອງຄົນນີ້. ໂລດຈຶ່ງອອກມາຂ້າງນອກແລະອັດປະຕູໄວ້.ໂລດເວົ້າຕໍ່ພວກເຂົາວ່າ "ເພື່ອນເອີຍ ເຮົາຂໍນຳ ຢ່າເຮັດເລື່ອງຊົ່ວຊ້າຢ່າງນີ້ເລີຍ! ເອົາຢ່າງນີ້ສາ ເຮົາມີລູກສາວສອງຄົນທີ່ຍັງບໍ່ເຄີຍຜ່ານຊາຍຈັກເທື່ອ, ເຮົາຈະນຳເຂົາອອກມາໃຫ້ພວກທ່ານ ເພື່ອເຮັດຕາມໃຈຊອບ. ແຕ່ຢ່າເຮັດສິ່ງໃດກັບຊາຍສອງຄົນນີ້, ທ່ານເປັນແຂກຂອງເຮົາ ແລະເຮົາຈຳເປັນຕ້ອງຄຸ້ມຄອງພວກເພິ່ນ".*



# ບົດທີ 11

# ໂມເຊແລະເທດສະການປັດສະຄາ

ບົດຮຽນທີ່ແລ້ວຈົບລົງບ່ອນທີ່ເຊື້ອສາຍຂອງຊົນຊາດອິດສະຣາເອນເຂົ້າໄປໃນປະເທດອີຢີບ ຕອນນີ້ເຮົາຈະມາເລີ່ມສຶກສາພຣະທຳເຫຼັ້ມທີ່ 2 ຂອງພຣະຄຳພີໄບເບີ້ນທີ່ມີຊື່ວ່າ: ອົບພະຍົບ ຊຶ່ງໝາຍເຖິງ **"ການອອກໄປ"** ເຮົາຈະຄົ້ນຫາກັນວ່າຫຼັງຈາກທີ່ໄລຍະເວລາ 400 ປີ ໄດ້ຜ່ານພົ້ນໄປແລ້ວ ພຣະເຈົ້າຊົງນຳຊົນຊາດອິດສະຣາເອນອອກຈາກປະເທດອີຢີບກັບໄປຍັງ "ແຜ່ນດິນທີ່ຊົງສັນຍາໄວ້" ຊຶ່ງໝາຍເຖິງແຜ່ນດິນທີ່ພຣະເຈົ້າໄດ້ຊົງສັນຍາວ່າຈະປະທານໃຫ້ແກ່ອັບຣາຮາມໄດ້ຢ່າງໃດ .

ໂຢເຊບແລະຄົນລຸ້ນດຽວກັນກັບເພິ່ນທຸກຄົນໄດ້ຕາຍໃນປະເທດອີຢີບນັ້ນເອງ ແຕ່ບັນດາຍາດພີ່ນ້ອງຂອງໂຢເຊບກໍຍັງຄົງດຳເນີນຊີວິດໃນປະເທດອີຢີບຫຼັງຈາກທີ່ຄວາມແຫ້ງແລ້ງນັ້ນໄດ້ສິ້ນສຸດລົງແລ້ວ ຕັ້ງແຕ່ເວລາທີ່ຊົນຊາດອິດສະຣາເອນມາອາໄສຢູ່ໃນປະເທດອີຢີບຈົນເຖິງຈຸດທີ່ເຮົາກຳລັງສຶກສາເລື່ອງລາວຈາກພຣະທຳອົບພະຍົບນີ້ເວລາໄດ້ຜ່ານພົ້ນໄປ 350 ປີ ແລ້ວໃນລະຫວ່າງຊ່ວງເວລາດັ່ງກ່າວລູກຫຼານຂອງຊົນຊາດອິດສະຣາເອນກໍທະວີຄູນຂຶ້ນໃນປະເທດອີຢີບ ປະຊາກອນເຫຼົ່ານີ້ໄດ້ເພີ່ມຂຶ້ນຈາກ 70 ຄົນຈົນເກືອບ 2 ລ້ານ 5 ແສນຄົນ ຢ່າງໃດກໍຕາມສະຖານະການຕ່າງໆ ກຳລັງຈະປ່ຽນແປງໄປ.

ໂຢເຊບຈຶ່ງໄດ້ກັບມາຢູ່ດ້ວຍກັນອີກ ກະສັດຟາໂຣໄດ້ຊົງອະນຸຍາດໃຫ້ຄອບຄົວຂອງຢາໂຄບອາໄສຢູ່ໃນແຜ່ນດິນສ່ວນທີ່ດີທີ່ສຸດຂອງປະເທດອີຢີບຊຶ່ງເປັນບ່ອນທີ່ພວກເຂົາໄດ້ອາໄສຢູ່ເປັນເວລາເຖິງ 400 ປີ. ຫຼາຍໆປີຜ່ານໄປພວກເຂົາກໍທະວີຈຳນວນຂຶ້ນຢ່າງຫຼວງຫຼາຍຈົນກາຍເປັນຊົນຊາດໃຫຍ່.

ພຣະເຈົ້າຊົງປ່ຽນຊື່ຢາໂຄບເປັນອິດສະຣາເອນ ດັ່ງນັ້ນເຊື້ອສາຍທັງໝົດຂອງພວກເຂົາຈຶ່ງເປັນທີ່ຮູ້ຈັກກັນໃນນາມຊົນຊາດອິດສະຣາເອນ ຫຼືປະເທດອິດສະຣາເອນນັ້ນເອງ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 10 ໃນໜ້າ 80 *



ຈາກຂໍ້ຄວາມນີ້ສະແດງວ່າຜູ້ຊາຍໃນເມືອງນີ້ສ່ວນຫຼາຍເປັນຜູ້ຊາຍທີ່ຮັກເພດດຽວກັນ ຊຶ່ງເປັນສິ່ງໜ້າລະອາຍ ແຜນການຂອງພຣະເຈົ້າກ່ຽວກັບເລື່ອງເພດມີພຽງຢ່າງດຽວຄືໃຫ້ໄວ້ເພື່ອເປັນຄວາມຜູກພັນພິເສດລະຫວ່າງຜົວກັບເມຍຫຼືພັນລະຍາເທົ່ານັ້ນ ແຕ່ກິເລດຕັນຫາທາງເພດທີ່ບ່ຽງເບນ ບໍ່ເປັນໄປຕາມທຳມະຊາດ ແລະຄວບຄຸມບໍ່ໄດ້ນີ້ ຊຶ່ງໄດ້ເປັນເຫດນຳການທຳລາຍມາສູ່ເມືອງໂຊໂດມແລະກໍຍັງຄົງລຸກລາມຢູ່ໃນປະຈຸບັນນີ້ ສັງຄົມຂອງເຮົາທັງໝົດກຳລັງຖືກຄຸກຄາມດ້ວຍພະຍາດຫຼືໂລກຮ້າຍທີ່ໜ້າຢ້ານ ເນື່ອງຈາກຜູ້ຊາຍແລະຜູ້ຍິງໄດ້ປະຕິເສດແຜນການຂອງພຣະເຈົ້າສຳລັບຊີວິດຂອງພວກເຂົາ.

*ປະຖົມມະການ 19:17 ເມື່ອພວກເຂົາຖືກນຳອອກມາຈາກເມືອງແລ້ວທູດຂອງພຣະເຈົ້າຕົນໜຶ່ງກໍ່ເວົ້າວ່າ “ຈົ່ງຟ້າວໜີເອົາຕົວລອດ ຢ່າຫຼຽວຄືນຫຼັງແລະຢ່າຢຸດຢູ່ຮ່ອມພູ, ຈົ່ງພາກັນແລ່ນຂຶ້ນໄປຍັງເທິງເນີນພູເພື່ອເອົາຊີວິດລອດ”.*



ພຣະເຈົ້າມາຊ່ວຍຊີວິດໂລດ, ເມຍ ແລະລູກສາວທັງສອງ ເພາະພວກເຂົາເປັນຄົນດີ ເຖິງວ່າໂລດບໍ່ໄດ້ດໍາເນີນຊີວິດຢ່າງຊົ່ວຊ້າເໝືອນຢ່າງຊາວເມືອງໂຊໂດມ ແຕ່ເພິ່ນກໍເກີດມາໂດຍຖືກແຍກອອກຈາກພຣະເຈົ້າເໝືອນຄົນອື່ນໆນັ້ນເອງ ໂລດເຊື່ອພຣະເຈົ້າ ເພິ່ນເຊື່ອໃນພຣະສັນຍາທັງຫຼາຍທີ່ພຣະເຈົ້າຊົງກະທໍາຕໍ່ອາດາມ ແລະຕໍ່ອັບຣາຮາມລຸງຂອງເພິ່ນກ່ຽວກັບ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ທີ່ຈະສະເດັດມານັ້ນ ພຣະເຈົ້າໄດ້ສົ່ງພວກເທວະດາມາ ເພື່ອຈະນໍາໂລດອອກຈາກເມືອງທີ່ຊົ່ວຊ້າ ກ່ອນທີ່ເມືອງນັ້ນຈະຖືກທໍາລາຍ ພຣະເຈົ້າຊົງຊ່ວຍຜູ້ທີ່ເຊື່ອພຣະອົງໃຫ້ລອດພົ້ນຈາກການພິພາກສາ ໂນອາເຊື່ອພຣະເຈົ້າ ດັ່ງນັ້ນພຣະອົງຈຶ່ງຊົງຊ່ວຍເພິ່ນໃຫ້ລອດພົ້ນຈາກນໍ້າຖ້ວມຄັ້ງໃຫຍ່ນັ້ນ, ໂລດເຊື່ອພຣະເຈົ້າ ພຣະອົງຈຶ່ງຊົງຊ່ວຍເພິ່ນອອກມາກ່ອນທີ່ເມືອງໂຊໂດມຈະຖືກທໍາລາຍ ທັນທີທີ່ໂລດອອກມາຈາກເມືອງໄດ້ຢ່າງປອດໄພພຣະເຈົ້າກໍຊົງທໍາລາຍເມືອງໂຊໂດມແລະເມືອງໂກໂມຣາໂດຍການໃຫ້ມີໄຟຕົກລົງມາຈາກຟ້າ.

*ປະຖົມມະການ 19:24-26 ໃນທັນໃດນັ້ນ ພຣະຜູ້ເປັນເຈົ້າກໍ່ບັນດານໃຫ້ໄຟແລະມາດຖັ່ງທ່າຝົນຕົກລົງມາໃສ່ເມືອງໂຊໂດມແລະໂກໂມຣາແລະທໍາລາຍສອງຕົວເມືອງ ຮ່ອມພູທັງໝົດ ຊາວເມືອງທຸກຄົນ ພ້ອມກັບພືດພັນຕ່າງໆ ທີ່ເກີດຂຶ້ນຈາກພື້ນດິນນັ້ນຈົນໝົດກ້ຽງ ແຕ່ເມຍຂອງໂລດຫຼຽວຄືນຫຼັງ ສະນັ້ນ ນາງຈຶ່ງກາຍເປັນເສົາເກືອ.*



*ໄດ້ຂາຍເຂົ້າໃຫ້ແກ່ປະຊາຊົນຈາກທຸກຊາດທົ່ວໂລກ. ດັ່ງນັ້ນພວກອ້າຍຂອງໂຢເຊບຈຶ່ງເຂົ້າມາຫາແລະກາບລົງຕໍ່ໜ້າເພິ່ນ.*



ພຣະເຈົ້າໄດ້ຊົງບັນດານໃຫ້ເຫດການທັງຫຼາຍເກີດຂຶ້ນຕາມທີ່ພຣະອົງໄດ້ຊົງສະແດງແກ່ໂຢເຊບໃນຄວາມຝັນເມື່ອເພິ່ນຍັງເປັນເດັກໜຸ່ມ ບັນດາອ້າຍທັງຫຼາຍຂອງໂຢເຊບກົ້ມລົງກາບໄຫວ້ໂຢເຊບແທ້ໆ ແລ້ວໂຢເຊບກໍຮ້ອງໄຫ້ ຂະນະທີ່ເພິ່ນເປີດເຜີຍໃຫ້ອ້າຍທັງຫຼາຍຮູ້ວ່າ ແທ້ທີ່ຈິງແລ້ວຕົນເອງເປັນໃຜ ແຕ່ແທນທີ່ໂຢເຊບຈະປະຕິບັດຕໍ່ພວກອ້າຍໆຢ່າງຮຸນແຮງເພື່ອໃຫ້ສາສົມກັບສິ່ງທີ່ພວກເຂົາຄວນຈະໄດ້ຮັບນັ້ນ ໂຢເຊບກັບຊີ້ແຈງແກ່ບັນດາອ້າຍເຫຼົ່ານັ້ນວ່າພຣະເຈົ້າຊົງຄວບຄຸມຢູ່ເໜືອສະຖານະການນີ້ ແລະພຣະອົງໄດ້ຊົງໃຊ້ການກະທໍາທີ່ຊົ່ວຮ້າຍຂອງພວກອ້າຍໃຫ້ກັບກາຍເປັນສິ່ງທີ່ດີ.

ໂຢເຊບໄດ້ສັ່ງໃຫ້ພວກອ້າຍໆ ກັບໄປຍັງແຜ່ນດິນການາອານເພື່ອນໍາພໍ່ແລະຄອບຄົວທັງໝົດມາຍັງປະເທດອີຢີບທີ່ຊຶ່ງພວກເຂົາສາມາດຈະມີຊີວິດລອດຈາກການອຶດອາຫານໄດ້ ຢາໂຄບແລະ

ດັ່ງນັ້ນ ໂຢເຊບຈຶ່ງໄດ້ເປັນນາຍົກລັດຖະມົນຕີຂອງປະເທດອີຢິບ ມີພຽງກະສັດຟາໂຣເທົ່ານັ້ນທີ່ມີຕຳແໜ່ງສູງກວ່າໂຢເຊບ ໂຢເຊບຜ່ານປະສົບການທີ່ຍາກລຳບາກມາໄດ້ແລະເຮັດໃຫ້ເຂົ້າໃຈໄດ້ວ່າ ພຣະເຈົ້າຊົງຄວບຄຸມຢູ່ເໜືອເຫດການທັງປວງ ພຣະເຈົ້າບໍ່ໄດ້ຫຼົງລືມໂຢເຊບຂະນະທີ່ເພິ່ນຖືກຂັງຢູ່ໃນຄຸກ ຄວາມຝັນເຫຼົ່ານັ້ນທີ່ພຣະເຈົ້າໄດ້ຊົງປະທານແກ່ໂຢເຊບເມື່ອເພິ່ນຍັງເປັນເດັກໜຸ່ມກຳລັງຈະສຳເລັດແລ້ວ.

ພາຍຫຼັງຈາກທີ່ 7 ປີແຫ່ງຄວາມອຸດົມສົມບູນໄດ້ສິ້ນສຸດລົງແລ້ວ 7 ປີແຫ່ງການອຶດອາຫານກໍໄດ້ເລີ່ມຕົ້ນຂຶ້ນ ການອຶດອາຫານເທື່ອນີ້ໄດ້ແຜ່ຂະຫຍາຍເຂົ້າໄປໃນປະເທດໃກ້ຄຽງເຊັ່ນ: ແຜ່ນດິນການາອານ ແມ່ນແຕ່ອາຫານຂອງພໍ່ແລະບັນດາອ້າຍທັງຫຼາຍຂອງໂຢເຊບກໍໄດ້ໝົດລົງ ອິດສະຣາເອນສົ່ງພວກອ້າຍຂອງໂຢເຊບໄປຍັງປະເທດອີຢິບເພື່ອຊື້ອາຫານ ໂຢເຊບຈື່ອ້າຍທັງຫຼາຍຂອງເພິ່ນໄດ້ ແຕ່ພວກອ້າຍຈື່ໂຢເຊບບໍ່ໄດ້ຈຶ່ງໄດ້ກົ້ມລົງກາບໄຫວ້ໂຢເຊບ.

*ປະຖົມມະການ42:1-3, 6 ເມື່ອຢາໂຄບຮູ້ວ່າ ຢູ່ໃນປະເທດອີຢິບຍັງມີເຂົ້າຂາຍເພິ່ນກໍເວົ້າຕໍ່ພວກລູກຊາຍວ່າ "ພວກເຈົ້າພາກັນຢູ່ລ້າໆເຮັດຫຍັງກັນ? ພໍ່ຍິນວ່າທີ່ປະເທດອີຢິບມີເຂົ້າຂາຍ; ຈົ່ງໄປຊື້ເຂົ້າທີ່ນັ້ນແມ ບໍ່ດັ່ງນັ້ນພວກເຮົາຈະອຶດຕາຍກັນໄດ໋! "ດັ່ງນັ້ນພວກອ້າຍຕ່າງແມ່ຂອງໂຢເຊບສິບຄົນຈຶ່ງພາກັນໄປຍັງປະເທດອີຢິບເພື່ອຊື້ເຂົ້າ ແຕ່ຢາໂຄບບໍ່ໃຫ້ເບັນຢາມິນນ້ອງຊາຍຄີງໆຂອງໂຢເຊບໄປນຳພວກເຂົາເພາະຢ້ານມີອັນຕະລາຍເກີດຂຶ້ນກັບລາວ. ພວກລູກຊາຍຂອງຢາໂຄບໄດ້ມາຫາຊື້ເຂົ້າພ້ອມກັບຄົນພວກອື່ນໆ ເພາະໃນການາອານເກີດການອຶດຢາກ. ໂຢເຊບໃນຖານະເປັນຜູ້ປົກຄອງໃນປະເທດອີຢິບເພິ່ນ*





ເມື່ອພວກເທວະດາພາໂລດ, ເມຍແລະລູກສາວທັງສອງຄົນອອກຈາກເມືອງໂຊໂດມນັ້ນ ເທວະດາໄດ້ບອກພວກເຂົາບໍ່ໃຫ້ຫຼຽວຫຼັງກັບໄປເບິ່ງອີກ ແຕ່ໃຫ້ຮີບໜີໄປຍັງພູເຂົາ ເມຍຂອງໂລດບໍ່ເຊື່ອຟັງ ນາງໄດ້ຫຼຽວຫຼັງກັບໄປເບິ່ງເມືອງນັ້ນອີກເພາະນາງຍັງອາໄລອາວອນກັບການດຳເນີນຊີວິດໃນເມືອງໂຊໂດມ ນາງບໍ່ຕ້ອງການທີ່ຈະຈາກເມືອງນັ້ນໄປ ນາງຊ່າງໂງ່ແທ້ໆ ທີ່ເມີນເສີຍຕໍ່ການຕັກເຕືອນຂອງພຣະເຈົ້າ ແລະເມື່ອນາງຫຼຽວກັບຄືນໄປທາງຫຼັງນັ້ນ ພຣະເຈົ້າກໍຊົງບັນດານໃຫ້ນາງກາຍເປັນເສົາເກືອໄປ .

ທຸກວັນນີ້ເຖິງວ່າຈະມີປະຊາກອນຫຼາຍພັນລ້ານຄົນອາໄສຢູ່ໃນໂລກ ແຕ່ພຣະເຈົ້າກໍຍັງຄົງຮູ້ຈັກແລະສົນພຣະໄທມະນຸດແຕ່ລະຄົນ ພຣະເຈົ້າຊົງຫ່ວງໃຍມະນຸດເຮົາແລະຊົງປາຖະໜາທີ່ຈະໃຫ້ເຮົາເຊື່ອພຣະອົງ ພຣະເຈົ້າຍັງຊົງເປັນພຣະເຈົ້າທີ່ທ່ຽງທຳ ຜູ້ຈະຊົງພິພາກສາມະນຸດທຸກຄົນທີ່ບໍ່ເຊື່ອຟັງພຣະອົງ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 8 ໃນໜ້າ 78 *

ເຈົ້າທ່ຽງແທ້ຜູ້ຊົງພຣະຊົນຢູ່ ເພາະຊາວອີຢິບນັ້ນນະມັດສະການດວງອາທິດ, ດວງຈັນ, ດວງດາວ, ສັດຕ່າງໆແລະແມ່ນ້ຳໄນ. ພຣະເຈົ້າຊົງມີພຣະປະສົງທີ່ຈະແຈ້ງຂ່າວສຳຄັນເລື່ອງໜຶ່ງໃຫ້ກະສັດຟາໂຣຮູ້ຜ່ານທາງຄວາມຝັນ ແຕ່ກັບບໍ່ມີໃຜສາມາດຕີຄວາມໝາຍຂອງຄວາມຝັນນັ້ນໄດ້ ແລ້ວກະສັດຟາໂຣ ກໍໄດ້ຮັບລາຍງານວ່າມີຊາຍຜູ້ໜຶ່ງທີ່ຖືກຂັງຢູ່ໃນຄຸກຂອງພະອົງ ຊຶ່ງມີຊື່ວ່າໂຢເຊບ ສາມາດຈະຕີຄວາມໝາຍຄວາມຝັນໃຫ້ແກ່ພຣະອົງໄດ້ ໂຢເຊບຈຶ່ງຖືກນຳຕົວມາຢູ່ຕໍ່ໜ້າກະສັດຟາໂຣເພື່ອຈະຕີຄວາມຄວາມຝັນຂອງພະອົງ ໂຢເຊບໄດ້ທູນກະສັດຟາໂຣວ່າ ພຣະເຈົ້າກຳລັງຈະນຳຄວາມອຸດົມສົມບູນເປັນເວລາ 7 ປີຊຶ່ງຈະຕາມມາດ້ວຍການອຶດອາຫານດົນ 7 ປີ ໃຫ້ເກີດຂຶ້ນເທິງແຜ່ນດິນໂລກ ແຕ່ການອຶດອາຫານນັ້ນຈະຮຸນແຮງຫຼາຍຈົນກະທັ້ງຄວາມອຸດົມສົມບູນໃນຊ່ວງເວລາ 7 ປີນັ້ນຈະຖືກລືມໄປເລີຍ.

ໂຢເຊບໄດ້ທູນຖວາຍຄຳປຶກສາແກ່ກະສັດຟາໂຣໃຫ້ຊົງເລືອກຊາຍຜູ້ໜຶ່ງມາເບິ່ງແຍງບັນດາພະນັກງານຂອງແຜ່ນດິນຊຶ່ງຈະເຮັດໜ້າທີ່ເກັບຮວບຮວມອາຫານ 20% ໃນຊ່ວງແຫ່ງຄວາມອຸດົມສົມບູນຢ່າງຍິ່ງເປັນເວລາ 7 ປີນັ້ນ ເພື່ອຈະເກັບສະສົມອາຫານເຫຼົ່ານັ້ນໄວ້ສຳລັບຊ່ວງອຶດອາຫານດົນ 7 ປີດັ່ງກ່າວ ການກະທຳເຊັ່ນນີ້ຈະເຮັດໃຫ້ມີອາຫານຢ່າງພຽງພໍຕະຫຼອດເວລາໃນຊ່ວງອຶດອາຫານນອກຈາກນີ້ປະຊາຊົນທີ່ອາໄສຢູ່ໃນປະເທດໃກ້ຄຽງກໍສາມາດຈະເດີນທາງມາຊື້ອາຫານຈາກປະເທດອີຢິບໄດ້ ກະສັດຟາໂຣ ຮູ້ສຶກປະທັບໃຈໃນການທຳນວາຍຄວາມຝັນຂອງໂຢເຊບຫຼາຍແລະໄດ້ຊົງຍົກຕຳແໜ່ງຜູ້ນຳທີ່ໃຫຍ່ທີ່ສຸດທົ່ວທັງປະເທດອີຢິບໃຫ້ແກ່ເພິ່ນ

ໂຢເຊບໃຫ້ແກ່ໂປທິຟາ ຊຶ່ງເປັນຜູ້ບັນຊາການທະຫານຮັກສາພະອົງຂອງກະສັດຟາໂຣແຫ່ງປະເທດອີຢິບ ເຫດການທຸກຢ່າງໄດ້ດຳເນີນໄປຢ່າງລາບລື່ນເປັນຊ່ວງໄລຍະເວລາສັ້ນໆສຳລັບໂຢເຊບຊຶ່ງອາໄສຢູ່ໃນເຮືອນທີ່ເຮັດວຽກຢູ່ນັ້ນ ແຕ່ເມື່ອເມຍຂອງໂປທິຟາໃສ່ຮ້າຍໂຢເຊບ ໂຢເຊບກໍຖືກນຳຕົວໄປຂັງໄວ້ໃນຄຸກ.

*ປະຖົມມະການ 39:21,22 ແຕ່ວ່າພຣະຢາເວຊົງສະຖິດຢູ່ກັບໂຢເຊບແລະຊົງສຳແດງພຣະເມດຕາກະລຸນາແກ່ລາວ ຊົງໃຫ້ລາວເປັນທີ່ຖືກອົກຖືກໃຈໃນສາຍຕາຂອງຜູ້ຄຸມນັກໂທດ ຜູ້ຄຸມນັກໂທດກໍມອບນັກໂທດທັງໝົດທີ່ຢູ່ໃນຄຸກໄວ້ໃຫ້ຢູ່ໃນຄວາມດູແລຂອງໂຢເຊບ ການງານທຸກຢ່າງທີ່ນັ້ນຂຶ້ນກັບໂຢເຊບທັງໝົດ.*

ໂຢເຊບຍັງຄົງໄວ້ວາງໃຈພຣະເຈົ້າເຖິງວ່າເພິ່ນຈະຖືກພວກອ້າຍກຽດຊັງແລະຖືກເມຍຂອງເຈົ້ານາຍແຕ່ງເລື່ອງຕົວະຂຶ້ນມາໃສ່ຮ້າຍເພິ່ນ ໂຢເຊບໄວ້ວາງໃຈໃນພຣະສັນຍາທັງຫຼາຍຂອງພຣະເຈົ້າເຊັ່ນດຽວກັບອັບຣາຮາມ ອີຊາກແລະຢາໂຄບ ບໍ່ມີໃຜສາມາດຈະເຮັດໃຫ້ພຣະເຈົ້າພໍພຣະໄທໄດ້ນອກຈາກພວກເຂົາຈະເຊື່ອໃນສິ່ງທີ່ພຣະອົງໄດ້ກ່າວໄວ້ນັ້ນ. ແລ້ວພຣະເຈົ້າກໍບໍ່ໄດ້ເຮັດໃຫ້ໂຢເຊບຜິດຫວັງເລີຍເຖິງວ່າເພິ່ນຈະຖືກຂັງຢູ່ໃນຄຸກກໍຕາມ ພຣະເຈົ້າຊົງເບິ່ງແຍງໂຢເຊບເພາະວ່າພຣະອົງຊົງມີແຜນການທີ່ດີເລີດສຳລັບຊີວິດຂອງເພິ່ນ ເບິ່ງຄືວ່າຈະເປັນໄປບໍ່ໄດ້ເລີຍເມື່ອໂຢເຊບຖືກຄຸມຂັງຢູ່ໃນຄຸກແລ້ວຊີວິດຈະສາມາດພິກຜັນຂຶ້ນມາປົກຄອງເໜືອຕະກູນຂອງເພິ່ນໄດ້ ແຕ່ພຣະເຈົ້າຊົງຮັກສາພຣະສັນຍາຂອງພຣະອົງສະເໝີ.

ວັນໜຶ່ງ ຟາໂຣກະສັດຂອງປະເທດອີຢິບໄດ້ເກີດນິມິດຝັນ 2 ເລື່ອງທີ່ກ່ຽວຂ້ອງກັນ ກະສັດຟາໂຣບໍ່ໄດ້ຮູ້ຈັກຫຼືນະມັດສະການພຣະ



# ບົດທີ ໑

# ອີຊາກ

*ປະຖົມມະການ21:1-3 ພຣະຜູ້ເປັນເຈົ້າຊົງໂຜດຊ່ວຍນາງຊາຣາ ຕາມທີ່ພຣະອົງໄດ້ສັນຍາໄວ້ ນາງໄດ້ຕັ້ງທ້ອງແລະເກີດລູກຊາຍຜູ້ໜຶ່ງໃຫ້ກັບອັບຣາຮາມເມື່ອເພິ່ນເຖົ້າແກ່ຫຼາຍແລ້ວ ເດັກຊາຍນັ້ນເກີດມາຕາມເວລາທີ່ພຣະເຈົ້າໄດ້ກຳນົດໄວ້. ອັບຣາຮາມໃສ່ຊື່ລູກຊາຍວ່າ ອີຊາກ.*

ພຣະເຈົ້າຊົງສັນຍາວ່າຈະປະທານລູກຊາຍຄົນໜຶ່ງແກ່ອັບຣາຮາມແລະນາງຊາຣາ ເຖິງວ່າຄົນທັງສອງຈະແກ່ເກີນໄປທີ່ຈະມີລູກແລ້ວກໍຕາມ ແຕ່ອີກ 25 ປີຕໍ່ມາ ພຣະເຈົ້າກໍຊົງກະທຳໃຫ້ສຳເລັດຕາມພຣະສັນຍາທີ່ມີຕໍ່ອັບຣາຮາມ ຂະນະນັ້ນອັບຣາຮາມມີອາຍຸ100 ປີແລະນາງຊາຣາກໍອາຍຸ 90 ປີແລ້ວ. ຄົນທັງສອງຮູ້ດີວ່າຄົງຈະເປັນໄປບໍ່ໄດ້ສຳລັບພວກເຂົາທີ່ຈະມີລູກເມື່ອພວກເຂົາອາຍຸຂະໜາດນັ້ນກັນແລ້ວ ແຕ່ພຣະເຈົ້າຊົງກະທຳໃຫ້ສຳເລັດຕາມພຣະສັນຍາຂອງພຣະອົງສະເໝີແລະບໍ່ມີອັນໃດທີ່ເປັນໄປບໍ່ໄດ້ສຳລັບພຣະເຈົ້າ ເພາະສະນັ້ນພວກເຂົາຈິ່ງມີລູກຊາຍຄົນໜຶ່ງແລະໄດ້ຕັ້ງຊື່ລູກນັ້ນວ່າ **ອີຊາກ**.

ອີຊາກ ເປັນຄວາມພາກພູມໃຈແລະຄວາມຊື່ນຊົມຍິນດີຂອງອັບຣາຮາມ ຫຼາຍປີຜ່ານໄປອີຊາກໄດ້ເຕີບໃຫຍ່ຂຶ້ນເປັນເດັກ

ໜຸ່ມພໍ່ແລະແມ່ຂອງອີຊາກກໍຮັກແລະເອັນດູເປັນຢ່າງຍິ່ງ ອັບຣາຮາມເຊື່ອວ່າພຣະສັນຍາທັງຫຼາຍຂອງພຣະເຈົ້າທີ່ກ່ຽວຂ້ອງກັບ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະສະເດັດມານັ້ນຈະສຳເລັດຜ່ານທາງອີຊາກ ແລະເຊື້ອສາຍຂອງເພິ່ນ ຢ່າງໃດກໍຕາມມີຢູ່ວັນໜຶ່ງພຣະເຈົ້າໄດ້ບອກອັບຣາຮາມໃຫ້ກະທຳສິ່ງທີ່ຍາກທີ່ສຸດ.

*ປະຖົມມະການ 22:1-2 ຕໍ່ມາພຣະເຈົ້າໄດ້ລອງໃຈອັບຣາຮາມ,ພຣະອົງຈຶ່ງເອີ້ນເພິ່ນວ່າ "ອັບຣາຮາມເອີຍ" ແລະອັບຣາຮາມຕອບວ່າ "ເຈົ້າ, ຂ້າພະອົງກຳລັງຟັງພຣະອົງຢູ່" ພຣະເຈົ້າສັ່ງວ່າ "ເອົາອີຊາກລູກຊາຍຂອງເຈົ້າຄືລູກຊາຍຄົນດຽວທີ່ເຈົ້າຮັກຫຼາຍນັ້ນໄປທີ່ແຄວ້ນໂມລີຢາ. ໃຫ້ເຈົ້າເຜົາລາວຖວາຍເປັນເຄື່ອງບູຊາແກ່ເຮົາຢູ່ເທິງພູແຫ່ງໜຶ່ງທີ່ເຮົາຈະບອກເຈົ້າທີ່ນັ້ນ".*

ພຣະເຈົ້າຊົງບອກໃຫ້ອັບຣາຮາມຖວາຍອີຊາກເປັນເຄື່ອງບູຊາ ຖ້າເປັນເຊັ່ນນັ້ນແລ້ວອັບຣາຮາມຈະເປັນພໍ່ຂອງປະເທດທີ່ຍິ່ງໃຫຍ່ຢ່າງໃດໄດ້? ແລ້ວ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ຈະເປັນເຊື້ອສາຍຄົນໜຶ່ງຂອງອັບຣາຮາມໄດ້ຢ່າງໃດ? ແລ້ວພຣະສັນຍາທັງຫຼາຍຂອງພຣະເຈົ້າຈະສຳເລັດຜ່ານທາງອີຊາກໄດ້ຢ່າງໃດຖ້າອັບຣາຮາມໄດ້ຂ້າລູກຊາຍຄົນດຽວຂອງຕົນເອງເສຍແລ້ວ ພຣະເຈົ້າບໍ່ຊົງເຫັນດ້ວຍກັບການຖວາຍເດັກເປັນເຄື່ອງບູຊາຢູ່ແລ້ວ ພຣະອົງພຽງທົດສອບອັບຣາຮາມ ເພື່ອຈະລອງໃຈເບິ່ງວ່າເພິ່ນຮັກພຣະເຈົ້າຫຼາຍກວ່າລູກຊາຍຂອງຕົນເອງຫຼືບໍ່? ຊ່າງເປັນການທົດສອບທີ່ຍາກເຊັ່ນນີ້!

ອັບຣາຮາມບໍ່ໄດ້ສົງໄສຫຼືຕັ້ງຄຳຖາມກັບພຣະເຈົ້າເລີຍ ອັບຣາຮາມຍອມຮັບສິ່ງທີ່ພຣະເຈົ້າຊົງບັນຊານັ້ນ ເພິ່ນເຊື່ອພຣະເຈົ້າ



*"ຟັງຄວາມຝັນທີ່ຂ້ອຍຈະເລົ່າສູ່ຟັງນີ້ແມ.ພວກເຮົາພວມພາກັນມັດເຂົ້າຢູ່ທີ່ທົ່ງນາ,ເມື່ອມັດແລ້ວຟ່ອນເຂົ້າຂອງຂ້ອຍກໍຕັ້ງຢູ່ຊື່ຕົງ. ສ່ວນຟ່ອນເຂົ້າຂອງພວກເຈົ້າໄດ້ຕີວົງລ້ອມຟ່ອນເຂົ້າຂອງຂ້ອຍແລະກາບລົງຕໍ່ໜ້າຟ່ອນເຂົ້າຂອງຂ້ອຍ. "ພວກອ້າຍຈຶ່ງຖາມລາວວ່າ" ເຈົ້າຄິດວ່າເຈົ້າຈະໄດ້ເປັນກະສັດປົກຄອງພວກເຮົາຊັ້ນບໍ? "ດັ່ງນັ້ນພວກອ້າຍຈຶ່ງພາກັນຊັງລາວຫຼາຍຍິ່ງຂຶ້ນເພາະຄວາມຝັນທີ່ລາວໄດ້ເລົ່າມານັ້ນ. ແລ້ວໂຢເຊບຈຶ່ງຝັນອີກແລະເລົ່າຄວາມຝັນສູ່ພວກອ້າຍຟັງຕື່ມວ່າ" ຂ້ອຍຝັນອີກ. ຂ້ອຍຝັນເຫັນຕາເວັນ,ເດືອນ,ແລະດວງດາວສິບເອັດດວງກົ້ມກາບຂ້ອຍ. "ເມື່ອລາວເລົ່າຄວາມຝັນສູ່ພໍ່ແລະພວກອ້າຍຟັງພໍ່ຈຶ່ງຫ້ວງລາວວ່າ" ເຈົ້າມາຊ່າງຝັນແທ້! ເຈົ້າຄິດວ່າແມ່,ພວກອ້າຍຂອງເຈົ້າ,ແລະພໍ່ຈະພາກັນໄປກົ້ມກາບເຈົ້າຊັ້ນບໍ?".*



ອ້າຍທັງຫຼາຍຮູ້ສຶກອິດສາບັງບຽດໂຢເຊບເປັນຢ່າງຍິ່ງ ວັນໜຶ່ງອ້າຍເຫຼົ່ານັ້ນໄດ້ຂາຍໂຢເຊບໄປເປັນຂ້າທາດໃຫ້ກຸ່ມພໍ່ຄ້າທີ່ກຳລັງເດີນທາງໄປຍັງປະເທດອີຢີບແລ້ວພວກອ້າຍໆ ກໍໄດ້ຮ່ວມມືກັນເຮັດໃຫ້ພໍ່ຄິດວ່າໂຢເຊບຖືກສັດປ່າຂ້າຕາຍເສຍແລ້ວ ກຸ່ມພໍ່ຄ້າໄດ້ຂາຍ

ມາດຈະເຊື່ອມຊ່ອງວ່າງນີ້ໄດ້ ເມື່ອອາດາມແລະເອວາເຮັດບາບໃນສວນເອເດນນັ້ນ ຂັ້ນໄດທີ່ນຳໄປເຖິງພຣະເຈົ້າກໍຖືກເຄື່ອນຍ້າຍອອກໄປເສຍ ດັ່ງນັ້ນວິທີດຽວທີ່ມະນຸດຈະສາມາດມາເຖິງພຣະເຈົ້າໄດ້ຈະເກີດຂຶ້ນກໍຕໍ່ເມື່ອ ພຣະເຈົ້າຊົງກະທຳໃຫ້ເກີດຫົນທາງຂຶ້ນມາເທົ່ານັ້ນ ພຣະເຈົ້າໄດ້ຊົງສັນຍາວ່າຈະສົ່ງ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ອົງໜຶ່ງ ຊຶ່ງຈະເປັນເໝືອນຂັ້ນໄດທີ່ຢາໂຄບເຫັນນັ້ນຄືຂັ້ນໄດທີ່ຈະຕໍ່ຈາກແຜ່ນດິນໂລກໄປເຖິງຟ້າສະຫວັນ ຢາໂຄບເອງກໍເປັນຄົນບາບເໝືອນເຮົາທຸກຄົນ ພຣະເຈົ້າຈຶ່ງຊົງສະແດງໃຫ້ ຢາໂຄບຮູ້ວ່າມີພຽງວິທີດຽວເທົ່ານັ້ນທີ່ຈະນຳໄປເຖິງພຣະເຈົ້າໄດ້ນັ້ນຄື ຢາໂຄບຈະຕ້ອງມອບຄວາມໄວ້ວາງໃຈໄວ້ກັບພຣະເຈົ້າ.

ໃນທີ່ສຸດຢາໂຄບກໍເດີນທາງໄປຈົນເຖິງບ້ານເກີດຂອງອັບຣາຮາມ ເພິ່ນໄດ້ພົບກັບບັນດາຍາດພີ່ນ້ອງຂອງແມ່ແລະໄດ້ແຕ່ງງານກັບຫຼານສາວ 2 ຄົນຂອງແມ່ຊຶ່ງມີຊື່ວ່າ: ເລອາແລະລາເຊນ ຢາໂຄບມີລູກເຖິງ 12 ຄົນ ຫຼັງຈາກເວລາທີ່ໄດ້ລ່ວງເລີຍໄປເປັນເວລາ 20 ປີຢາໂຄບກໍກັບໄປຫາອີຊາກພໍ່ຂອງເພິ່ນ ແລ້ວສັນຕິພາບລະຫວ່າງຢາໂຄບກັບເອຊາວອ້າຍຂອງເພິ່ນກໍເກີດຂຶ້ນ.

ໂຢເຊບ ເປັນລູກຊາຍທີ່ຢາໂຄບຮັກຫຼາຍທີ່ສຸດ ຊຶ່ງເປັນເຫດໃຫ້ບັນດາອ້າຍທັງຫຼາຍກຽດຊັງໂຢເຊບ ພຣະເຈົ້າຊົງບັນດານໃຫ້ໂຢເຊບຝັນເຖິງ 2 ເທື່ອ ເພື່ອເປີດເຜີຍໃຫ້ໂຢເຊບຮູ້ວ່າເພິ່ນຈະໄດ້ປົກຄອງເໜືອຕະກູນຂອງເພິ່ນເອງ.

*ປະຖົມມະການ 37:5-10 ຄືນໜຶ່ງໂຢເຊບຝັນ; ເມື່ອລາວເລົ່າຄວາມຝັນສູ່ພວກອ້າຍຟັງ ພວກເຂົາຍິ່ງຊັງລາວຫຼາຍຂຶ້ນ. ລາວເວົ້າວ່າ*



ແລະຮູ້ວ່າພຣະອົງບໍ່ສາມາດຈະປ່ຽນພຣະໄທໃນພາຍຫຼັງ ອັບຣາຮາມຮູ້ວ່າພຣະເຈົ້າຄົງຈະບໍ່ປະທານພຣະສັນຍາແກ່ເພິ່ນແລ້ວກໍມາປ່ຽນພຣະໄທໃນພາຍຫຼັງ ພຣະເຈົ້າຈະຍັງຄົງຮັກສາຄຳໝັ້ນສັນຍາຂອງພຣະອົງຢ່າງແນ່ນອນ ການທົດສອບຄວາມເຊື່ອໃນເທື່ອນີ້ເປັນການທົດສອບທີ່ຍາກຫຼາຍ ແຕ່ອັບຣາຮາມກໍໄວ້ວາງໃຈໃນພຣະເຈົ້າ ອັບຣາຮາມໄດ້ຄົ້ນພົບສິ່ງທີ່ແຕ່ລະຄົນຈຳເປັນຈະຕ້ອງຄົ້ນພົບດ້ວຍຕົນເອງວ່າ ພຣະເຈົ້າບໍ່ເຄີຍລະເລີຍທີ່ຈະກະທຳໃນສິ່ງທີ່ພຣະອົງໄດ້ຊົງສັນຍາໄວ້ແລ້ວ ເຮົາສາມາດຈະໄວ້ວາງໃຈພຣະອົງໄດ້ຢ່າງເຕັມທີ່ ພຣະເຈົ້າຊົງປາຖະໜາທີ່ຈະໃຫ້ເຮົາໄວ້ວາງໃຈໃນພຣະຄຳຂອງພຣະອົງ.

*ປະຖົມມະການ 22:3-5 ອັບຣາຮາມຈຶ່ງລຸກຂຶ້ນແຕ່ເຊົ້າມືດ ຈັດຕຽມເອົາຟືນເພື່ອເຜົາເຄື່ອງບູຊາ ທັງເອົາເຄື່ອງຂອງຕ່າງໆໃສ່ເທິງຫຼັງລໍ ແລະເອົາອີຊາກກັບຄົນໃຊ້ສອງຄົນໄປນຳຕົນ. ພວກເຂົາອອກເດີນທາງມຸ່ງໜ້າໄປສູ່ບ່ອນທີ່ພຣະເຈົ້າໄດ້ບອກ. ເມື່ອເຂົາເດີນທາງມາໄດ້ສາມມື້ແລ້ວອັບຣາຮາມກໍ່ຫຼຽວເຫັນບ່ອນນັ້ນແຕ່ໄກ ແລ້ວເພິ່ນກໍ່ກ່າວແກ່ຄົນໃຊ້ວ່າ “ພວກເຈົ້າກັບລໍ ຈົ່ງຖ້າຂ້ອຍຢູ່ທີ່ນີ້.ຂ້ອຍກັບລູກຈະຂຶ້ນໄປນະມັດສະການພຣະເຈົ້າຢູ່ເທິງພຸ້ນ ແລະຈະກັບມາຫາພວກເຈົ້າ”.*

ອັບຣາຮາມເຊື່ອພຣະເຈົ້າຢ່າງແທ້ຈິງ ເພິ່ນໄດ້ກະທຳສິ່ງທີ່ເພິ່ນຄວນຈະກະທຳຈົນເຖິງຈຸດນີ້ແລ້ວ ອັບຣາຮາມຕື່ນແຕ່ເຊົ້າໃນວັນນັ້ນ ເພິ່ນບໍ່ໄດ້ລັງເລໃນການເຊື່ອຟັງພຣະເຈົ້າເລີຍ ອັບຣາຮາມໄວ້ວາງໃຈແທ້ໆ ວ່າພຣະເຈົ້າຈະຊົງແກ້ໄຂສະຖານະການໃຫ້ດີຂຶ້ນ ອັບຣາຮາມຮູ້ວ່າອີຊາກຈະໄດ້ກັບມາພ້ອມກັບເພິ່ນດ້ວຍວິທີໃດວິທີໜຶ່ງເພາະອັບຣາຮາມໄດ້ບອກແກ່ພວກຄົນໃຊ້ວ່າ “ເຮົາ” ຈະໄປນະມັດການແລ້ວຈະກັບມາອີກ.

*ປະຖົມກາວນ 22:6-8 ອັບຣາຮາມເອົາຟືນສຳລັບເຜົາເຄື່ອງບູຊາໃຫ້ອີຊາກແບກຂຶ້ນໄປ ສ່ວນເພິ່ນເອງກໍຖືມີດກັບກ່ວນໄຟທີ່ພວມລຸກຢູ່ ເມື່ອເດີນທາງໄປນັ້ນ ອີຊາກຈຶ່ງເວົ້າກັບອັບຣາຮາມວ່າ "ພໍ່ເອີຍ" ຜູ້ເປັນພໍ່ຈຶ່ງຕອບວ່າ "ແມ່ນຫຍັງລູກ" ອີຊາກຖາມວ່າ "ຟືນກັບກ່ວນໄຟກໍມີແລ້ວແຕ່ລູກແກະທີ່ຈະເຜົາບູຊາຢູ່ໃສ?" ອັບຣາຮາມຕອບວ່າ "ພຣະເຈົ້າຈະຈັດຫາໃຫ້ເອງ". ແລ້ວສອງພໍ່ລູກກໍຍ່າງຕໍ່ໄປ".*

ອີຊາກເຄີຍເຫັນພໍ່ຂອງລາວນະມັດສະການແລະຖວາຍເຄື່ອງບູຊາມາກ່ອນ ອີຊາກບໍ່ເຂົ້າໃຈເປັນຫຍັງພວກເຂົາຈຶ່ງບໍ່ໄດ້ນຳແກະໂຕໜຶ່ງໄປພ້ອມກັບພວກເຂົາເພື່ອຈະຖວາຍເປັນເຄື່ອງບູຊາ, ອັບຣາຮາມຕອບດ້ວຍຄວາມຝືນໃຈວ່າ ພຣະເຈົ້າຈະຊົງຈັດຕຽມລູກແກະໂຕໜຶ່ງເປັນເຄື່ອງບູຊາສຳລັບພຣະອົງເອງ ອັບຣາຮາມຮູ້ວ່າພຣະເຈົ້າຈະບໍ່ເຮັດສັນຍາກ່ຽວກັບອີຊາກແລ້ວກໍບໍ່ຍອມກະທຳໃຫ້ສຳເລັດຕາມພຣະສັນຍານັ້ນ ອີຊາກຈະຕ້ອງມີຊີວິດຢູ່! ແລະເຖິງວ່າອີຊາກຈະຕາຍອັບຣາຮາມກໍຄິດວ່າພຣະເຈົ້າຈະຊົງນຳອີຊາກໃຫ້ກັບມາມີຊີວິດອີກເພື່ອຈະກະທຳໃຫ້ສຳເລັດຕາມພຣະສັນຍາທັງຫຼາຍຂອງພຣະອົງ ນີ້ເປັນການທົດສອບທີ່ຍາກສຳລັບອັບຣາຮາມຢ່າງແນ່ນອນ ແຕ່ເພິ່ນກໍຮູ້ວ່າຈະມີບາງສິ່ງບາງຢ່າງເກີດຂຶ້ນເທິງພູເຂົາເພື່ອຈະຊ່ວຍຊີວິດຂອງອີຊາກໄວ້.

ການເຊື່ອໃນພຣະເຈົ້າເປັນສິ່ງສຳຄັນທີ່ສຸດທີ່ເຮົາສາມາດຈະກະທຳໄດ້ ພຽງການຟັງພຣະຄຳຂອງພຣະເຈົ້າບໍ່ສາມາດທີ່ຈະຊ່ວຍໃຫ້ເຮົາລອດພົ້ນຈາກການຄວບຄຸມຂອງຊາຕານໄດ້ ສົມມຸດວ່າເຈົ້າເຈັບປ່ວຍແລະໄປຫາໝໍຊຶ່ງໝໍກໍໄດ້ສັ່ງຈ່າຍຢາໃຫ້ເຈົ້າ, ເຈົ້າ



ດັ່ງນັ້ນຢາໂຄບຈຶ່ງຕ້ອງປະຖິ້ມບ້ານເຮືອນພໍ່ແມ່ແລະອອກເດີນທາງພະເນຈອນກັບໄປຍັງແຜ່ນດິນທີ່ປູ່ໄດ້ເຄີຍອາໄສຢູ່.

*ປະຖົມມະກາວນ28:11-12 ລາວມາຮອດບ່ອນໜຶ່ງພໍດີຄໍ່າຈຶ່ງພັກແຮມຄືນຢູ່ທີ່ນັ້ນ. ລາວລົ້ມລົງນອນໂດຍໃຊ້ກ້ອນຫີນໜູນຕາງໝອນ. ເມື່ອຫຼັບໄປລາວໄດ້ຝັນເຫັນຂັ້ນໄດແຕ່ດິນຈົນຈຸຟ້າແລະມີບັນດາເທວະດາຍ່າງຂຶ້ນຍ່າງລົງຕາມຂັ້ນໄດນັ້ນ.*



ຢາໂຄບໃຊ້ເວລາເດີນທາງຫຼາຍອາທິດ ຄືນວັນໜຶ່ງຂະນະທີ່ຢາໂຄບກຳລັງນອນຫຼັບຢູ່ເທິງພູເຂົາ ພຣະເຈົ້າໄດ້ຊົງບັນດານໃຫ້ຢາໂຄບຝັນ ໂດຍໃນຄວາມຝັນນັ້ນ ພຣະເຈົ້າຊົງສະແດງໃຫ້ຢາໂຄບເຫັນວ່າ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະສະເດັດມານັ້ນຈະເຊື່ອມຊ່ອງວ່າງລະຫວ່າງມະນຸດກັບພຣະເຈົ້າ ພຣະເຈົ້າຊົງເປັນຜູ້ດຽວເທົ່ານັ້ນທີ່ສາມາດຈະກະທຳໃຫ້ເກີດຫົນທາງທີ່ມະນຸດຈະມາເຖິງພຣະອົງໄດ້ ມະນຸດຈະພະຍາຍາມເຮັດຄວາມດີຫຼາຍຈັກເທົ່າໃດກໍບໍ່ສາ

ພຣະສັນຍາທັງຫຼາຍຂອງພຣະເຈົ້າກ່ຽວກັບ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ຈະຕ້ອງຜ່ານມາທາງເອຊາວ ເພາະເພິ່ນເປັນລູກກົກ ຢ່າງໃດກໍຕາມເອຊາວບໍ່ສົນໃຈໃນພຣະສັນຍາຂອງພຣະເຈົ້າ ເອຊາວບໍ່ໄດ້ໄວ້ວາງໃຈພຣະເຈົ້າເໝືອນຢ່າງທີ່ອັບຣາຮາມແລະອີຊາກໄດ້ເຄີຍໄວ້ວາງໃຈມາແລ້ວ ເອຊາວມີລັກສະນະຄ້າຍກັບກາອິນ ເອຊາວວາງແບບແຜນຊີວິດຂອງເພິ່ນຕາມຄວາມຄິດຂອງຕົນເອງແລະກະທຳຕາມໃຈປາຖະໜາຂອງຕົນເອງ ເອຊາວບໍ່ເຫັນວ່າຕົນເອງເປັນຄົນບາບແລະຈຳເປັນຈະຕ້ອງເປັນທີ່ຍອມຮັບຂອງພຣະເຈົ້າ ຂະນະທີ່ເຮົາອ່ານເລື່ອງລາວກ່ຽວກັບເອຊາວເຮົາກໍພົບວ່າເອຊາວມີຊີວິດຢູ່ເພື່ອສິ່ງຂອງໃນໂລກນີ້ ສິ່ງຕ່າງໆເຫຼົ່ານີ້ມີຄວາມສຳຄັນຕໍ່ເອຊາວຫຼາຍກວ່າສິ່ງທີ່ພຣະເຈົ້າຊົງປາຖະໜາທີ່ຈະປະທານແກ່ເພິ່ນ.

ຢາໂຄບດຳເນີນຊີວິດຢ່າງງຽບໆໃນເຕັນພັກອາໄສຂອງເພິ່ນແລະລ້ຽງຝູງແກະແລະງົວຄວາຍ ຢາໂຄບເຊື່ອພຣະເຈົ້າເຊັ່ນດຽວກັບອັບຣາຮາມແລະອີຊາກ ເພິ່ນໃສ່ໃຈກັບພຣະເຈົ້າແລະພຣະສັນຍາຕ່າງໆຂອງພຣະອົງເປັນຢ່າງຍິ່ງ ເຮົາທຸກຄົນຄວນຈະຖາມຕົນເອງວ່າ "ເຮົາກຳລັງຫັນອອກຈາກຄຳສອນຂອງພຣະເຈົ້າແລະປະພຶດຕາມທາງຂອງຕົນເອງເໝືອນຢ່າງກາອິນແລະເອຊາວຫຼືບໍ? ຫຼືວ່າເຮົາເປັນເໝືອນຢ່າງ ອາເບັນ,ໂນອາ,ອັບຣາຮາມ,ອີຊາກ ແລະຢາໂຄບທີ່ຍອມຮັບຄວາມຜິດບາບຂອງຕົນເອງແລະໄວ້ວາງໃຈໃນພຣະເຈົ້າວ່າຈະຊົງຈັດຕຽມ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ມາຊ່ວຍເຮົາໃຫ້ລອດພົ້ນຈາກຄວາມຜິດບາບເຫຼົ່ານີ້.

ຄວາມແຕກຕ່າງຢ່າງຫຼວງຫຼາຍລະຫວ່າງເອຊາວກັບຢາໂຄບໄດ້ເພີ່ມຂຶ້ນເລື້ອຍໆ ຈົນເຖິງຈຸດທີ່ເອຊາວຂູ່ຈະຂ້າຢາໂຄບເສຍ



ຈະດີຂຶ້ນບໍ? ຖ້າພຽງແຕ່ຟັງໝໍບອກເຈົ້າວ່າ ຢານີ້ຈະຊ່ວຍເຈົ້າໄດ້ຢ່າງໃດ? ກໍຄົງຈະບໍ່ດີຢ່າງແນ່ນອນ ເຈົ້າຈຳເປັນຕ້ອງກິນຢາຈຶ່ງຈະມີອາການດີຂຶ້ນແລະຮູ້ສຶກດີຂຶ້ນໄດ້ ໃນລັກສະນະດຽວກັນການຟັງພຣະຄຳຂອງພຣະເຈົ້າພຽງຢ່າງດຽວກໍບໍ່ອາດທີ່ຈະຊ່ວຍເຮົາໄດ້ພຣະເຈົ້າຈະຊົງຍອມຮັບຜູ້ທີ່ເຊື່ອພຣະອົງເໝືອນຢ່າງອັບຣາຮາມເທົ່ານັ້ນ.

*ປະຖົມກາລ 22:9,10 ເມື່ອເຂົາເດີນທາງມາຮອດບ່ອນທີ່ພຣະຜູ້ເປັນເຈົ້າໄດ້ບອກໄວ້ ແລ້ວອັບຣາຮາມໄດ້ສ້າງແທ່ນບູຊາຂຶ້ນແລະຈັບເອົາຟືນວາງໄວ້ເທິງແທ່ນນັ້ນ. ເພິ່ນມັດລູກຊາຍຂອງຕົນວາງໄວ້ທີ່ກອງຟືນເທິງແທ່ນບູຊາ ແລ້ວເພິ່ນກໍ່ຈັບເອົາມີດຕຽມຈະລົງມືຂ້າ.*



©

ອີຊາກເປັນເດັກໜຸ່ມທີ່ສາມາດຈະຕໍ່ສູ້ໄດ້ ແຕ່ກັບບໍ່ມີການຕໍ່ສູ້ດີ້ນຮົນໃດໆເລີຍອີຊາກຍອມຢູ່ໃຕ້ອຳນາດພໍ່ຂອງລາວດ້ວຍຄວາມເຕັມໃຈ ເມື່ອອີຊາກຖືກມັດແລ້ວ ອີຊາກກໍບໍ່ມີທາງທີ່ຈະໜີໄດ້ອີກແລ້ວອີຊາກຢູ່ໃນສະພາບທີ່ຈະຊ່ວຍຕົນເອງບໍ່ໄດ້ ແລະບໍ່ສາມາດຈະ

ເອົາຕົວຫຼຸດໄດ້ເລີຍ ເມື່ອພຣະເຈົ້າຊົງປິດປະຕູເຮືອຂອງໂນອາແລ້ວກໍບໍ່ມີທາງທີ່ຄົນຊຶ່ງຢູ່ນອກເຮືອຈະໜີລອດໄດ້ ໃນລັກສະນະດຽວກັນເມື່ອພຣະເຈົ້າສົ່ງໄຟໃຫ້ຕົກລົງມານັ້ນ ຊາວເມືອງໂຊໂດມແລະໂກໂມຣາກໍບໍ່ມີທາງທີ່ຈະໜີໄດ້ເຊັ່ນກັນ.

ພຣະເຈົ້າຊົງຊ່ວຍໂນອາແລະຄອບຄົວໃຫ້ລອດພົ້ນຈາກນ້ຳຖ້ວມ ພຣະເຈົ້າຊົງຊ່ວຍໂລດແລະລູກສາວທັງສອງໃຫ້ລອດພົ້ນຈາກໄຟທີ່ທຳລາຍລ້າງເມືອງໂຊໂດມແລະໂກໂມຣາ ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດຈະຊ່ວຍອີຊາກໃຫ້ລອດພົ້ນຈາກການຖືກຂ້າໄດ້ ແລ້ວມີວິທີການໃດທີ່ເຮົາຈະສາມາດຊ່ວຍຕົນເອງໃຫ້ລອດພົ້ນຈາກການລົງໂທດນິລັນດອນໃນບຶງໄຟໄດ້? ບໍ່ມີເລີຍ! ເຮົາບໍ່ສາມາດຊ່ວຍຕົນເອງໄດ້ເລີຍ ບໍ່ມີໃຜສາມາດໜີພົ້ນຈາກການພິພາກສາຂອງພຣະເຈົ້າໄດ້ ມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດຈະຈັດຕຽມຫົນທາງສຳຫຼັບມະນຸດທີ່ຈະໄດ້ຮັບການຍອມຮັບຈາກພຣະເຈົ້າແລະຫຼີກໜີຈາກບຶງໄຟໄດ້.

*ປະຖົມມະການ 22:10-13 ແລ້ວເພິ່ນກໍ່ຈັບເອົາມີດຕຽມຈະລົງມືຂ້າແຕ່ໃນທັນໃດນັ້ນທູດຂອງພຣະຜູ້ເປັນເຈົ້າໄດ້ເອີ້ນມາແຕ່ສະຫວັນວ່າ "ອັບຣາຮາມ ອັບຣາຮາມເອີຍ" ເພິ່ນຈຶ່ງຕອບວ່າ "ເຈົ້າ ຂ້າພະອົງກຳລັງຟັງຢູ່" ທູດຂອງພຣະເຈົ້າກ່າວຕໍ່ໄປວ່າ "ຢ່າທຳຮ້າຍ ຫຼື ເຮັດຫຍັງແກ່ເດັກຊາຍນີ້. ບັດນີ້ເຮົາຮູ້ແລ້ວວ່າເຈົ້າເຊື່ອຟັງ ແລະຢຳເກງພຣະເຈົ້າຢູ່ສະເໝີ; ດ້ວຍວ່າເຈົ້າບໍ່ໄດ້ຫວງລູກຊາຍເຈົ້າຄົນດຽວຈາກພຣະອົງ" ອັບຣາຮາມແນມໄປຮອບໆຕົວແລະເຫັນແກະເຖິກໂຕໜຶ່ງ ເຊິ່ງເຂົາຂອງມັນຄາພຸ່ມໄມ້ ເພິ່ນຈຶ່ງໄປອຸ້ມເອົາມັນມາຂ້າຖວາຍແກ່ພຣະຜູ້ເປັນເຈົ້າແທນລູກຊາຍຂອງຕົນ.*



# ບົດທີ 10

# ຢາໂຄບແລະໂຢຊວຍ

ເລື່ອງລາວທີ່ເຮົາຈະມາສຶກສາກັນໃນບົດຮຽນນີ້ເລີ່ມຕົ້ນຂຶ້ນໃນແຜ່ນດິນການາອານ ແຕ່ຈະຈົບລົງທີ່ເຊື້ອສາຍຂອງອັບຣາຮາມໄປອາໄສຢູ່ໃນປະເທດອີຢິບ ພາຍຫຼັງເຫດການທີ່ພຣະເຈົ້າຊົງໄວ້ຊີວິດອີຊາກ ໄດ້ຜ່ານພົ້ນໄປໄລຍະເວລາໜຶ່ງແລ້ວ ນາງຊາຣາເມຍຂອງອັບຣາຮາມ ກໍເສຍຊີວິດລົງ ພຣະເຈົ້າຊົງສັນຍາໄວ້ວ່າອີຊາກຈະເປັນຕົ້ນກຳເນີດຂອງພົງພັນເປັນຈຳນວນຫຼາຍ ຊຶ່ງລວມໄປເຖິງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ດ້ວຍ ອັບຣາຮາມໄດ້ສົ່ງຄົນຮັບໃຊ້ໃຫ້ໄປຫາເມຍຄົນໜຶ່ງຈາກບັນດາຍາດພີ່ນ້ອງຂອງເພິ່ນມາໃຫ້ແກ່ອີຊາກ ຄົນຮັບໃຊ້ຈຶ່ງໄດ້ນຳນາງເລເບກາ ກັບມາດ້ວຍ ໃນບໍ່ຊ້າ ອີຊາກກັບນາງເລເບກາກໍໄດ້ແຕ່ງງານກັນແລະມີລູກຊາຍນຳກັນ 2 ຄົນຄື: ເອຊາວແລະຢາໂຄບ.

*ປະຖົມມະການ 25:27 ເດັກນ້ອຍທັງສອງເຕີບໃຫຍ່ຂຶ້ນມາແລະເອຊາວກາຍເປັນນາຍພານທີ່ເກັ່ງກ້າທັງຊຳນິຊຳນານແລະມັກໃຊ້ຊີວິດຢູ່ນອກບ້ານ ສ່ວນຢາໂຄບເປັນຄົນສຸຂຸມແລະມັກຢູ່ແຕ່ໃນເຮືອນ.*

ເອຊາວເປັນນາຍພານທີ່ມີຄວາມຊຳນານ ເພິ່ນໃຊ້ເວລາໃນການແກະຮອຍແລະຕາມໄປຂ້າສັດປ່າໃນທົ່ງ ຕາມທຳມະດາແລ້ວ

ພຣະເຈົ້າຊົງຊ່ວຍຊີວິດອີຊາກໄວ້! ສ່ວນອັບຣາຮາມກໍຜ່ານການທົດສອບໃນເທື່ອນີ້ໄດ້! ພຣະເຈົ້າຊົງບອກໃຫ້ອັບຣາຮາມຢ່າຂ້າລູກຊາຍຂອງຕົນເອງ ເຖິງແມ່ນວ່າອັບຣາຮາມຈະຮັກອີຊາກຫຼາຍກວ່າສິ່ງອື່ນໃດໃນແຜ່ນດິນໂລກ ແຕ່ເພິ່ນກໍຍັງຮັກພຣະເຈົ້າຫຼາຍຍິ່ງກວ່ານັ້ນອີກ ພຣະເຈົ້າຈຶ່ງຊົງຈັດຕຽມສັດໂຕໜຶ່ງໄວ້ສຳລັບເປັນເຄື່ອງບູຊາ ພຣະເຈົ້າໄດ້ຊົງບັນດານໃຫ້ມີແກະຜູ້ໂຕໜຶ່ງຕິດຢູ່ໃນພຸ່ມໄມ້ໂດຍທີ່ເຂົາຂອງມັນຄາຢູ່ກັບພຸ່ມໄມ້ນັ້ນ ອັບຣາຮາມຈຶ່ງຂ້າແລະເຜົາແກະໂຕຜູ້ນັ້ນເປັນເຄື່ອງບູຊາຖວາຍແດ່ພຣະເຈົ້າ ອີຊາກໄດ້ຮັບອິດສະຫຼະພາບເພາະວ່າພຣະເຈົ້າຊົງຈັດຕຽມ “ຕົວແທນ” ທີ່ຈະມາຕາຍແທນລາວແລ້ວ ແກະໂຕຜູ້ໂຕນັ້ນເອງທີ່ເປັນຕົວແທນຂອງອີຊາກ.

*ປະຖົມມະການ 22:14-19 ອັບຣາຮາມໃສ່ຊື່ບ່ອນນັ້ນວ່າ “ພຣະຜູ້ເປັນເຈົ້າຈັດຫາໃຫ້” ແລະຈົນເຖິງທຸກມື້ນີ້ຊາວເມືອງກໍ່ຍັງເວົ້າຕໍ່ໆກັນມາວ່າ “ເທິງພູຂອງພຣະຜູ້ເປັນເຈົ້າຜູ້ຈັດຫາໃຫ້” ແລ້ວຈາກສະຫວັນ ທູດຂອງພຣະຜູ້ເປັນເຈົ້າກໍ່ໄດ້ເອີ້ນອັບຣາຮາມເປັນເທື່ອທີ່ສອງວ່າ “ເຮົາຂໍສາບານວ່າ ໃນນາມຂອງເຮົາ ຄື ພຣະຜູ້ເປັນເຈົ້າກຳລັງຢູ່ທີ່ນີ້ວ່າເຮົາຈະອວຍໄຊໃຫ້ພອນເຈົ້າຢ່າງຫຼວງຫຼາຍ. ເພາະເຈົ້າໄດ້ເຮັດຕາມສິ່ງທີ່ເຮົາບອກ ແລະບໍ່ໄດ້ຫວງລູກຊາຍຄົນດຽວຂອງເຈົ້າໄວ້ເຮົາຂໍສັນຍາວ່າ ຈະໃຫ້ເຈົ້າມີເຊື້ອສາຍຢ່າງຫຼວງຫຼາຍ ດັ່ງດວງດາວໃນທ້ອງຟ້າ ຫຼື ດັ່ງເມັດດິນຊາຍທີ່ແຄມທະເລ ເຊື້ອສາຍຂອງເຈົ້າຈະຊະນະສັດຕູທັງປວງ ຊົນຊາດທັງຫຼາຍໃນໂລກຈະຮ້ອງຂໍເຮົາໃຫ້ເຮົາອວຍພອນພວກເຂົາ ດັ່ງທີ່ເຮົາໄດ້ອວຍໄຊໃຫ້ພອນເຊື້ອສາຍຂອງເຈົ້າເຮົາຈະເຮັດສິ່ງທັງໝົດນີ້ເພາະເຈົ້າເຊື່ອຟັງຄຳສັ່ງຂອງເຮົາ ອັບຣາຮາມກັບຄືນມາຫາຄົນໃຊ້ທັງສອງຂອງຕົນ ແລະພາກັນກັບເມືອເມືອງເບເອນເຊບາ ບ່ອນທີ່ຕົນອາໄສຢູ່.*

ພຣະເຈົ້າຊົງຈັດຕຽມແກະໂຕຜູ້ໂຕໜຶ່ງໃຫ້ມາຕາຍແທນອີຊາກ ອັບຣາຮາມເຊື່ອວ່າພຣະເຈົ້າຈະຊົງຈັດຕຽມ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ເພື່ອຈະຊົງມີໄຊຊະນະເໜືອຄວາມຊົ່ວຮ້າຍເຊັ່ນດຽວກັບທີ່ພຣະອົງໄດ້ຈັດຕຽມແກະໂຕຜູ້ໂຕນັ້ນດ້ວຍ ໃນບົດຮຽນສຸດທ້າຍຂອງເຮົາ ເຮົາຈະໄດ້ເຫັນບາງສິ່ງທີ່ໜ້າຕື່ນເຕັ້ນຍິ່ງກວ່ານີ້ຊຶ່ງຈະເກີດຂຶ້ນເທິງພູເຂົາແຫ່ງດຽວກັນນີ້ເອງ ອີຊາກຢູ່ພາຍໃຕ້ພຣະບັນຊາໂດຍກົງຂອງພຣະເຈົ້າໃຫ້ຕ້ອງຕາຍສັນໃດມະນຸດຊາດທຸກຄົນກໍຢູ່ພາຍໃຕ້ການພິພາກສາໃຫ້ຕາຍສັນນັ້ນ ອີຊາກບໍ່ສາມາດຈະຊ່ວຍຊີວິດຕົນເອງໃຫ້ລອດພົ້ນໄດ້ ແຕ່ອັບຣາຮາມໄວ້ວາງໃຈໃນພຣະເຈົ້າໂດຍເຊື່ອວ່າ ພຣະເຈົ້າຂອງເພິ່ນທີ່ຊົງປ່ຽມລົ້ນດ້ວຍຄວາມຮັກຈະກະທຳໃຫ້ເກີດການປ່ຽນແປງດ້ວຍວິທີໃດວິທີໜຶ່ງ ແລ້ວພຣະເຈົ້າກໍໄດ້ຊົງຢື່ນພຣະຫັດຂອງພຣະອົງເຂົ້າມາແກ້ໄຂສະຖານະການໃຫ້ດີຂຶ້ນແທ້ໆ ພຣະອົງຊົງຈັດຕຽມວິທີທີ່ຈະລອດພົ້ນອອກມາໄດ້ໂດຍການໃຊ້ຕົວແທນຄືການໃຫ້ຜູ້ທີ່ບໍ່ມີຄວາມຜິດມາຕາຍແທນຄົນທີ່ມີຄວາມຜິດບາບນັ້ນ.

ອາເບັນໄດ້ຖວາຍເຄື່ອງບູຊາໃຫ້ມາຕາຍແທນຕົນເອງສັນໃດ ແກະໂຕຜູ້ກໍມາຕາຍແທນອີຊາກສັນນັ້ນ ແລະພຣະເຈົ້າຊົງຍອມຮັບເຄື່ອງບູຊາຂອງອາເບັນສັນໃດ ພຣະເຈົ້າກໍຊົງຍອມຮັບແກະໂຕຜູ້ທີ່ອັບຣາຮາມຖວາຍເປັນເຄື່ອງບູຊາເພື່ອຕາຍແທນອີຊາກສັນນັ້ນ ເຮົາບໍ່ສາມາດຈິນຕະນາການເຖິງການທົດສອບທີ່ຍາກລຳບາກຢ່າງທີ່ອັບຣາຮາມຕ້ອງປະເຊີນຢູ່ໄດ້ ຢ່າງໃດກໍຕາມເຮົາສາມາດຈະເຫັນໄດ້ວ່າພຣະເຈົ້າຊົງປະທານບຳເໜັດແກ່ອັບຣາຮາມສຳລັບຄວາມເຊື່ອຂອງເພິ່ນ ພຣະອົງຊົງຈັດຕຽມຫົນທາງທີ່ຈະຊ່ວຍໃຫ້ອີ



ຊາກລອດຊີວິດໄດ້. ດ້ວຍເຫດນີ້ເຊື້ອສາຍແຫ່ງບັນພະບຸລຸດຂອງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຊົງສັນຍາກໍຍັງຄົງຖືກຮັກສາໄວ້ຢ່າງດີ ເຮົາສາມາດຈະໄວ້ວາງໃຈພຣະເຈົ້າໄດ້ຢ່າງເຕັມທີ່ວ່າພຣະອົງຈະຊົງກະທຳໃຫ້ສຳເລັດຕາມພຣະສັນຍາທັງຫຼາຍຂອງພຣະອົງ ແມ່ນແລ້ວພຣະເຈົ້າຈຶ່ງສົມຄວນທີ່ຈະໄດ້ຮັບຄວາມໄວ້ວາງໃຈຈາກເຮົາທັງຫຼາຍຈາກທຸກຄົນ!.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 9 ໃນໜ້າ 79 *